• ໂຮມເລື່ອງສັ້ນ

# ສີກຊະເລີຍ



ທັບປັດ - ສັກດາ

ໂຮມເລື່ອງສັ້ນ...

# ສັກ ຊະເລີຍ


ໂດຍ ~

- ດາລະ
- ໄຊທິນ ເມືອງພວນ
- ສົມສຸກ ສຸກີສະຫວັດ
- ແຄນ ຄະມະທຸດ
- ບຸດສີ ຫຸຍ ອົງສ້າວານ



ສຳນັກພິມແລະຈຳໜ່າຍປຶ້ມ ສປປລ

1984

# ສາລະບານ

-==0==-


| | | | | |
|---|---|---|---|---|
| - ສັກຈະເລີຍ | ໂດຍ | ກາລະ | ໜ້າ | 1 |
| - ຍາມດອກຈອງບານ | " | ໄທຫີນເມືອງພວນ | " | 21 |
| - ໄດ້ແນວພໍ່ | " | ສິນສຸກ ສຸກສະຫວັດ | " | 38 |
| - ຄວາມເວົ້າຂອງຄຳຮູ້ | " | ແດນຄະນະທູດ | " | 53 |
| - ເພື່ອນຮັກຄູ່ຊີວິດ | " | ບຸດສີທຽນວົງສັງວານ | " | 63 |

ກວດແກ້ໂດຍ ສີຫາ ເພັງແພງເມືອງ

# ສັກຊະເລີຍ

## ໂດຍ - ກາລະ

* ວັນທີ ໒໕ ມັງກອນ ໑໙໗໒.

ເຊົ້ານີ້ອາກາດໜາວເຢັນ, ນ້ຳໝອກກຸ້ມໄປທົ່ວໂຕເມືອງຫລວງພະບາງ. ຂ້ອຍຕື່ນຂຶ້ນແຕ່ສີ່ໂມງເຊົ້າ, ແອບເນື້ອ ແອບກາຍໃຫ້ເລືອດລົມແລ່ນ ພ້ອມທັງຫາຍໃຈເອົາອາກາດບໍລິສຸດຍາມເຊົ້າ ດັ່ງທີ່ເຄີຍປະຕິບັດມາທຸກໆມື້ ແລ້ວຂ້ອຍກໍດັງໄຟໜຶ້ງເຂົ້າເຕົາໜຶ່ງ, ອີກເຕົາໜຶ່ງແມ່ນຕັ້ງໝໍ້ຕົ້ມນ້ຳເຂົ້າປຸ້ນຕາມທີ່ເຄີຍເຮັດມາ, ຫລັງຈາກນັ້ນກໍເອົາໝາກປີ, ໝາກ ຮູງ, ຜັກບົ້ງມາລ້າງ ຊູດ ແລະ ຊອຍ, ປະມານ ໕ ໂມງປາຍ, ແມນາຂ້ອຍລຸກຂຶ້ນມາ ແລ້ວກໍຈັດແຈງໄປຕະຫລາດ.

ປີນີ້ ແມ່ນປີທີ ໓ ແລ້ວທີ່ຂ້ອຍຮຽນຄ້າງຢູ່ຫ້ອງ ປ.໖ ອາຍຸຂ້ອຍ ຍ່າງເຂົ້າສິບຫ້າປີ ພວມຈະເປັນບ່າວນ້ອຍ. ສອງປີຫລັງນັ້ນ ຂ້ອຍເສັງ ເຂົ້າໂຮງຮຽນລີເຊ (ມັດທະຍົມ) ບໍ່ໄດ້ ຊຶ່ງໝົດທັງພາກເໜືອຄື ແຂວງຫຼວງພະບາງ, ໄຊຍະບູລີຂຶ້ນເມືອຮອດຫວຍຊາຍຕ້ອງມາເສັງເຂົ້າມັດທະ ຍົມບ່ອນດຽວນີ້. ນັກຮຽນທີ່ມາເສັງເຂົ້າແຕ່ລະປີມີເກືອບພັນຄົນ, ແຕ່ຈຳນວນນັກຮຽນທີ່ຈະເອົາພຽງ ໑໐໐ ຄົນເຖິງ ໑໕໐ ຄົນຢ່າງຫລາຍ. ຜູ້ໃດເສັງເຂົ້າລີເຊໄດ້ກໍ່ເກືອບໆສຳເທວະດາພຸ້ນລະ. ບັກແປງ ໝູ່ຂອງຂ້ອຍ ເສັງ

ມ.໑/໒ ໄດ້ປີກາຍ ມັນເວົ້າໃຫ້ຂ້ອຍຟັງວ່າ: "ເອື້ອຍມັນວ່າຂ້ອຍຕຶກ ພາສາຝະລັ່ງ, ຄັນຖ້າຂ້ອຍໄປຈ່າງຮຽນພາສາຝະລັ່ງກັບເອື້ອຍມັນຊຶ່ງເປັນ ຄູສອນຢູ່ສີເຈ ປີໜ້າຮັບຮອງວ່າໄດ້ໂລດ, ມີຄົນມາຮຽນນຳລາວຕັ້ງ ໕໐ ກວ່າຄົນ". ຂ້ອຍເອງກໍຢາກຈ້າງຮຽນໃຈຊິຂາດ ແຕ່ບໍ່ມີເງິນ ຊຶ່ງ ຄວາມຈິງຂ້ອຍຮຽນໜັງສືເກັ່ງກວ່າບັກແປງຕັ້ງຫລາຍຕໍ່, ແຕ່ຄັນເວົ້າພາສາ ຝະລັ່ງ ຂ້ອຍພັດອ່ອນແຕນກວ່າມັນ, ມັນເອງກໍພະຍາຍາມອະທິບາຍໃຫ້ ຂ້ອຍຟັງເລື້ອຍໆ. ມັນເວົ້າ "ອານາລີເຊີ, ເອປີແຕັດ, ນິງ, ໄປລນິງ" , ຂ້ອຍໄດ້ແຕ່ຟັງ ແຕ່ບໍ່ເຂົ້າໃຈຈັກໜ້ອຍວ່າແມ່ນຫຍັງ, ຍິ່ງອະທິບາຍຍິ່ງມືດແປດດ້ານ, ແຕ່ຂ້ອຍກໍບໍ່ເຄີຍຫຍໍ້ທໍ້. ປີນີ້ຂ້ອຍກໍຮູ້ຫລາຍເຕີບແລ້ວ, ມີຫວັງເສັງໄດ້ຢູ່ຫລາຍເປີເຊັນ, ຂ້ອຍບໍ່ມີເງິນຊິຈ້າງຮຽນ ເພາະຕາມປົກ ກະຕິແມ່ນາຂ້ອຍກໍຊັງຂ້ອຍຢູ່ແລ້ວວ່າ ຂ້ອຍຄ້ານຮຽນໜັງສື. ສອງປີແລ້ວກໍເສັງບໍ່ໄດ້, ກິນຊ້ຳພັດກິນຫລາຍ, ເພິ່ນຢາກໃຫ້ຂ້ອຍອອກໂຮງຮຽນໄປເຮັດນາ ແລະ ເອົາຟືນມາຂາຍ ເພື່ອຊ່ວຍເພິ່ນລ້ຽງນ້ອງຂ້ອຍອີກຄົນທີ່ແມ່ຂ້ອຍຕາຍປະໄປ. ສ່ວນເອື້ອຍຂ້ອຍ ຫລັງຈາກແມ່ຕາຍໄດ້ສາມເດືອນ ເສັງຈົບມັດທະຍົມແລ້ວ ລາວຈຳເປັນຕ້ອງອອກໂຮງຮຽນ ເພາະບໍ່ມີເງິນຊິຮຽນຕໍ່ອີກ ລາວໄປຮຽນວິຊາສະເພາະແທກດິນຢູ່ທີ່ວຽງຈັນ. ພໍ່ຂ້ອຍ, ຫລັງຈາກດຳນາແລ້ວປີກາຍ ລາວກໍເຂົ້າໄປເຮັດການເປັນຄົນຄົວກິນຢູ່ໂຮງໝໍ ທະຫານດ້ວຍຄວາມຈຳເປັນ, ຍ້ອນວ່າຖ້າບໍ່ໄປເຮັດການກໍຕ້ອງຖືກຈັບໄປເປັນ ທະຫານ, ແນ່ນອນພວກຂ້ອຍຕ້ອງໄດ້ຮັບຄວາມທຸກທໍລະມານຂຶ້ນຫລາຍ ກວ່າເກົ່າ ຖ້າລາວຖືກໄປເປັນທະຫານ.

ທຸກໆມື້ທີ່ໄປໂຮງຮຽນ ຂ້ອຍຕ້ອງຍ່າງໄປທາງລັດ ບໍ່ໄດ້ໄປຕາມ ທາງຫລວງໃຫຍ່, ເມື່ອໄປຮອດໂຮງຮຽນ ແລະ ກັບມາຮອດບ້ານແລ້ວຈຶ່ງຄ່ອຍລົ່ງອົກລົ່ງໃຈ. ຕອນກາງຄືນກໍຕ້ອງຢູ່ກັບເຮືອນ, ບໍ່ໄດ້ອອກໄປຫລິ້ນ ໃສ, ເພາະໄລຍະນັ້ນ ເພິ່ນປະກາດກົດໄອຍະການເສິກ ແລະ ພາວະສຸກເສີນ,

ເພາະອ້າຍນ້ອງກອງທັບປົດປ່ອຍໄດ້ຕີມາຮອດພູຫລັກ ເໜືອເມືອງຫລວງພະບາງປະມານ ໓໔ ກິໂລແມັດ. ຖ້າໄປຢືນຢູ່ເທິງພູສີ ເອົາກ້ອງສ່ອງເບິ່ງກໍສາມາດເຫັນໄດ້ດີ, ສຽງລູກແຕກ ສຽງປືນ ແລະ ບົມຈາກຍົນ ຈະໄດ້ຍິນ ແລະ ໄດ້ເຫັນກຸ່ມຄວັນດຳ, ຂາວ, ຄ່ຳມາກໍຈະເຫັນລູກຈອງແລະຍົນສະປຸກກີຂຶ້ນໄປຍິງປືນຕາມຈຸດຕ່າງໆ ບາງຄືນມັນກໍຂຶ້ນລົງຈົນຕະຫລອດແຈ້ງກໍມີ. ພວກທະຫານອາເຊ (ທະຫານຮັບຈ້າງຂອງອາເມລິກາໂດຍກົງ ) ອອກຈັບຄົນໄປເປັນທະຫານຕາມຄວາມສາມາດຂອງໃຜລາວ ຖ້າຈັບໄດ້ ພໍ່ກອງຮ້ອຍກໍຈະໄດ້ເປັນຜູ້ບັງຄັບກອງຮ້ອຍ ກອງພັນ...ບໍ່ວ່າຜູ້ເຖົ້າຜູ້ ໜຸ່ມນັກຮຽນ ແລະ ເດັກນ້ອຍສ່ຳຂ້ອຍ, ຂ້ອຍໄດ້ຍິນວ່າຖືກເອົາຈັບໄປ ໝົດ, ບາງບ່ອນຢູ່ຕາມບ້ານນອກ ຖ້າໃຜມີເງິນຫລາຍຖືກເອົາຈັບກໍເອົາເງິນ ໄປຈ້າງຜູ້ອື່ນມາເປັນແທນກໍມີ ຖ້າຜູ້ບໍ່ມີເງິນກໍຕ້ອງຍອມເປັນ ຫລືບໍ່ກໍໜີໄປ ຢູ່ໄຮ່ເອົາປືນແກັບປືນເພີງຕ້ານຄືນພວກເຂົາກໍມີ, ຂ້ອຍເອງເຊື່ອແດ່ ບໍ່ເຊື່ອແດ່ ແຕ່ທີ່ແນ່ນອນນັ້ນ ສະພາບການບ້ານເມືອງບໍ່ສະຫງົບທັງສັບສົນວຸ້ນວາຍທີ່ສຸດ ພວກປີລົດຂັບເຕ ໔໘ ແລະ ສາລະວັດທະຫານມີອຳນາດເຕັມທີ່ ຊີ້ເປັນ ຊີ້ຕາຍໃຫ້ກັບທຸກຄົນໄດ້ ທັງໆທີ່ປະກາດກົດໄອຍະການເສິກ, ພວກເຂົາຈ້ຳພົດໄປກິນເຫລົ້າເຕັ້ນລຳຢູ່ຕາມບາຕ່າງໆໄດ້ຕາມເສລີກາຍເວລາທີ່ກຳນົດໄວ້ ເພື່ອຄວາມປອດໄພ ຂ້ອຍບໍ່ອອກໄປນອກໄປມາຕາມໃຈ, ແຕ່ມື້ນີ້ກໍເປັນມື້ທີ່ຂ້ອຍລືມບໍ່ໄດ້ໃນຊີວິດ, ໑ ໂມງປາຍ ແລ້ວຂ້ອຍນຸ່ງເຄື່ອງຮຽນໄປໂຮງຮຽນ ແມ່ນ້າບອກໃຫ້ຂ້ອຍໄປເອົາເຂົ້າປຸ້ນຢູ່ຕະຫລາດເຊົ້າ ບ້ານຂ້ອຍກໍຢູ່ບໍ່ໄກຕະຫລາດປານໃດຍ່າງສາມນາທີກໍຮອດ. ທຸກມື້ເພິ່ນກໍຊື້ ມາພ້ອມ ແຕ່ມື້ນີ້ຂາປະຈຳເພິ່ນບໍ່ທັນມາ ເລີຍບໍ່ທັນໄດ້ຊື້. ກ່ອນຈິໄປເພິ່ນກໍຍັງບໍ່ລືມບອກຂ້ອຍໃຫ້ເອົາບັດປະຈຳຕົວນັກຮຽນໄປພ້ອມ ແລະ ໃຫ້ຮີບໄປ ຮີບມາ. ຂ້ອຍຄິດວ່າແທ້ທີ່ຈິງເພິ່ນກໍຢາກໃຫ້ຂ້ອຍໄປເປັນທະຫານນ້ຳຫູ ນ້ຳຕາເພິ່ນ ທີ່ເພິ່ນເປັນຫ່ວງຂ້ອຍນັ້ນຍ້ອນຢ້ານບໍ່ມີຜູ້ຊ່ວຍໄຖນາ ແລະ ຫາປີ່ນມາ

ລ້ຽງຄອບຄົວຊື່ງດອກ. ຂ້ອຍເອງກໍບໍ່ເຄີຍປະບັດປະຈຳຕົວຈັກເທື່ອ; ກ່ອນຈິອອກນອກເຮືອນ.

ຫລັງຈາກຂ້ອຍໄດ້ເຂົ້າປຸ້ນແລ້ວກໍຟ້າວແລ່ນອອກຈາກຕະຫລາດ ເພາະຢ້ານບໍ່ທັນໂຮງຮຽນ ພໍແຕ່ອອກມາຮອດແຄມຕະຫລາດບ່ອນສີ່ແຍກ ໂຮງໝໍ ຂ້ອຍໄດ້ຍິນສຽງຮ້ອງທີ່ມີອຳນາດ "ຢຸດ!" ດັງໆບາດໜຶ່ງຢູ່ທາງຫຼັງ.ຂ້ອຍຫລຽວໜ້າໄປເບິ່ງເຫັນທະຫານເຄື່ອງລາຍ ແລະ ເຄື່ອງຂຽວພາຍປືນຢືນເປັນກຸ່ມ ໒-໓ ຄົນ, ນັກຮຽນຮຸ່ນອ້າຍຂ້ອຍອີກສາມຄົນ ແລະ ລາວ ເທິງອີກ ໔ ຄົນ, ກະຕ່າ (ຢັ່ງ) ພູ ໔ ໜ່ວຍຢູ່ຂອກຂ້າງ ໃນນັ້ນມີ ແມ່ຍິງມານລູກອີກຜູ້ໜຶ່ງ ແຕ່ລະຄົນລ້ວນແຕ່ມີໃບໜ້າໝົ່ນໝອງ ແລະ ຄາບນ້ຳຕາຕາມໃບໜ້າ. ຂ້ອຍທັງຢ້ານທັງສັ່ນ ແຕ່ກໍພະຍາຍາມສະຫງົບສະຕິ ອາລົມຕາມແຕ່ຈິເຮັດໄດ້, ຍ່າງເຂົ້າໄປຫາຜູ້ທີ່ຮ້ອງໃຫ້ຂ້ອຍຢຸດ ພ້ອມທັງ ຈົກຖົງເສື້ອຂາວທີ່ຂ້ອຍນຸ່ງຢູ່ຖອດເອົາບັດປະຈຳຕົວນັກຮຽນຍື່ນໃຫ້ມັນ ມັນດຶງບັດຈາກມືຂ້ອຍເບິ່ງແລ້ວເບິ່ງໜ້າຂ້ອຍ ແລ້ວເວົ້າທ່າທາງຮ້າຍໃສ່ຂ້ອຍວ່າ

"ກາກ (ບັດ) ອັນນີ້ໃຊ້ບໍ່ໄດ້ແລ້ວ ມຶງເອົາມາເຮັດຫຍັງ ໄປຮ່ວມ ຢູ່ກັບເຂົາພຸ້ນ"

ມັນທັງເວົ້າທັງຊີ້ມືໄປຫາກຸ່ມນັກຮຽນພຸ້ນ ຂ້ອຍຈິຖຽງກໍບໍ່ກ້າ ທັງ ຢາກຮ້າຍທັງຢາກໄຫ້ ຂ້ອຍວ່າແມ່ນາຂ້ອຍຮ້າຍກໍຍັງບໍ່ເທົ່າກັບບັກນາຍ ທະຫານ "ຫຸ່ນກອງທັບແຫ່ງຊາດ" ຜູ້ນີ້ ເພາະບາງເທື່ອຂ້ອຍຍັງຖຽງເພິ່ນຄືນໄດ້ , ແລ້ວມັນກໍຈົກບັດຂອງຂ້ອຍຖິ້ມ ພ້ອມທັງເອົາຕີນຢຽບໄປມາ ຊຶ່ງໃນນັ້ນຍ່ອມມີຮູບຂ້ອຍ ຊື່ພໍ່ ແມ່ ໜ້າທີ່ການງານ ແລະ ຊື່ໂຮງຮຽນອາໄພ ຊຶ່ງ ເປັນໂຮງຮຽນລັດທີ່ບໍ່ມີອິດທິພົນ ແລະ ຊື່ສຽງພໍທີ່ຈະຊ່ວຍຂ້ອຍໄດ້. ຂະນະ ນັ້ນຂ້ອຍເຫັນເອື້ອຍອື່ນຄືນຂ້າງເຮືອນທີ່ວກະຕ່າຂອງກິນຊີກັບບ້ານ ຂ້ອຍ ຮ້ອງໃສ່ລາວວ່າ:

"ເອື້ອຍອື້ນ!" ໄດ້ພຽງສອງຄຳ ທະຫານໝົດທຸກຄົນກໍກົ້ງຕາ ອັນ

ໜ້າຢ້ານມາໃສ່ຂ້ອຍ. ຂ້ອຍມີແຕ່ຍື່ນຕໍ່ເຂົ້າປຸ້ນ ພ້ອມທັງນ້ຳຕາ ອາບໜ້າ ລາວຮັບຕໍ່ຈາກມືຂ້ອຍໄປ ລາວເອງກໍບໍ່ກ້າເວົ້າຫຍັງ. ເວລາຜ່ານໄປເຄິ່ງຊົ່ວໂມງ ຂ້ອຍເຫັນບັກຫົວໜ້າມັນກວດນັກຮຽນຊາຍທີ່ຍ່າງ ແລະ ຂີ່ລົດຖີບໄປໂຮງຮຽນອີກສາມຄົນ ແລ້ວຖືກປ່ອຍໄປ ສ່ວນພວກທີ່ຂີ່ລົດຈັກ ແລະ ລົດໃຫຍ່ໄປໂຮງຮຽນບໍ່ເຫັນມັນບອກໃຫ້ຢຸດ. ຈຳນວນນັກຮຽນສາມຄົນທີ່ ມັນບອກໃຫ້ຢຸດນັ້ນມີເຈົ້າທີລະສັກ ໝູ່ເກົ່າຂ້ອຍປີກາຍ ມັນແມ່ນລູກຂອງ ໂອເດ ເຈົ້າຂຸນເນື້ອ ນາຍທະຫານອາເຊ ທີ່ມາຈາກອາເມລິກາ ເຮືອນກໍ ຢູ່ໃກ້ກັບຂ້ອຍ, ແຕ່ແລ້ວກໍຖືກປ່ອຍໄປ.

ຈາກນັ້ນ ຂ້ອຍກໍຖືກໃຫ້ຂຶ້ນລົດເຊແອນເຊຄັນໜຶ່ງ ຊຶ່ງມີຜ້າໃບຫຸ້ມມິດຊິດມືດທຶບ ພາບທີ່ຂ້ອຍບໍ່ອາດລືມໃນມື້ນັ້ນແມ່ນລາວເທິງແມ່ນານຄືນນັ້ນເວົ້າກັບຊາຍຄົນໜຶ່ງ ໃນຈຳນວນນັ້ນ ດ້ວຍຄວາມຮັກ ນ້ຳຕາ ແລະ ຄວາມອາໄລອາວອນເໝືອນກັບຄົນທີ່ຈະຈາກກັນໄປໂດຍທີ່ຈະບໍ່ມີໂອກາດກັບມາເຫັນໜ້າກັນອີກ ເຖິງຂ້ອຍຈະບໍ່ຮູ້ພາສາຂອງເຂົາເຈົ້າແຕ່ນ້ຳຕາຂອງຂ້ອຍກໍໄຫຼລົງມາອາບໜ້າ ເພາະຈິດໃຈ ແລະ ວິນຍານຂອງຂ້ອຍບໍ່ຕ່າງຫຍັງກັບສາວເທິງຜູ້ນັ້ນ, ເຂົາເຈົ້າສັ່ງລາກັນ ຈັບມືຖືແຂນກັນ ແລ້ວກໍຈົກເອົາເງິນ ຈຳນວນໜ້ອຍໜຶ່ງ ພ້ອມທັງຕໍ່ຢາກູດ ແລະ ໃບສາລີໃຫ້ກັນ ກໍຄືມີຄວາມ ສຸກແລະ ທາຍທວງຫລາຍກວ່າຂ້ອຍ, ຂ້ອຍທັງຄິດຮອດນ້ອງ ແລະ ແມ່ ເຖົ້າທັງຫວັ່ນໃຈໃນວິນາທີ ຊົ່ວໂມງໃນຂ້າງໜ້າ, ຖ້າຂ້ອຍຕາຍໄປ ຂ້ອຍ ບໍ່ອາດໄດ້ສັ່ງໄດ້ລາໃຜເລີຍຈັກຄົນ ນອກຈາກເອື້ອຍອ້ອຍຜູ້ດຽວ,ເມື່ອຂຶ້ນເມືອເທິງລົດ ຂ້ອຍຈຶ່ງຮູ້ວ່າຢູ່ໃນລົດຫັ້ນຄົນກໍເຕັມຍັດຄັດແລ້ວ ແຕ່ພວກຂ້ອຍ ກໍຕ້ອງຍັດກັນເຂົ້າໄປ ຈັກຮ້ອນຈັກໜາວຂ້ອຍບໍ່ຮູ້ແນວເວົ້າ ເຫື່ອຍ້ອຍຈະ ງເຕັມຄີງ ແລະ ໜ້າ, ແຕ່ໃນຫົວໃຈພັດຫິດຫູແຫງແຫວສັ່ນສະທ້ານ ແຕ່ນີ້ຕໍ່ໄປຄືຊິບໍ່ມີໂອກາດໄດ້ເຫັນໜ້າພໍ່ແມ່ເຖົ້າ ແລະ ນ້ອງອີກແລ້ວ ຂ້ອຍ ມີແຕ່ພາວະນາຂໍໃຫ້ເອື້ອຍອ້ອຍໄປຮອດບ້ານໄວໆ.

ປະມານ ໑໕ ນາທີທີ່ລົດແລ່ນມາແລ້ວຈອດກຶກ ພວກຂ້ອຍຖືກບອກ ໃຫ້ລົງຈາກລົດຂ້ອຍຫາຍໃຈໃຫຍ່ເອົາອາກາດຊຸດໜຶ່ງຫລຽວຊ້າຍຫລຽວຂວາສັງເກດພູມປະເທດ ແທ້ຈິງກໍແມ່ນທົ່ງເຖິ່ນຍືນຫລວງພະບາງຫັ້ນ ນຶກວ່າ ໄປກວງໄປໄກ ບ່ອນພວກຂ້ອຍລົງນີ້ຄືນຢູ່ກ່ອນແລ້ວປະມານ ໔໐໐ ຄົນ, ພວກຂ້ອຍຖືກລ້ອມລອບດ້ວຍຮົ້ວໜາມໜາກຈັບເປັນໂຕ້ງຢອງກັນສູງພົ້ນຫົວ,ກະລວງກ້ວາງຍາວປະມານ ໑ ເຮັກຕາ, ມີປະຕູ ແລະ ທໍ່ຍາມ ບ່ອນດຽວ, ທາງນອກບ່ອນພວກຂ້ອຍຢູ່ ມີຮົ້ວໜາມໜາກຈັບກ້ວາງໃຫຍ່ກວ່າ ປະມານ ໑໕-໔໐ ເທົ່າ, ຖ້າບໍ່ມີຮົ້ວໜາມ ແລະ ທະຫານຂ້ອຍກໍສາມາດລອດອອກໄປບ້ານໄດ້ສະບາຍ. ໜ່ອຍໜຶ່ງຂ້ອຍໄດ້ຍິນສຽງຖາມມາແຕ່ບ່ອນຍາມວ່າ:

"ແມ່ນໃຜຊື່ບັກຄຳຫລ້າທີ່ຂຶ້ນລົດມາທາງຢ່າຫັ້ນນ່າ"

ຂ້ອຍຟ້າວແລ່ນໄປກໍເຫັນແມ່ເຖົ້ານັ່ງຈັບກະຕ່າໝາກຢູ່ໃກ້ໆຫັ້ນ, ຈັກຄວາມດີໃຈເສຍໃຈນ້ຳຕາຂ້ອຍໄຫລລົງອີກຕື່ມເທື່ອໜຶ່ງ, ຂ້ອຍຟ້າວ ຖາມວ່າ:

"ເຈົ້າເພິ່ນໄດ້ບໍ່ແມ່?"

ລາວມີແຕ່ແກວ່ງຫົວສະແດງຄວາມເສຍໃຈ.

"ລອງໄປອ້ອນວອນເພິ່ນໃໝ່ດູ" ຂ້ອຍບອກລາວ.

ແມ່ເຖົ້າຂ້ອຍຍ່າງໄປຫາຫົວໜ້າມັນຊຶ່ງຢືນສູບຢາໃກ້ໆຫັ້ນ. ລາວເລີ່ມອ້ອນວອນວ່າ:

"ກອມມັງດັງເອີຍ ອີຕົນຂ້ານ້ອຍແດ່ ຄືເພິ່ນເຫັນຫັ້ນແລ້ວ ໝົດເຮືອນໝົດຊານກໍບໍ່ມີໃຜພໍຕາງຕີນຕາງມືໄດ້ ອາໄສແຕ່ມັນຜູ້ດຽວ ທັງເຮັດນາທັງຮຽນໜັງສື ທັງເອົາຟືນ ພໍ່ມັນກໍໄປເຮັດການແລ້ວ, ນອງມັນ ກໍຍັງເປັນເດັກນ້ອຍຢູ່"

ມັນເວົ້າແຍ້ງຂຶ້ນວ່າ: "ຈັ້ນບັກລີງເດ!" ໝາຍເຖິງນ້ອງຊາຍຜູ້ທີ່ຫັດນ້ອງຍິງຂ້ອຍຄົນທີ່ສອງ. "ສິບປີແລ້ວມັນກໍເຮັດເປັນຢູ່ຕວາ?" ຊຶ່ງທີ ຈິງ

ແມ່ເຖົ້າຂ້ອຍກໍຮູ້ຈັກກອມມັງດັງພູ້ນັ້ນມາກ່ອນ ຖ້າຕອນນັ້ນລາວມີເງິນມານຳຂ້ອຍກໍຄືຊິໄດ້ອອກ. ມັນຢຸດໜ້ອຍໜຶ່ງແລ້ວເວົ້າຕໍ່ວ່າ:

"ເຈົ້າບໍ່ເຫັນຈັ້ນເບາະ ຕຶງໆ ຕາງໆ ຂ້ອນຂ້າງຢູ່ຊູ້ນີ້ ຈັກໜ້ອຍແກວກັບລາວກອມມູນິດມັນຊິມາຈັບເອົາຫົວຄອບຄົວເຈົ້າໄປຂ້າຖິ້ມໝົດລ້າງໄປ...ໄປຊາ ຫຼານຊາຍຜູ້ດຽວສະຫຼະໃຫ້ປະເທດຊາດກໍບໍ່ໄດ້ຈັ້ນເບາະ"

ຂ້ອຍໄດ້ຍິນຕະຫລອດ, ແມ່ເຖົ້າຍ່າງຄໍຕົກມາຫາຂ້ອຍ ຂ້ອຍບໍ່ລະຄວາມພະຍາຍາມ ຂ້ອຍບອກແມ່ເຖົ້າວ່າ:

"ແມ່ເຈົ້າລອງໄປຫາໂອເດຫຼຸພໍ່ຂຸນເນື້ອລອງເບິ່ງດູ ບາງເທື່ອ ເພິ່ນຊ່ອຍໄດ້"

ໃນໃຈຂ້ອຍກໍຄິດວ່າຖ້າວ່າເພິ່ນສາມາດມາເວົ້າໄດ້ຫລືເອົາເງິນມາປະກັນເອົາຂ້ອຍອອກໄດ້ ຂ້ອຍຈະຍອມໄປຢູ່ນຳເພິ່ນ ແລ້ວແຕ່ເພິ່ນຕ້ອງການຈະໃຊ້ ພຽງແຕ່ຂໍໃຫ້ໄດ້ຮຽນໜັງສືກໍເປັນພໍ,ພໍແຕ່ແມ່ເຖົ້າຂ້ອຍໄດ້ ຍິນ , ແວວດີໃຈ ແລະ ສະແດງວ່າຫາກໍຄິດອອກປາກົດຂຶ້ນບົນໃບໜ້າລາວ ລາວຮີບໄປໂດຍທັນທີ ຂ້ອຍກໍບໍ່ທັນເວົ້າຫຍັງຕໍ່ ມີແຕ່ຄວາມຫວັງໃນການ ກັບມາຂອງລາວໃນແຕ່ລະວິນາທີ.

ໝົດເວລາໄປປະມານ ໔ ຊົ່ວໂມງ ໂດຍບໍ່ຮູ້ສຶກຕົວທີ່ພວກຂ້ອຍ ຟັງນາຍທະຫານເສື້ອລາຍຜູ້ໜຶ່ງມາເວົ້າເຖິງຄວາມຈຳເປັນຂອງບ້ານ ເມືອງຮຽກຮ້ອງໃຫ້ພວກເຮົາເສຍສະຫລະ ເພື່ອຊາດ ສາສະໜາ ແລະ ມະຫາກະສັດ ແລະ ການໃຊ້ອາວຸດປືນສອງສາມຊະນິດ. ຂ້ອຍບໍ່ເຂົ້າໃຈແລະສົນໃຈຟັງ ຍ້ອນຈິດໃຈຂ້ອຍຈົດຈໍ່ຢູ່ກັບການມາຂອງແມ່ເຖົ້າ, ຂ້ອຍບໍ່ຢາກຈາກແມ່ ແລະ ນ້ອງ, ບໍ່ຢາກຈາກບ້ານທີ່ເຄີຍຢູ່ກິນ ແລະ ໃຫ້ກຳເນີດ. ອີກຢ່າງໜຶ່ງ ເດືອນໜ້ານີ້ ຂ້ອຍກໍຈະເສັງ ເສັງແລ້ວກໍຈະໄດ້ຫລິ້ນບຸນປີໃໝ່ຫົດນ້ຳມ່ວນຊື່ນ, ແຕ່ເຖິງວ່າຂ້ອຍເປັນເດັກນ້ອຍ ຄວາມຮູ້ສຶກຮັກບ້ານເກີດເມືອງນອນ ພໍ່ແມ່ພີ່ນ້ອງກໍປຽມລົ້ນຫົວໃຈ, ຂ້ອຍຄິດວ່າ "ບາດພວກ ລູກ

ເຈົ້າຫລານນາຍຊ້ຳພັດບໍ່ຖືກຈັບມາຈັກຄົນ, ຜູ້ຖືກຈັບລ້ວນແຕ່ແມ່ນຜູ້ທຸກຍາກ ແລະ ໄທບ້ານນອກພູນມາກອງກັນເຕັມນີ້ ແນວໃຈບໍ່ມັກຊິໄດ້ເງິນ ເປັນລ້ານກໍບໍ່ຍາກເປັນ ເພາະບໍ່ມີຄວາມຍຸດຕິທຳເລີຍ" ເມື່ອຄິດແນວນີ້ ແຮງຢາກໃຫ້ແມ່ເຖົ້າມາຮອດໄວໆ.

ຫລັງຈາກເພິ່ນເວົ້າຈົບ ໄດ້ຍິນສຽງຕົບມືຫຍອມໆແຫຍມໆ ແລ້ວເພິ່ນກໍເອີ້ນເຂົ້າແຖວ ຂ້ອຍເອງໄດ້ຢູ່ແຖວຫລັງສຸດ ເພາະນ້ອຍກວ່າໝູ່, ທຸກຄົນໄດ້ຮັບເຄື່ອງແບບສີລາຍ ແລະ ສົກເປ (ບາໂລ) ສ່ວນອາວຸດນັ້ນ ບາງຄົນກໍໄດ້ປືນກາກບິນ ແລະ ແອມ-໑໖ ສ່ວນຂ້ອຍຜູ້ນ້ອຍຊ້ຳໄດ້ປືນ ກາລັງທັງໃຫຍ່ທັງຍາວ ທັງໜັກ. ຫລັງຈາກຈັດຕັ້ງເປັນກອງຮ້ອຍ ກອງພັນຮຽບຮ້ອຍແລ້ວກໍຕຽມຂຶ້ນເຮືອບິນຂຶ້ນຕາມຊື່, ໃຈຂ້ອຍບໍ່ເປັນສຸກເຕັ້ນບໍ່ເປັນ ຈັ່ງຫວະ, ງອງແລ້ວຫລຽວແລ້ວກໍງອງກໍຫລຽວອີກ ແຕ່ບໍ່ເຫັນໜ້າແມ່ເຖົ້າ , ໃນທີ່ສຸດກໍຮອດຟຽນຂ້ອຍຂຶ້ນຍົນ. ຂ້ອຍພາຍປືນຂຶ້ນຍົນດ້ວຍຄວາມ ລຳບາກ ເພາະສັ້ນມັນເກືອບຈຸດິນ, ດີແຕ່ຂ້ອຍໄດ້ຮັບຄວາມຊ່ວຍເຫລືອຈາກ ອ້າຍຜູ້ໜຶ່ງ ຂ້ອຍຈຶ່ງຂຶ້ນໄປນັ່ງຢູ່ໃນຍົນໄດ້. ສິບນາທີຜ່ານໄປ ຂ້ອຍບໍ່ຮູ້ວ່າ ຮອດໃສ ໄດ້ຍິນຄຳສັ່ງວ່າ:

"ໂຕນ" ຂ້ອຍຫລຽວອອກໄປທາງປະຕູ ເຫັນເພິ່ນຊຸກກັນໂຕນທິດໆຢູ່ ພໍແຕ່ຮອດຟຽນຂ້ອຍ ຫລຽວລົງໄປ ຫົວໃຈເກືອບຢຸດເຕັ້ນ "ອີ່ພໍ່ອີ່ແມ່ເອີຍ! ຈອງກໍບໍ່ມີ, ສູງສຳປາຍກວຍ..." ພໍແຕ່ຄິດຮອດໜີ້ຮູ້ສຶກວ່າເຈັບ ປາຍບາດໜຶ່ງຢູ່ກົ້ນຫົວປົກລົງ, ບາດນັ້ນກໍຄືມິດໄປບໍ່ຮູ້ຫຍັງອີກ, ຂ້ອຍມາຮູ້ ສຶກອີກບາດໜຶ່ງເມື່ອໄດ້ຍິນສຽງໝາກຈົກ ແລະ ຊວານດັງອຶກກະທຶກ. ຂ້ອຍພະຍາຍາມໂງຫົວຂຶ້ນເບິ່ງອ້ອມຂ້າງ ແຕ່ຮູ້ສຶກວ່າປວດໜຶດທັງຕົວ ຈຳເປັນຕ້ອງໄດ້ລົ້ມຫົວລົງອີກ ຂ້ອຍພະຍາຍາມທົບທວນເຫດການກໍຮູ້ວ່ານີ້ແມ່ນ ສະໜາມຮົບບ່ອນໜຶ່ງ ຫົວຫ້ວຍຫອງ ໄກຈາກເມືອງຫລວງປະມານ ໘໕ ຫລັກ. ພວກເຮົາທຸກຄົນໄດ້ຮັບຄຳອະທິບາຍຕື່ມເລັກນ້ອຍກ່ຽວກັບດ້ານການ

ທະຫານ ແລະ ສະພາບພູມປະເທດຈາກທະຫານເກົ່າຊັ້ນນາຍສິບໂທຜູ້ໜຶ່ງ.

ຄືນນີ້ອາກາດໜາວເຢັນ ນ້ຳໝອກເລີ່ມລົງ, ແສງເດືອນເຄິ່ງສຽວເປັນສີຄົວນົວພຸ່ມພູ ຂ້ອຍຄິດຮອດບ້ານຄິດຮອດແມ່ເຖົ້າ ແລະ ນ້ອງ, ຄິດຮອດເຮືອນພື້ນຟາກປູສາດ ເຖິງວ່າມັນຈິໜາວເຢັນ ແຕ່ກໍມີຄວາມ ອົບອຸ່ນທີ່ໄດ້ຮົ່ມຜ້າບາງໆ ແລະ ມີນ້ອງນອນຄຽງຂ້າງ. ຄືນນີ້ຂ້ອຍຈຳມານອນຂົດໜາວຜູ້ດຽວ ກອດປືນຢູ່ໃນຂຸມຄອງ ຄິດໄປຄິດມາເຫດການນີ້ມັນຄື ມາຍາວນານ ແລະ ປ່ຽນແປງ ໄວວາເອົາແທ້ໆ, ໜ້ອຍໜຶ່ງຂຶ້ນລົດ ໜ້ອຍໜຶ່ງຂຶ້ນຍົນ ໜ້ອຍໜຶ່ງກໍມາຈັບປືນຍືນຍາມ, ທຸກສິ່ງທຸກຢ່າງ ລ້ວນແລ້ວເໝືອນກັບຄວາມຝັນຄືນຜູ້ນ້ອຍຄືກັບຂ້ອຍນີ້ບໍ່ສາມາດທີ່ຈະຮັບເອົາ ຄວາມປ່ຽນແປງແນວນີ້ໄດ້, ຕັ້ງແຕ່ເກີດມາບໍ່ເຄີຍຈາກພໍ່ຈາກແມ່ ແລະ ເຫດການອັນຈິ່ວຮ້າຍນີ້ກໍບໍ່ເຄີຍພົບພໍ້ຈັກເທື່ອ.

"ບຶມ! ບຶມ!" ສຽງລູກແຕກງຂຶ້ນອ້ອມຂ້າງອ້ອມແອວ ເຮັດໃຫ້ ຂ້ອຍຕື່ນຈາກຄວາມຄິດ ບໍ່ທັນໃຫ້ໃຜເຕືອນຂ້ອຍຄວ້າເອົາປືນແລ້ວໝູບຕິດດິນຄິດເຖິງຄຸນພໍ່ຄຸນແມ່ ຄຸນພະພຸດພະທຳພະສົງ ພ້ອມທັງຫຍິບເອົາຂີ້ດິນໃສ່ຫົວໃຫ້ແມ່ນາງທໍລະນີຊ່ອຍປົກເກົ້າຫວວນິທົວ ທັງຢ້ານທັງສັ່ນ ມັນບໍ່ມ່ວນຄື ຕອນເບິ່ງຮູບເງົາຈັກໜ່ອຍ.

"ຢຸດ! ຍົກມືຂຶ້ນ"

ໄຟລູກຈ້ອງສ່ອງໃຫ້ຂ້ອຍເຫັນໜ້າຊາຍຜູ້ໜຶ່ງເຕັມດ້ວຍຝຸ່ນແລະ ເຫື່ອແນປືນມາໃສ່ຂ້ອຍຢ່າງເອົາຈິງເອົາຈັງ ລາວນຸ່ງຊຸດສີຂຽວ ຕີນຖືເກີບຢາງລົດ ສຸບໝວກແວັບ ມີກາສີແດງສີຂາວຕິດຢູ່. ຂ້ອຍວ່າໜາວພັດເຕັມ ໄປແຕ່ເທື່ອ ທົ່ວທັງຄີງ ແຕ່ຄາງກະໄຕພັດສັ່ນຕຳກັນກັກໆ ຍົກມືຂຶ້ນເກືອບບໍ່ໄດ້ "ກູບໍ່ຕາຍບາດນີ້ ຈິຕາຍບາດໃດ ຖືກພວກມັນຈັບໄດ້ມັນຈິປາດກົນບີ ເທື່ອໜັງແລ້ວເອົາເກືອທາໃຫ້ຕາຍເທື່ອລະນ້ອຍ"

ຂ້ອຍຄິດເຖິງຮູບເງົາເຍຍລະມັນ ແລະ ຄວາມເວົ້າຂອງພວກທະຫານ

ແລະ ປະຊາຊົນບັງຊັ້ນຕ່າງໆຫຼາຍໃນເມືອງຫລວງພະບາງ.

ຂ້ອຍພ້ອມດ້ວຍໝູ່ອີກຫລາຍຄົນຖືກຄຸມໃຫ້ຍ່າງ ຂຶ້ນເມືອທາງເໜືອລີ້ງ ມາຮອດຫົນທາງຂ້ອຍຈຶ່ງຮູ້ວ່າ ຫົນທາງເມືອເມືອງປາກເຊືອງ ໜ້ອຍໜຶ່ງກໍລັດເຂົ້າໄປໃນປ່າອີກຕາມຫົນທາງມີຄົນຫາມຄົນເຈັບທະຍອຍກັນຍ່າງເມືອພ້ອມພວກຂ້ອຍ. ມີບາງພວກຍ່າງສວນທາງພວກຂ້ອຍມາ, ເຫັນວ່າແຕ່ລະຄົນລ້ວນແລ້ວແຕ່ໜັກອຶ້ງ, ບາງທີບໍ່ຫາມສອງຄົນກໍມີ, ທຸກຄົນລ້ວນແຕ່ ມີໃບໜ້າເຄັ່ງຂຶມ ແລະ ຮ້ອນຮົນ. ໄປຕາມທາງຂ້ອຍຄິດເຫັນແຕ່ ສະເລີຍເສິກຂອງເຍຍລະມັນຖືກຂ້າຖິ້ມຢ່າງທໍລະມານ ແລະ ປ່າເຖື່ອນ ຍິ່ງຄິດກໍ່ຄືກັບຄວາຍທີ່ພວມຖືກຈູງໄປຂ້າຢູ່ບ້ານເຕົ້າໝູ ບໍ່ມີຈິດໃຈຢາກຍ່າງ ແຕ່ໝູ່ທາງຫລັງຊຸກມາຕະສົ້ນຕີນຢູ່ເລື້ອຍໆ. ຂ້ອຍປະມານເບິ່ງ ພວກຂ້ອຍທີ່ຖືກເປັນສະເລີຍມາພ້ອມກັນ ໓໐ ຄົນ, ບາງຄົນສັກຄ້ອນເທົ້າ, ບາງຄົນມີຜ້າພັນບາດສີຂາວຢູ່ຫົວ, ແຂນ, ຂາ...ທຸກຄົນລ້ວນແຕ່ມີສີໜ້າໝົ່ນໝອງ. ຂ້ອຍເອງຍ່າງມາໄດ້ໄລຍະໜຶ່ງຮູ້ສຶກວ່າ ອັດອໍຕີນຂຶ້ນມາຈົກໃຈ, ແຕ່ກໍຈຳຕ້ອງຝືນໃຈຍ່າງໃຫ້ໄວເທົ່າທີ່ຈະໄວໄດ້.

ວັນທີ ໒໙ ມັງກອນ ໑໙໖໒.

ເຊົ້ານີ້ ອາກາດສົດຊື່ນແຈ່ມໃສ ນ້ຳໝອກເລີ່ມຫາຍຈາງໄປເລື້ອຍໆ ແຕ່ພວກຂ້ອຍຍ່າງມາຢ່າງຟ້າວຟັ່ງຕະຫລອດຄືນຈຶ່ງບໍ່ສົນໃຈນຳດິນຟ້າ ອາກາດ ຈັກໄກ ຫລືໃກ້ປານໃດກໍບໍ່ຮູ້ ຮູ້ແຕ່ວ່າແຕ່ລະບາດກ້າວຍ່າງ ເຮັດໃຫ້ພວກຂ້ອຍໄກຈາກສຽງຂອງການສູ້ຮົບໄປເລື້ອຍໆ. ມາຮອດຄ້າຍ ພັກຍ່ອນໜຶ່ງທີ່ຈຶ່ງກໍແມ່ນຜາຫີນທີ່ມີຄວາມປອດໄພ, ພວກຂ້ອຍຖືກສັ່ງນັ່ງພັກຜ່ອນ ຢູ່ເດີ່ນນ້ອຍບ່ອນໜຶ່ງໜ້າຖ້ຳໃຫຍ່. ພະລັນຂ້ອຍເຫລືອບໄປເຫັນ ນ້າແພງລູກຊາຍຂອງແມ່ນາຍ (ນ້ອງແມ່ເຖົ້າ) ຂອງຂ້ອຍ. ຂ້ອຍແລ່ນໄປໃສ່ລາວພ້ອມທັງຮ້ອງວ່າ:

"ນ້າແພງ"

ຈັກຄວາມດີໃຈອົບອຸ່ນໃຈເໝືອນງກັບໄດ້ພົບໜ້າພໍ່ ແລະ ແມ່, ລາວ ສະແດງສີໜ້າສົງໃສ ແລ້ວລາວກໍບອກໃຫ້ຂ້ອຍລະວັງຕົວໃຫ້ດີ. ກ່ອນລາວຊິຖືກຈັບລາວກໍພະຍາຍາມໜີການເປັນທະຫານມາຫລາຍເທື່ອ, ແຕ່ເທື່ອນີ້ ລາວເຮັດການເປັນນາຍບ້ານ ຊ້ຳຖືກຕາແສງເອົາຍັດເຂົ້າເປັນ ທະຫານແທນລູກຊາຍຂອງເພິ່ນ, ຊຶ່ງທຳມະດາແລ້ວ ບໍ່ມີໃຜຊິມາຈັບເອົານາຍບ້ານໄປເປັນທະຫານໄດ້. ພວກຂ້ອຍເຊົາເມື່ອຍພໍເຫື່ອແຫ້ງກໍໄດ້ຍິນໃຫ້ຈັດແຖວ ຫູກຄຳສັ່ງ ທຸກການກະທຳຂ້ອຍຕ້ອງໄດ້ລະມັດລະວັງ ແລະ ບໍ່ປະຂ້າງ ນ້າຂ້ອຍພໍ້ກາວ. ຈັກໜ່ອຍພວກຂ້ອຍເຫັນພວກຜູ້ສາວເອົາຫໍ່ເຂົ້າຂອງກິນອອກມາສູ່ພວກຂ້ອຍກິນ, ແຕ່ບໍ່ມີໃຜຍອມແຕະຕ້ອງອາຫານເຫລົ່ານັ້ນ. ມີນາງໜຶ່ງໃນຈຳນວນນັ້ນເວົ້າເຊື້ອເຊີນດ້ວຍທ່າທາງເປັນມິດວ່າ:

"ພວກອ້າຍຍ່າງມາຕະຫລອດຄືນຄືຊິຫິວຫລາຍ ເຊີນພວກອ້າຍກິນ,ປັ້ນຈັກໜ່ອຍ"

ເວົ້າແລ້ວນາງກໍຮ່ວມກິນແຕ່ລະຫໍ່ນາງກໍກິນກ່ອນໃຫ້ເບິ່ງ. ຂ້ອຍເອງເຫັນດັ່ງນັ້ນບໍ່ຈັກຊ້າຮີບປ້າວກິນ ທັງລະວັງຕົວຢູ່, ຫລັງຈາກກິນເຂົ້າແລ້ວກໍບໍ່ມີເຫດການຫຍັງເກີດຂຶ້ນ. ປະມານ ໕ ໂມງປາຍ ພວກຂ້ອຍໄດ້ ຮັບຄຳສັ່ງໃຫ້ເຂົ້າໄປໃນຖ້ຳ ມີຫ້ອງໂຖງຍາວຕາມທຳມະຊາດ ມີຫີນຍ້ອຍປົ່ງອອກມາເຕັມໄປໝົດຖ້ຳ ເມື່ອມັນຕ້ອງກັບແສງຕະກຽງກໍ່ມັນກາດເຫລື້ອມມີບງ-ມາບງຄືວ່າງາມຕາເອົາແທ້. ໃນທີ່ນີ້ເອງ ຂ້ອຍໄດ້ຮັບຄວາມຮູ້ໃໝ່. ທີ່ຂ້ອຍບໍ່ເຄີຍຮູ້ ແລະ ຄິດມາກ່ອນ, ມີທະຫານອິດສະຫຼະຜູ້ໜຶ່ງມາເວົ້າ ໃຫ້ຟັງ ຂ້ອຍໃສ່ໃຈຟັງຢ່າງຈິດຈໍ່ເຖິງຈະເມື່ອຍຈາກການເດີນທາງໝົດຄືນ ກໍຕາມ ຂ້ອຍພໍສະຫລັບໃຈຄວາມໄດ້ວ່າ: "ການຕໍ່ສູ້ຂອງພວກອິດສະຫຼະແມ່ນການຕໍ່ສູ້ຂອງຊົນຊັ້ນທີ່ຖືກກົດຂີ່ຂູດຮີດຈາກພາຍໃນສັງຄົມທີ່ເໜົ່າເປື່ອຍ ທີ່ພວກຈັກກະພັດອາເມລິກາເປັນຕົວການໃຫຍ່ນຳເອົາເຂົ້າມາເບື່ອເມົາ ຊຶ່ງຈ້າງຈອບອ້ອຍພວກສັກດີນາປະຕິການໃຫ້ກົດຂີ່ຂູດຮີດປະຊາຊົນ ບັນດາ ຊົນ

ຈາກທີ່ໂງ່ຈ້າຫລ້າຫລັງ"

ທຸກສິ່ງທຸກຢ່າງລ້ວນແລ້ວແຕ່ຖືກກັບສິ່ງທີ່ຂ້ອຍໄດ້ປະສົບພົບມາ ດ້ວຍຕົນເອງທັງນັ້ນ ນອກນີ້ລາວຍັງເວົ້າເຖິງນະໂຍບາຍຂອງພັກທີ່ມີຕໍ່ທະຫານສັດຕູທີ່ຈັບໄດ້ເປັນສະເລີຍ. ແທ້ທີ່ຈິງພວກຂ້ອຍກາຍເປັນເປົ້າລູກປືນ ຕາຍຕາງພວກສັກດີນາປະຕິການ ແທນທີ່ພວກຂ້ອຍຈະຕາຍຢ່າງສົມກຽດຊາຍຊາດທະຫານ ສ່ວນພວກລູກເຈົ້າຫລານນາຍຈຶ່ງໄດ້ຢູ່ສະໜຸກ ກິນສະບາຍ.

ຂ້ອຍເລີ່ມເຂົ້າໃຈວ່າ ການຮັກຊາດ ຮັກບ້ານເກີດເມືອງນອນທີ່ແທ້ຈິງນັ້ນຄວນສູ້ຄວນເຮັດແນວໃດ. ຫລັງຈາກນັ້ນພວກຂ້ອຍກໍໄດ້ຮັບຄຳສັ່ງໃຫ້ພັກຜ່ອນຢູ່ໃນຫົ້ນໝົດນີ້. ຕອນແລງມາຈຶ່ງໄດ້ຮັບຄຳສັ່ງໃຫ້ອອກມານອກ ຖ້ຳ ຊອກຫາອາບນ້ຳ ພວກຂ້ອຍໄດ້ຮັບແພອາບນ້ຳຜູ້ລະຜືນ ເຄື່ອງສີດຳໃຫມ່ອີກຄົນລະຊຸດ, ຂ້ອຍດີໃຈຫລາຍທີ່ໄດ້ຮັບເຄື່ອງໃຫມ່ ແລະ ຄາຍຄວາມ ຢ້ານກົວເກືອບໝົດສິ້ນແລ້ວ.

ຕອນຕໍ່ມາ ພວກຂ້ອຍຖືກຈັບຂ້ອນອອກມານອນນອກຖ້ຳ ມີທະຫານກອງຫລອນຄອຍຄວບຄຸມດູແລຢ່າງໃກ້ຊິດ. ຂ້ອຍນອນທັງຄິດໄປເຖິງເຫດການທີ່ເກີດຂຶ້ນ ມັນເຮັດໃຫ້ຂ້ອຍປ່ຽນແປງໄປຫລາຍສິ່ງຫລາຍແນວພາຍໃນໄລຍະສອງມື້ເທົ່ານັ້ນ ຊຶ່ງເຕັມໄປດ້ວຍຄວາມຕື່ນເຕັ້ນຫວາດກົວຈົນເກືອບບໍ່ມີຊີວິດຢູ່ ທັງຮູ້ດີຮູ້ຊົ່ວ ຮູ້ຖືກ ຮູ້ຜິດສັບສົນກັນຂຶ້ນມາໃນຫົວນຶກ. ບຶດໜຶ່ງ ໄດ້ຍິນສຽງອື້ງໆຂອງຍົນສະປຸກກີມາທາງໃຕ້ພູນ ສຽງມັນດັງມໍ່ເຂົ້າໆ ຈັກໜ່ອຍເຫັນລູກຈອງແຕກເປັນແຖວຊຸ່ງໄປໝົດທັງປ່າ ພວກຂ້ອຍຟ້າວໝູບລົງຕິດພື້ນດິນ ບາດນັ້ນສຽງລູກປືນດັງຈົ້ວງອ້ອມໜ້າອ້ອມຫລັງ ລູກປືນປານຫ່າຝົນໄດ້ຫລັ່ງໄຫລລົງມາຈາກຍົນຢ່າງບໍ່ຂາດສາຍ.

ຫລັງຈາກຍົນໄປ ພວກຂ້ອຍມາສຳຫລວດ ແລະ ເກັບເອົາຜູ້ບາດເຈັບ ແລະ ຕາຍມາຮວມກັນຢູ່ໃນຖ້ຳທີ່ມີແສງໄຟ.

"ນ້າແພງ" ຂ້ອຍຮ້ອງຂຶ້ນໝົດແຮງ ຫລຸບເຂົ້າໄປຫາລາວ ລາວຍັງບໍ່

ທັນຕາຍ, ຮອຍລູກປືນ ແລະ ເລືອດເຕັມຕົວລາວ ລາວເງີຍຫົວຂຶ້ນໜ້ອຍ ໜຶ່ງເວົ້າກັບຂ້ອຍວ່າ:

"ສົ່ງຂ່າວໃຫ້ແມ່ແດ່..."

ຄວາມເວົ້າຂອງລາວຂາດທີ່ນີ້ຄືພັບລົງ ລາວຕາຍແລ້ວ. ນີ້ຫວະອາເມລິການະຫານິດນີ້ຫວະເປັນທະຫານຮ້ອງປ່ອງກັບຊາດ ພວກຂ້ອຍເປັນສະເລີຍເສິກແທນທີ່ຈະຖືກກອມມູນິດຂ້າຖິ້ມຢ່າງປ່າເຖື່ອນ ກັບມາຖືກລູກປືນຈາກຍິນອາເມລິກາຂ້າຖິ້ມ, ພຽງຊົ່ວເວລາ ໑໐ ນາທີກໍຕາຍຕັ້ງ ໑໑ ຄົນ, ບາດເຈັບສາຫັດອີກສາມຄົນ. ຄວາມເວົ້າຂອງອ້າຍນ້ອງນັ້ນເຈົ້ານີ້ມັນບໍ່ມີຊີດຈັກດີ້ ຂ້ອຍແຄ້ນຈົນນ້ຳຕາບໍ່ສາມາດທີ່ຈະຍ້ອຍອອກມາຄືປົກກະຕິ.

"ອາເມລິກາ, ທະຫານຫຸ່ນມັນຈະຢູ່ໃນໂລກດຽວກັບກູບໍ່ໄດ້ແລ້ວ"

ຂ້ອຍຮ້ອງດ້ວຍຄວາມແຄ້ນຢູ່ໃນໃຈ.

ວັນທີ ໒໖ ມັງກອນ ໑໙໗໒.

ຕອນ ໔ ໂມງເຊົ້ານີ້ນີ້ ນ້ຳໝອກຍັງບໍ່ທັນລົງ, ຄວາມໜາວເຢັນຍັງເຮັດໃຫ້ຄິດຮອດຜ້າຫົ່ມຕາມເຄີຍ ພວກຂ້ອຍໄດ້ຮັບຄຳສັ່ງໃຫ້ຂຶ້ນເມືອ ທາງເໜືອອີກ ເພາະຢູ່ບ່ອນນີ້ບໍ່ປອດໄພແລ້ວ ແລະ ມີສະເລີຍມາໃໝ່ມາເພີ່ມອີກ ໑໙ ຄົນ, ເຂົາເຈົ້າຮ່ວມຂະບວນດຽວກັບພວກຂ້ອຍຍ່າງລຽບແຄມນ້ຳແຊງ ລາງເທື່ອກໍລັດຂຶ້ນຫ້ວຍ ລາງເທື່ອລັດລົງມາແຄມນ້ຳແຊງອີກ. ຕາມທົນທາງທີ່ພວກຂ້ອຍຜ່ານໄປມີແຕ່ຮູບພາບບ້ານແຕກເຮືອນພັງ ວັດວາ ອາຮາມຖືກລູກແຕກ ລູກປືນ ຕົ້ນກ້ວຍຕົ້ນພ້າວຖືກໄຟໄໝ້ ເຮືອນຍັງເຫລືອແຕ່ເສົາຊື່ຟ້າ ບາງບ້ານກໍມີແຕ່ບ້ານເປົ່າບໍ່ມີຄົນ. ການເດີນທາງຂຶ້ນເມືອທາງເໜືອຂອງຂ້ອຍນີ້ນີ້ຕ່າງກັບສອງມື້ທີ່ຜ່ານມາ ຫົວໃຈຂ້ອຍເຕັມໄປດ້ວຍຄວາມແຄ້ນຄັບຫົວໃຈ ນ້ຳຂ້ອຍຖືກຂ້າຕາຍ, ຂ້ອຍມີຄວາມຫວັງອັນໃດ ອັນໜຶ່ງຫາກໍອອກມາຈາກ ຫົວໃຈ. ຂ້ອຍຍ່າງມຸ່ງໜ້າຂຶ້ນເມືອດ້ວຍກຳລັງໃຈອັນໜຶ່ງຫາກໍອອກມາຈາກຫົວໃຈ. ຂ້ອຍຍ່າງມຸ່ງໜ້າຂຶ້ນເມືອດ້ວຍ ກຳລັງ

ໃຈອັນແຂງກ້າ. ຂ້ອຍທັງຍ່າງ ທັງຄິດເຖິງ ຄວາມທຸກ ຂອງ ແມ່ເຖົ້າ ແລະ ນ້ອງໆທີ່ຈະໄດ້ຮັບຈາກພວກ ທະຫານຫຸ່ນ ແລະ ແມ່ນ້າ ຂອງຂ້ອຍ ເຂົາເຈົ້າ ເຖິງແມ່ນຈະບໍ່ຖືກຈັບ ແຕ່ກໍ່ຄ້າຍຄືກັບຕົກ ນະຣົກ ທັງເປັນຢູ່ ໃນ ສົງຄາມອັນເປິເປື້ອນ ແລະ ຄວາມໂຫດຮ້າຍປ່າເຖື່ອນຂອງທະຫານ ຫຸ່ນແລະທະຫານອາກາດອາເມລິກາ. ຊີວິດຂອງເຂົາເຈົ້າເໝືອນ ຖືກ ແຂວນໄວ້ກັບເສັ້ນດ້າຍນ້ອຍໆວ່ອງຖ້າແຕ່ມື້ຈິຂາດ. ບັກໝີ ໝູ່ຂ້ອຍຖືກສາລະວັດທະຫານຍິງຕາຍຢູ່ "ນາບົວກາງບົງ" ທັ້ງໆທີ່ບໍ່ມີຄວາມຜິດອັນ ໃດ, ລ້ວນແລ້ວແຕ່ແມ່ນສິ່ງສະທ້ອນຈາກສົງຄາມອັນປ່າເຖື່ອນຂອງອາເມລິກາກາ. ແຕ່ກ່ອນໜ້ານີ້ ກ ປີ ທະຫານອາກາດອາເມລິກາບໍ່ທັນມາ, ບາ ຢູ່ເມືອງ ຫລວງບໍ່ມີ,ໄຫເມືອງຫຼວງກໍບໍ່ເປັນແມ່ຈ້າງ,ແຕ່ດຽວນີ້ບາເພີ່ມຂຶ້ນອີກ ຄື່ມ ເລື້ອຍໆ,ຍິງສາວຊາຍໜຸ່ມມັກທ່ຽວກາງຄືນ, ກອດຄໍຖືແຂນກັນ ຈະ ຊາຍ ຕາມຫົນທາງເອົາແບບຢ່າງອາເມລິກາ, ຍົກໝູ່ຍົກພວກຂ້າກັນຕີກັນ ຂອງ ຊາວໜຸ່ມໄວຄະນອງແຕ່ລະຄຸ້ມ ແຕ່ລະເຂດ ຖືວ່າເປັນຂອງນອນ ຂອງທຳ ມະດາ. ຄົນດີບໍ່ມີກຳລັງຖືກຂ້າຖືກຂົ່ມເຫັງ ຄົນຈົ່ວມີອິດທິພົນມີກິນມີອຳນາດ ຄວາມສາມັກຄີຂອງຄົນພາຍໃນບ້ານບໍ່ມີ ຕ່າງຄົນຕ່າງຢູ່ ຕ່າງເອົາຕົວລອດ ແມ່ຂ້ອຍສິ້ນຊີວິດຢູ່ເທິງຕຽງໂຮງໝໍ ຍ້ອນອອກລູກບໍ່ພົ້ນທ້ອງ,ພໍ່ຊອກເລືອດ ກະລຸບອື່ນມາປ່ຽນເລືອດກະລຸບໂອຢູ່ໂຮງໝໍບໍ່ທັນ, ເຖິງວ່າຢູ່ໃນໂຮງໝໍມີ ເລືອດເຕັມໄປ ແຕ່ເຈົ້ານາຍກໍບໍ່ອີດູກູນາຫຼາກດັ່ງນັ້ນແມ່ຂ້ອຍຈຶ່ງເສຍ ຊີວິດ ໄປ, ນີ້ບໍ່ອິດສະລະ, ເສລີພາບ ປະຊາທິປະໄຕໃນລະບອບປະຊາທິປະໄຕ ຂອງອາເມລິກາ ນີ້ບໍ່ສິດທິມະນຸດທີ່ພວກມັນເທີດທູນບູຊາ ສິນທຳໃນ ສາສະໜາທີ່ມັນເອົາມາອົບຮົມບົ່ມສອນ, ນ້ຳຕາຂອງຂ້ອຍໄຫລລົງອາບແກ້ມໂດຍ ບໍ່ຮູ້ສຶກຕົວ, ຂ້ອຍຍ່າງຂຶ້ນເໜືອເທື່ອນີ້ບໍ່ແມ່ນການຍ່າງອອກຈາກຂຸມນະຣົກ ເຫລົ່ານີ້ຫວະ ແມ່ນຢູ່ຂະນະນີ້ສັກຂອງຂ້ອຍເປັນຊະເລີຍເສິກ ແຕ່ ທາດແທ້ ຂ້ອຍພົ້ນການອອກຈາກຄວາມເປັນທາດ ອອກຈາກຄວາມຈົ່ວຊ້າຫລ້າຫລັງ

ເຫຼົ່ານັ້ນ.

ຂ້ອຍຕັ້ງໃຈແນວແນ່ຕັ້ງແຕ່ນ້າຂ້ອຍຖືກປືນຕາຍວ່າ: "ຕ້ອງຕໍ່ສູ້ ເພື່ອລ້າງແຄ້ນ ຕໍ່ສູ້ເພື່ອປົດປ່ອຍເອົາຄວາມທຸກຍາກຫຼາຫຼັງອອກຈາກບ່າຂອງປະຊາຊົນຜູ້ທຸກຍາກຕາມຄຳທີ່ອ້າຍນ້ອງເຜີຍແຜ່ຢູ່ໃນຖ້ຳໃຫ້ໄດ້. ຂ້ອຍບໍ່ຖືກລ້າງສະໝອງແຕ່ຄວາມຈິງນັ້ນຫາກບອກໃຫ້ຂ້ອຍຮູ້.

ພວກຂ້ອຍຍ່າງມາຮອດບ້ານຫາດຕື່ນ, ຜູ້ຄຸມສະເລີຍສັ່ງໃຫ້ ພັກຜ່ອນ ແລະ ກຽມກິນເຂົ້າງາຍ, ທຸກຄົນນັ່ງພັກຕາມສະບາຍ ບໍ່ມີຄວາມກັງວົນອັນໃດ, ມີປະຊາຊົນບາງຄົນກັບມາແຕ່ສະນ້ຳມາເຝົ້າບ້ານ ແລະ ຫາປາ ໄດ້ຕ້ອນຮັບພວກເຮົາແມ່ນປີ້ງປາ, ເຂົາເຈົ້າບໍ່ຕ້ອງການເງິນ ເຂົາເຈົ້າຕ້ອງການຄວາມຍິ້ມຫົວດ້ວຍຄວາມຮັກແພງສາມັກຄີ ຊຶ່ງຫາໄດ້ຍາກ, ນີ້ຄືນ້ຳໃຈຂອງຄົນລາວ ທີ່ຮັກສາຄຸນຄວາມດີອັນນີ້ໄວ້ຕັ້ງແຕ່ປູ່ຍ່າຕາຍາຍ, ມີແມ່ເຖົ້າຜູ້ໜຶ່ງ ກ່ອນທີ່ພວກຂ້ອຍຈະລາຈາກບ້ານຫາດຕື່ນ, ລາວເອົາຫໍ່ເຂົ້າ ແລະ ຫໍ່ປາມາມອບໃຫ້ຂ້ອຍ.

"ຫຼານຜູ້ນ້ອຍເອົາເຂົ້າໄວ້ກິນນຳທາງເດີ ຢ່າຄິດເຕັ້ນໂຕນໂຍນ ໜີເດີ ເພິ່ນບໍ່ຮ້າຍດອກ"

ຂ້ອຍຂອບໃຈກັບແມ່ເຖົ້າ ແລ້ວກໍຈາກໄປດ້ວຍຄວາມອາໄລ ຂ້ອຍອົດທີ່ຈະຄິດຮອດແມ່ເຖົ້າຂ້ອຍບໍ່ໄດ້. ຖ້າແມ່ເຖົ້າມາເຫັນຂ້ອຍໃນສະພາບແບບນີ້ ຈະຮູ້ສຶກແນວໃດ? ພວກຂ້ອຍຍ່າງລຽບນ້ຳແຊງຂຶ້ນເມືອເໜືອຈົນແລງ ຈຶ່ງຮອດສຳນັກສະເລີຍໃຫຍ່ບ້ານສົບຊາງ. ສຳນັກນີ້ຕັ້ງຂຶ້ນກາງປ່າ ຫ່າງກັນຈາກບ້ານສົບຊາງເລັກນ້ອຍ, ນ້ຳຫ້ວຍຊາງໄຫຼຜ່ານຕີນສຳນັກອອກໄປຫານ້ຳແຊງ. ພໍແຕ່ຍ່າງກ້າວເຂົ້າໄປແທນທີ່ຂ້ອຍຈິເຫັນຮົ້ວໜາມໜາກຈັບ , ສະເລີຍຖືກມັດຕິດຫຼັກຕາກແດດ ແລະ ຮູບການທໍລະມານຕ່າງໆດັ່ງທີ່ເຄີຍເຫັນໃນຮູບເງົາ. ພັດມີແຕ່ພວກທີ່ນຸ່ງເຄື່ອງຄືກັບພວກຂ້ອຍ ທຸກຄົນຕ່າງ ກໍເຮັດວຽກໃຜວຽກລາວ ບາງພວກຈັກຕອກສານກະຕາກະບຸງ, ບາງພວກ

ໄປຕັກນ້ຳ ບາງພວກຄົວກິນ ບາງພວກພອມປຸກຕູບ ບາງພວກຮຽນ ໜັງສື ກ.ກາ ຢູ່ກໍມີ.

ຂ້ອຍຮັບຮູ້ ແລະ ເຂົ້າໃຈ, ພວກຂ້ອຍໄດ້ກິນ ແລະ ໄດ້ພັກຜ່ອນຢ່າງ ເຕັມທີ.

ເຊົ້າມື້ໃໝ່ ທີ ໒໓ ມັງກອນ ໑໙໖໘.

ອາກາດໜາວເຢັນກວ່າທຸກມື້ ຍ້ອນເຂດນີ້ແມ່ນເຂດເໜືອ ປະມານ ໔ ໂມງເຊົ້າຂ້ອຍໄດ້ຍິນສຽງກະລໍໄມ້ຫີກດັງ ປົກງຫລາຍຮູດ. ເປັນ ສັນຍານ ໃຫ້ພວກເຮົາພາຍໃນຄ້າຍທຸກຄົນລຸກມາແອບກາຍ ພາຍຫລັງແອບກາຍແລ້ວ ທຸກຄົນກໍລົງໄປຫາບນ້ຳ ພ້ອມດ້ວຍບັ້ງນ້ຳຄົນລະຫາບ. ເມື່ອທຸກຄົນ ມາຮອດ ຕູບພັກ, ພວກຂ້ອຍທີ່ຫາກໍມາໃໝ່ຖືກເອີ້ນໃຫ້ໄປຮ່ວມຢູ່ສະໂນສອນພ້ອມກັນ ໘ ຄົນ ແລະ ອ້າຍນ້ອງ ໔ ຄົນ ນັ່ງຢູ່ກ່ອນແລ້ວ. ພວກເຮົາ ໄດ້ ຟັງໂຫດກຳຂອງອາເມລິກາອີກເທື່ອໜຶ່ງ ຈຶ່ງເຮັດໃຫ້ຂ້ອຍເຂົ້າໃຈ ແລະ ເຫັນໄດ້ຕາມສະພາບຕົວຈິງທີ່ຂ້ອຍເດີນທາງຜ່ານມາ, ມັນຍິ່ງເຮັດໃຫ້ຂ້ອຍ ເກີດຄວາມຄຽດແຄ້ນຂຶ້ນຕື່ມ. ຈາກນັ້ນທຸກຄົນກໍຖືກຈັບຊ້ອນເຂົ້າຈຸ,ໜ່ວຍ, ກອງຮ້ອຍ ແລະ ກອງພັນ, ພວກເຮົາຖືກມອບໝາຍໃຫ້ພວກຊະເລີຍເກົ່າ ເປັນຜູ້ເບິ່ງແຍງ.

ຂ້ອຍ ແລະ ໝູ່ຖືກຖາມຊີວະປະຫວັດຢ່າງລະອຽດ ເປັນຫຍັງ ຈຶ່ງໄດ້ ມາເປັນທະຫານ? ຖືກຈັບຢູ່ໃສ? ສັງກັດກອງໃດ? ໄດ້ຊັ້ນໃດ? ຮຽນໜັງສືຢູ່ຫ້ອງໃດ? ແລະ ອື່ນໆອີກ. ຂ້ອຍເອງຍັງຖືກມອບໝາຍໜ້າທີ່ ພິເສດ ຄືເປັນຄູສອນໜັງສື ກ. ກາ ໃຫ້ພວກອ້າຍຊະເລີຍຢູ່ໃນກອງຮ້ອຍ ພວກ ຂ້ອຍ ຊຶ່ງສ່ວນຫລາຍບໍ່ຮູ້ໜັງສືຈັກໂຕເລີຍ.

ການດຳເນີນຊີວິດໃນຄ້າຍສະເລີຍຜ່ານໄປເປັນປົກກະຕິ ແຕ່ລະມື້ ຕື່ນ ເຊົ້າແອບກາຍ ຈາກນັ້ນກໍເຂົ້າທາວຽກການຜະລິດ ຕອນແລງຂ້ອຍຕ້ອງໄດ້ ສອນໜັງສື ຕອນຄ່ຳຮຽນການເມືອງ, ມື້ວັນເສົາ ວັນທິດກໍມີການຮ່ວມສຳ

ກາລະ

ຫລວດກວດກາ ບາງເທື່ອກໍມີການມ່ວນຊື່ນ. ຊີວິດຄືວ່າປອດໂປ່ງອິດສະຫຼະ ເສລີ ບໍ່ມີຄວາມເປັນຫ່ວງວ່າ ນ້ອງ ແລະ ແມ່ຊິບໍ່ມີອັນຢູ່ອັນກິນ, ແມ່ນາ ດ່າວ່າ ກິນຫລາຍກິນໜ້ອຍ. ຍາມເຈັບໄຂ້ກໍມີອ້າຍນ້ອງໃນຈຸ ໃນໜ່ວຍ ເບິ່ງແຍງດູແລຢ່າງດີ ມີແພດເອົາໃຈໃສ່ ບໍ່ມີຢາຫລວງກໍມີຢາຮາກໄມ້. ບໍ່ຕ້ອງຫວັ່ນໃຈວ່າຊິມີຄົນມາຄຸບເອົາໄປເປັນທະຫານອີກແລ້ວ ກົງກັນ ຂ້າມ ຂ້ອຍສະເໜີຂຶ້ນມາຂັ້ນເທິງຫລາຍເທື່ອແລ້ວທີ່ຈະໄປເປັນທະຫານເພື່ອ ແກ້ແຄ້ນ ແລະ ເພື່ອປົດປ່ອຍຊາດ, ແຕ່ຂ້ອຍກໍບໍ່ໄດ້ຮັບຄຳຕອບທີ່ຖືກໃຈ ຍ້ອນວ່າຂ້ອຍຍັງນ້ອຍຢູ່ ອີກຢ່າງໜຶ່ງຖ້າເຮັດວຽກວານທາງນີ້ສຳເລັດກໍເທົ່າກັບວ່າໄດ້ປະກອບສ່ວນເຮັດການປະຕິວັດປົດປ່ອຍຊາດ, ດ້ານໜຶ່ງທາງ ຂັ້ນເທິງອາດບໍ່ທັນໄວ້ເນື້ອເຊື່ອໃຈຂ້ອຍກໍອາດເປັນໄດ້, ມີບາງເທື່ອພວກເຮົາກໍໄດ້ອອກຈາກສຳນັກໄປບ້ານ ເພື່ອໄປລຳລຽງເຂົ້າ, ໄມ້ ແລະ ອື່ນໆຊຶ່ງເຮັດໃຫ້ຂ້ອຍຮູ້ຈັກພູຜາປ່າດົງ ຊີວິດການເປັນຢູ່ ການຮ່ຳຮຽນສຶກສາ,ການເປັນຢູ່ທີ່ລຳບາກ ແຕ່ກໍເຕັມໄປດ້ວຍຄວາມເອື້ອອາລີຂອງປະຊາຊົນ ໄດ້ດີ. ຂ້ອຍສານກະຕ່າ, ກະບຸງ, ຂອງ ແລະ ອື່ນໆໄປແລກເອົາເສື້ອຜ້າ ຝ້າຍມານຸ່ງມາໃຊ້. ການດຳເນີນຊີວິດເປັນປົກກະຕິຫລາຍເດືອນ. ມື້ໜຶ່ງຕອນເຊົ້າຂອງວັນທີ ໑໔/໗/໖໘ ຂ້ອຍບັງເອີນໄປພໍ້ເອື້ອຍຈັນສີ ຊຶ່ງແຕ່ ກ່ອນລາວໄດ້ອອກໄປເຮັດການປະຕິວັດ, ດຽວນີ້ລາວເປັນແພດປະຈຳກອງ ພັນໃດຂ້ອຍກໍບໍ່ຮູ້ ລາວເອງກໍບໍ່ຈື່ຂ້ອຍ ເພາະຕອນລາວອອກໄປ ຂ້ອຍກໍຍັງ - ນ້ອຍຢູ່ ລາວເປັນໝູ່ກັບແມ່ຂອງຂ້ອຍເອງ, ດັ່ງນັ້ນເມື່ອຂ້ອຍຖາມລາວຂຶ້ນກ່ອນລາວຈຶ່ງຄິດອອກ ລາວຖາມຕົ້ນສາຍປາຍເຫດຕ່າງໆ ຂ້ອຍຕອບ ແລະເລົ່າຫຍໍ້ໆໃຫ້ລາວຟັງເຖິງການຖືກຈັບ ແລະ ໄດ້ມາເປັນສະເລີຍຢູ່ສີບຊາວ. ລາວບອກຂ້ອຍວ່າບໍ່ເປັນຫຍັງ ໃຫ້ອຸ່ນອ່ຽນແລ້ວລາວກໍຈາກຂ້ອຍໄປ ຢ່າງຟ້າວຟັ່ງ. ຕົກມື້ໃຫມ່ມາ ຂ້ອຍຖືກລູງໃຫ້ຜູ້ບັນຊາຄ້າຍສະເລີຍເອີ້ນໄປຫາເພິ່ນຖາມຂ້ອຍວ່າ:

"ຖ້າເຈົ້າຖືກປົດປ່ອຍຈາກສະເລີຍ ເຈົ້າຈະກັບບ້ານຫລືເຮັດຫຍັງ?"

ຂ້ອຍຕອບຢ່າງບໍ່ລັ້ງເລວ່າ:

"ຫລານຢາກເປັນທະຫານປົດປ່ອຍ"

"ເຈົ້າຍັງນ້ອຍ ລຸງຍັງບໍ່ຢາກໃຫ້ເຈົ້າເປັນທະຫານເທື່ອ ຖ້າຣອດ ປີໜ້າປີໃນຄ່ອຍເປັນກໍໄດ້" ເພິ່ນຕອບຂ້ອຍ.

"ບໍ່ດັ່ງນັ້ນກໍໃຫ້ຫລານເປັນຄູສອນ"

ຂ້ອຍຕອບຢ່າງບໍ່ລັ້ງເລໃຈອີກ ແທ້ທີ່ຈິງ ມັນກໍແມ່ນຄວາມປາຖະໜາຂອງຂ້ອຍທີ່ຢາກຈະອຸທິດຕົນ ເພື່ອປົດປ່ອຍເອົາຜູ້ໄວ້ຈາຫລາຫລັງກີກໜັງສື ທີ່ຂ້ອຍເຄີຍເວົ້າຈາໂອ້ລົມກັບພໍ່ແມ່ປະຊາຊົນບໍ່ວ່າລາວເທິງ ຫລື ລາວ ລຸ່ມ ທຸກຄືນລ້ວນແລ້ວແຕ່ຈົ່ມວ່າບໍ່ໄດ້ຮຽນໜັງສື ຍ້ອນເສິກສົງຄາມ, ໂອ ກາດເວລາບໍ່ອຳນວຍ ຊອກຄູກໍຍາກ. ລຸງໃຫຍ່ເພິ່ນຕອບ:

"ຕົກລົງ ມື້ອື່ນໃຫ້ຫລານຂຶ້ນເມືອປາກອີມ ພ້ອມກັບພວກອ້າຍນ້ອງກອງລຳລຽງເດີ"

ຂ້ອຍລາເພິ່ນໄປຫ້າງຫາ ແລະ ກຽມເຄື່ອງ ສັ່ງພວກອ້າຍພວກເອື້ອຍພາຍໃນຄ້າຍ. ຂ້ອຍມາຄຶດຄືນຫລັງວ່າ ເປັນຫຍັງຂ້ອຍຈຶ່ງໄດ້ປົດປ່ອຍ ໄວ ຍ້ອນວ່າຂ້ອຍເອງໄດ້ຝຶກຝົນຫລໍ່ຫລອມຕົນເອງໃນທັດສະນະ ແລະ ຫັນປ່ຽນແນວຄິດສິ່ງທີ່ບໍ່ດີແລະໄດ້ຊາບຊຶ້ງຢ່າງເລິກເຊິ່ງຕໍ່ນະໂຍບາຍແນວທາງຂອງພັກ. ອີກດ້ານໜຶ່ງຂ້ອຍຖືກເປັນທະຫານຫຸ່ນບໍ່ແມ່ນດ້ວຍເຈຕະນາຢາກເປັນ ຂ້ອຍຖືກບັງຄັບດ້ວຍຄວາມຈຳເປັນ.

ວັນທີ ໑໖ ກັນຍາ ໑໙໗໔.

ມື້ນີ້ຝົນຕົກລິນແຊະງ ພາຍໃນຫົວໃຈຂອງຂ້ອຍຊຸ່ມຊື່ນເໝືອນກັບພຶກສາຊາດທີ່ໄດ້ຮັບນ້ຳຝົນ. ຂ້ອຍໄດ້ຮັບເຄື່ອງແບບ ທະຫານສີຂຽວ ອີກຊຸດໜຶ່ງ. ຂ້ອຍພັບມັນມ້ຽນໃສ່ບາໂລດ້ວຍຄວາມພາກພູມ, ຫລັງຈາກປັ້ນເຂົ້າ ຮອງທ້ອງ ແລະ ທໍ່ເອົາເຂົ້າເອົາເກືອຮຽບຮ້ອຍແລ້ວກໍອອກເດີນທາງ. ເອື້ອຍ

ນ້ອງຊາວໜຸ່ມ ແລະ ຊາຍເຖົ້າທີ່ມາລຳລຽງພາກັນຍ່າງລຽບແຄມນ້ຳແຊງຂຶ້ນເມືອ. ຫົນທາງທົ່ງໝື່ນ ແລະ ເຕັມໄປດ້ວຍໂຕທາກ. ຂ້ອຍພາຍ ບາໄລ ມືຖືໄມ້ເທົ້າເຂົ້າຂະບວນຍ່າງໄປນຳເຂົາເຈົ້າ. ຕອນແລງ ພວກເຮົາມາຮອດນ້ຳອິມ. ນ້ຳອິມ ນີ້ຈັ່ງແມ່ນມີປາຫລາຍເອົາແຫເອົາວ່າ ເປັນໝູ່ໆຫລິ້ນມາບຽງເຕັມຫາດເຕັມວັງ. ຂ້ອຍມາຮອດແທບທີ່ຈະໄດ້ເປັນຄູ ແຕ່ບໍ່ໄດ້ເປັນ, ໄດ້ຖືກຈັບຈ້ອນໃຫ້ເປັນຜູ້ຊ່ວຍຄຸມຄອງປະຈຳກອງພັນຊົ່ວຄາວ . ຂ້ອຍທັງຮຽນທັງເຮັດໄປນຳ, ໃຊ້ທຸກຄວາມຮູ້ຄວາມສາມາດຊ່ອຍເພີ່ມໄປ.

ວັນທີ ໒໑ ກຸມພາ ໑໙໗໓.

ຂ່າວການເຊັນສັນຍາສະຫງົບເສິກລະຫວ່າງຝ່າຍເຮົາກັບຝ່າຍ ວຽງຈັນ ໄດ້ເຮັດໃຫ້ພວກເຮົາມີຄວາມປິຕິຍິນດີເປັນຢ່າງຍິ່ງ ບາງຄົນກໍ ພະຍາຍາມຮຽນເອົາເພງສັນຕິພາບໃຫ້ໄດ້ໃນມື້ນັ້ນກໍມີ, ແຕ່ແທບທີ່ພວກເຮົາ ຈະໄດ້ເບົາບາງວຽກງານ ຊ້ຳພັດມີວຽກງານໜັກໜ່ວງຂຶ້ນກວ່າເກົ່າ, ພວກເຮົາຕ້ອງຈັດຕັ້ງກັນລຳລຽງອາວຸດ ແລະ ສົ່ງທະຫານລົງໄປໃຕ້, ໄປເຂດຊາຍແດນອີກຫລາຍກວ່າເກົ່າ.

"ປະຫວັດສາດປີ ໑໙໖໒ ມັນຈະບໍ່ເກີດຂຶ້ນຊ້ຳຮອຍເປັນອັນຂາດ ຖ້າພວກເຮົາມີສະຕິລະວັງຕົວ"

ນີ້ແມ່ນຄຳເວົ້າຂອງສະຫາຍຜູ້ບັນຊາການເວົ້າເຕືອນພວກເຮົາຢູ່ເລື້ອຍເລື້ອຍ. ໂອກາດນີ້ຂ້ອຍເອງກໍສຸດທີ່ຈະຊົມຊື່ນຍິນດີທີ່ຈະໄດ້ກັບໄປເຫັນບ້ານເກີດເມືອງນອນ ເຫັນພໍ່, ແມ່ເຖົ້າ ແລະ ພວກນ້ອງໆ, ອີກຢ່າງໜຶ່ງ ກໍພ້ອມທີ່ຈະສູ້ຮົບຄຽງບ່າຄຽງໄຫລ່ກັບອ້າຍນ້ອງ ເພື່ອທຳລາຍລ້າງສັດຕູຫາກເຂົາທໍລະຍົດຕໍ່ສັນຍາ. ຂ້ອຍຈຶ່ງສະເໜີຕໍ່ສະຫາຍຜູ້ບັນຊາວ່າ ຂໍລົງ ໄປເມືອງຫລວງ ພ້ອມກັບອ້າຍນ້ອງທັງຫລາຍ. ເວລາທີ່ຂ້ອຍຢູ່ໃນສຳນັກປາກອິມນີ້ ເຖິງວ່າຂ້ອຍບໍ່ຖືກຮັບເຂົ້າເປັນທະຫານປົດປ່ອຍເຕັມຕົວກໍຕາມ, ຜ່ານໄລຍະໜຶ່ງປີທີ່ຂ້ອຍຈາກບ້ານມາ ຂ້ອຍໄດ້ສຶກສາຮ່ຳຮຽນການເມືອງ ເຝິກ

ຝັນຫລໍ່ຫລອມຕົນເອງຢູ່ກາງແປວໄຟ ແລະ ລູກແຕກຂອງສົງຄາມ ພາຍໃນຄ້າຍສະເລີຍ. ຂ້ອຍໄດ້ຮູ້ຫລາຍອັນຫລາຍແນວ ຮູ້ດີຮູ້ຊົ່ວ, ຮູ້ມິດຮູ້ສັດຕູ,ຮູ້ຈັກໂຫດກຳຂອງຈັກກະພັດອາເມລິກາ ແລະ ຫມາພານຢາງຈະແຈງ,ວຽກງານຫັດຖະກຳທີ່ບໍ່ເຄີຍເຮັດ ແລະ ຮຽນກໍສາມາດເຮັດ ແລະ ຮຽນໄດ້ , ເປັນຄູກໍໄດ້ຮັບຄວາມຮັກແພງຈາກເອື້ອຍອ້າຍນັກຮຽນ ຈິດໃຈຂອງຂ້ອຍກໍຄືບັນດານັກຮົບປະຕິວັດທັງຫລາຍຍ່ອມຮູ້ຈັກຮັບຜິດຊອບຕໍ່ໂຊກຊະຕາຂອງຊາດບ້ານເກີດເມືອງນອນທີ່ແສນຮັກ ແລະ ຫວງແຫນຂອງຕົນ, ແຕ່ແທນທີ່ຂ້ອຍຈະໄດ້ລົງເມືອບ້ານດັ່ງຄຳສະເຫນີ ຂ້ອຍກັບຖືກຈັບຊ້ອນໃຫ້ໄປຮຽນຕໍ່  ໃນຕ່າງປະເທດ. ເຖິງວ່າຈະບໍ່ຖືກຕາມຄຳສະເຫນີຂອງຂ້ອຍ ແຕ່ຂ້ອຍກໍພ້ອມແລະ ຕັດສິນໃຈປະຕິບັດທຸກມະຕິຄຳສັ່ງທີ່ພັກມອບຫມາຍໃຫ້. ລາກ່ອນ ປະເທດຊາດທີ່ແສນຮັກ ປະຊາຊົນທີ່ແສນແພງຂອງຂ້ອຍ, ຂ້ອຍຈາກເຈົ້າ ໄປໃນມື້ນີ້ດ້ວຍຄວາມຫວັງທີ່ສົດຊື່ນປຽມລົ້ນຫົວໃຈ. ຄວາມຮັກ ແລະ ຄວາມອາໄລທີ່ຂ້ອຍມີຕໍ່ເຈົ້າບໍ່ອາດຄະນານັບ. ມື້ຫນຶ່ງ...ຂ້າງຫນ້າຂ້ອຍ ຈະກັບມາພົບເຈົ້າອີກດ້ວຍຄວາມຮັກ ຂ້ອຍຈະອຸທິດສອງຝາມື ແລະສະຫມອງຂອງຂ້ອຍເພື່ອເຈົ້າ.

# ຍາມດອກຈອງບານ

*ໂດຍ-ໄທຫີນ ເມືອງພວນ*

* ບົວແກ້ວພວມເນົາຫົດສວນຢູ່ກໍໄດ້ຍິນສຽງເອີ້ນ:

- ອ້າຍບົວແກ້ວ! ອ້າຍບົວແກ້ວ!

ບົວແກ້ວຫລຽວໄປຫາສຽງເອີ້ນກໍເຫັນນ້ອງສາວຂອງຕົນຍ່າງມາຫາຈຶ່ງຟ້າວຮ້ອງຖາມ:

- ມີວຽກຫຍັງບໍ່ຫລ້າ?
- ມີຄົນມາພົບອ້າຍ!
- ແມ່ນໃຜນ້ອງຮູ້ບໍ?
- ອື! ນ້ອງບໍ່ຮູ້.
- ເອີຄັນຊັ້ນນ້ອງເມືອບອກໃຫ້ເພິ່ນນັ່ງຖ້າອ້າຍບຶດໜຶ່ງເດີ, ອ້າຍຈິເມືອດຽວນີ້ແລ້ວລະ!

ບົວແກ້ວຫົດພັກໜານສຸດທ້າຍແລ້ວກໍຟ້າວຍ່າງກັບເມືອເຮືອນ ດ້ວຍຄວາມສົນໃຈ. ບໍ່ແມ່ນທາງກອງມາຮຽກກັບຄືນແລ້ວບໍ? ຫລືວ່າແມ່ນໝູ່ມາຢາມ? ບົວແກ້ວກາວຂຶ້ນເຮືອນດ້ວຍຄວາມຄຶດນາໆປະການ ເຕັມຖ້ອມ ມຸ່ນສະໝອງ ແຕ່ພໍໄປໂລດຫົວເຂົ້າປະຕູເຮືອນ ບົວແກ້ວກໍແນມເຫັນຊາຍ ໜຸ່ມຄົນໜຶ່ງໄວອາຍຸປະມານຊາວຫ້າປີ ໃນຊຸດສີຂຽວ ພວມນັ່ງລໍຖ້າຢູ່. ບົວ

ແກ້ວຟ້າວກ້າວເຂົ້າໄປຈັບມືແຂກດ້ວຍຄວາມສຸພາບ ແລ້ວກໍເຍັ້ນນ້ຳໃສ່ຈອກ ສູ່ແຂກດື່ມ. ແຂກຜູ້ນັ້ນຫລຽວເບິ່ງບົວແກ້ວແຕ່ຫົວຈົນເຖິງຕີນສອງສາມເທື່ອ ແລ້ວຈຶ່ງຖາມຂຶ້ນດ້ວຍຖືເປັນກຸ່ມເຂວວ່າ:

- ຂໍໂທດ! ສະຫາຍແມ່ນບົວແກ້ວແມ່ນບໍ?

- ເຈົ້າແມ່ນແລ້ວ! ສະຫາຍມີວຽກຫຍັງເນາະ?

- ບໍ່ມີວຽກຫຍັງດອກ! ເຮົາໄດ້ຍິນຂ່າວວ່າສະຫາຍມາຢາມບ້ານເຮົາ ເລີຍມາຫລິ້ນນຳ ແລະ ກໍ... ແຂກຫົວເວົ້າຫົວຈົກຖົງເສື້ອເອົາ ຈ.ໝ ກ້ານໜຶ່ງສີເກົ່າໆຍື່ນໃຫ້ບົວແກ້ວ ແລ້ວເວົ້າວ່າ:

- ຂ້ອຍຮັກສາມັນໄດ້ສີ່ປີແລ້ວ ຈົນເກົ່າໝົດ!

- ຈ.ໝ ໃຜ? ບົວແກ້ວຖາມ.

- ອ່ານເບິ່ງ! ອາດຈະແມ່ນຈົດໝາຍເພື່ອນຂອງສະຫາຍຕິ!

ບົວແກ້ວຈັບຈົດໝາຍມາອ່ານເຫັນສະລັກຊອງຂຽນ:

ຈາກ: ກິມມາລີ

ສົ່ງ: ເພື່ອນຊາຍບົວແກ້ວ

ເມື່ອຮູ້ວ່າແມ່ນ ຈ.ໝ ຂອງກິມມາລີເພື່ອນຮ່ວມຫ້ອງຂອງຕົນໃນຄາວກ່ອນ ບົວແກ້ວດີໃຈຫາອັນປຽບບໍ່ໄດ້ ເຂົາພໍຢາກຮ້ອງຂຶ້ນໝົດແຮງ:

"ກິມ! ບົວແກ້ວກັບມາແລ້ວ- ກິມຢູ່ໃສ?..."

ບົວແກ້ວນັ່ງນິດຢູ່ປະໃຫ້ອາລົມຈິດຂອງຕົນເລື່ອນລອຍໄປຕາມອະດີດ , ກິມມາລີ ແລະ ບົວແກ້ວລ້ວນແຕ່ກຳພ້າພໍ່ແຕ່ເມື່ອຍາມຍັງນ້ອຍ, ເຂົາ ທັງສອງຮຽນຢູ່ຫ້ອງດຽວກັນ ເຂົາຮັກແພງກັນເໝືອນດັ່ງອ້າຍນ້ອງ ເກີດຮ່ວມອຸທອນ, ມີສໍເສັ້ນໜຶ່ງກໍຫັກເຄິ່ງ, ມີຢາງລຶບກ້ອນໜຶ່ງກໍແບ່ງສອງ ແຕ່ລະມື້ເຂົາເຄີຍຖ້າກັນໄປໂຮງຮຽນ, ແຕ່ຟ້າເອີຍ! ເປັນໜ້າເສຍດາຍ ການຮຽນຂອງເຂົາທັງສອງຫາກໍສຳເລັດມັດທະຍົມ ບ້ານເກີດເມືອງນອນ ແລະ

ໂຮງຮຽນອັນແສນຮັກຂອງເຂົາກໍ່ຖືກພວກມານຮ້າຍຈັກກະພັດອາເມລິກາແລະ ລູກມືທຳລາຍຈົນກ້ຽງ, ພວກມັນຂ້າແມ່ມານ, ເດັກແດງຢ່າງບໍ່ ກະດຣຸນນີ ແລະ ໂຮມະນຸດສະທຳ. ຕໍ່ໂທດກຳອັນລົ້ນຟ້າເຫລືອແຜ່ນດິນຂອງພວກ ຈັກກະພັດນັ້ນ ບົວແກ້ວບໍ່ສາມາດນັ່ງທົນເບິ່ງໄດ້ຕໍ່ໄປອີກແລ້ວ. ຄວາມ ຄຽດແຄ້ນທັງໝົດໄດ້ລຸກຂຶ້ນເປັນແປວເໝືອນດັ່ງກອງໄຟໃນຫົວໃຈຂອງເຂົາ . ເຂົາໄດ້ຕັດສິນໃຈອຳລາໝູ່ເພື່ອນທຸກຄົນທີ່ເຄີຍປາກລົມຢອກໄຍ, ລາແມ່ຜູ້ໃຫ້ກຳເນີດອັນແສນສັກກາລະບູຊາ, ລາລູງ, ປ້າ, ອາວ ອາທີ່ແສນເຄົາລົບຮັກ ເພື່ອໄປກຳປືນຕໍ່ສູ້ພວກຈັກກະພັດ ພາຍໃຕ້ຄັນທຸງຂອງການປະຕິວັດລາວແຄ້ນໃຫ້ປະຊາຊົນລາວບັນດາຊົນເຜົ່າ.

ມື້ນັ້ນແມ່ນມື້ໜຶ່ງຂອງເດືອນສາມ, ບົວແກ້ວຕື່ນເຊົ້າກວ່າທຸກວັນ, ຢູ່ນອກເຮືອນນ້ຳໝອກຍັງປົກຄຸມໄປທົ່ວທຸກແຫ່ງຫົນ, ສາຍລົມເຢັນຂອງ ພູພຽງເມືອງພວນພັດວອຍໆມາ ເຮັດໃຫ້ບົວແກ້ວຮູ້ສຶກເຢັນສະບາຍໃຈ. ຫລັງຈາກລ້າງໜ້າ, ປັ້ນເຂົ້າເຊົ້າ ແລະ ສັ່ງລາແມ່ຮຽບຮ້ອຍແລ້ວ ບົວແກ້ວກໍຈັບບາໂລ້ຖົມໃສ່ບ່າຍ່າງອອກເຮືອນໄປ, ແມ່ ແລະ ນ້ອງສາວຂອງ ບົວແກ້ວກໍ່ຍ່າງອອກໄປພ້ອມກັນ.

ພໍອອກຫວິດປະຕູ ບົວແກ້ວກໍປະກົດເຫັນລູງ, ປ້າ, ອາວ ອານາເຕົ້າໂຮມຢູ່ຕົ້ນໜ້າບ້ານກ່ອນແລ້ວ ເບິ່ງຜູ້ໃດກໍຄືຢາກເວົ້ານຳບົວແກ້ວວ່າ:

- ຫລານໄປຈົ່ງລ້າງແຄ້ນໃຫ້ທຸກຄົນທີ່ໄດ້ລ່ວງລັບໄປຍ້ອນໂທດກຳຂອງພວກຈັກກະພັດຊຸກຊານ.

ປ້າດວງຢືນຢູ່ເບື້ອງຊ້າຍ ໂອອະແຮ່ມ! ບາດໜຶ່ງ ແລ້ວເວົ້າຂຶ້ນຊ້າໆ

- ບົວແກ້ວ ຫລານໄປແລ້ວແມ່ຂອງຫລານເດໃຜຈະເບິ່ງແຍງ?

ບົວແກ້ວຍັງບໍ່ທັນຕອບກໍມີສຽງຕອບຕາງແຊວງຂຶ້ນ.

- ກໍປະໄວ້ນຳໄທບ້ານນີ້ລະບໍ!
- ກໍໄທບ້ານເບິ່ງແຍງລະບໍ່!

ປ້າດວງເຫັນວ່າບໍ່ໄດ້ທ່າກໍຢືນນິດ ຢູ່ເບື້ອງຂວາປ້າລິນພັດຮ້ອງໂດ່ງມາໃສ່ອີກວ່າ:

- ຫລານໄປໄດ້ຮັບໄຊຊະນະ ຢ່າລືມສົ່ງຂ່າວໃຫ້ປ້າເດີ!

ຢູ່ເບື້ອງຫລັງລູງຈານພັດຮ້ອງໂດ່ງມາໃສ່ອີກ:

- ຫລານໄປພົບບັກເພັດບອກມັນວ່າຢ່າເປັນຫ່ວງນຳລູງຊົ້ນເດີ!

ສຽງເວົ້າຂອງພວກລູງ, ປ້າ, ອາວອາ ດັງຟົດສະໜັ່ນອຶ້ນຈີນ ບົວແກ້ວບໍ່ຮູ້ຈະຕອບໃຜກ່ອນໃຜລຸນ ມີແຕ່ຫລຽວເບິ່ງທຸກຄົນດ້ວຍແສງຕາໃຫ້ສັນຍາວ່າ: ຫລານຈະເຮັດສຳເລັດທຸກໜ້າທີ່ວຽກງານທີ່ຊາດມອບໝາຍໃຫ້. ປ່ອຍໃຫ້ທຸກຄົນເວົ້າສຸດແລ້ວ ລູງແພງສີ ຈຶ່ງເວົ້າຂຶ້ນດ້ວຍສຽງອັນແຈ່ມແຈ້ງ ແລະ ໜັກແໜ້ນວ່າ:

- ຫລານໄປຈົ່ງອຸ່ນອ່ຽນເຮັດໃຫ້ສຳເລັດທຸກໜ້າທີ່ວຽກງານ ທີ່ຊາດມອບໝາຍໃຫ້, ຫລານຈົ່ງຢ່າເປັນຫ່ວງນຳແມ່ຂອງຫລານ, ຢູ່ບ້ານ ຍັງມີລູງ, ມີປ້າ, ມີອາວ, ມີອາເອົາຈະເບິ່ງແຍງແມ່ຂອງຫລານແທນຫລານ.

ບົວແກ້ວຢືນຟັງຄວາມຕັກເຕືອນຂອງພວກລູງ, ປ້າ, ອາວ, ອາຢ່າງເອົາໃຈໃສ່ ແລະ ພະຍາຍາມເກັບກຳເອົາທຸກຄຳເວົ້ານັ້ນໄວ້ໃນສ່ວນເລິກໝາກຫົວໃຈ ເພື່ອເປັນຄະຕິບອກເຕືອນໃຫ້ຕົນກ້າວຂຶ້ນສຳເລັດທຸກໜ້າທີ່. ບົວແກ້ວຫລຽວເບິ່ງຕົ້ນດອກຈອງທີ່ພວມບານຢູ່ໜ້າບ້ານຢ່າງບໍ່ເບີດເປັນຈັກເທື່ອ. ກິ່ນຫອມຂອງດອກຈອງໄດ້ເຮັດໃຫ້ບົວແກ້ວຮູ້ສຶກສະບາຍເບົາເນື້ອ, ແຕ່ທຸກສິ່ງເຫລົ່ານັ້ນກໍບໍ່ສາມາດບັນເທົາໄດ້ຄວາມຄິດຮອດ ແລະ ຄິດ ເຖິງແມ່ຂອງບົວແກ້ວ, ແມ່ຂອງບົວແກ້ວມີແຕ່ບົວແກ້ວ ແລະ ນ້ອງສາວຂອງບົວແກ້ວເທົ່ານັ້ນ. ບາດນີ້ບົວແກ້ວພັດຈະຈາກໄປແລ້ວ, ແມ່ ແລະ ນ້ອງສາວຈະເຮັດແນວໃດຢູ່ ເພາະອີຫລ້າກໍຍັງນ້ອຍບໍ່ທັນຮູ້ເຮັດວຽກຫຍັງ ແຕ່ວຽກຂອງຊາດຈະຕ້ອງໄປ, ໄປຈົນຮອດໄຊຊະນະຄັ້ງສຸດທ້າຍ. ບົວແກ້ວຫລຽວມາເບິ່ງຊາວບ້ານທຸກຄົນອີກເທື່ອໜຶ່ງແລ້ວເວົ້າຂຶ້ນດ້ວຍສຽງສັ່ນໆ ແຕ່ແຈ່ມ

ແຈ້ງວ່າ:

- ຫລານຂໍຮັບເອົາທຸກຄຳຕັກເຕືອນຂອງພວກລຸງ, ປ້າ, ອາວ, ອາ ແລະ ຈະຖືເອົາຄຳຕັກເຕືອນດັ່ງກ່າວເປັນຄະຕິເຕືອນໃຈ ແລະ ເປັນ ກຳລັງແຮງຊຸກຍູ້ຫລານໃຫ້ກ້າວຂຶ້ນສຳເລັດທຸກຫນ້າທີ່ວຽກງານຂອງຊາດ ແລະ ປະຊາຊົນມອບຫມາຍໃຫ້. ຫລານຂໍປະຕິຍານຕໍ່ພວກລຸງ, ປ້າ, ອາວ ອາ ວ່າ:

-ຫລານຈະໄປນຳການປະຕິວັດ ໄປນຳແຮງສະຫວ່າງຂອງພັກ,ຫລານຈະຕໍ່ສູ້ຈົນຮອດມື້ໄດ້ຮັບໄຊຊະນະພວກຮຸກຮານແລ້ວຫລານຈຶ່ງຈະກັບມາແລະຫລານຈະກັບມາຢ່າງມີໄຊ.

ບົວແກ້ວເວົ້າແລ້ວກໍກວາດສາຍຕາໄປທົ່ວຫມູ່ຊາວບ້ານອີກ ເຂົາ ພະຍາຍາມຊອກຫາໃຜຜູ້ໃດຜູ້ຫນຶ່ງທີ່ຕົນຢາກພົບ ແຕ່ແລ້ວກໍບໍ່ເຫັນ.ບົວແກ້ວງວາກກັບມາຫາແມ່ທີ່ພວມຈັບແຂນອີ່ຫລ້າຢູ່ນັ້ນແລ້ວເວົ້າວ່າ:

- ແມ່! ລູກຈະໄປກ່ອນເດີ, ແມ່ຢູ່ເຮືອນຈົ່ງຮັກສາສຸຂະພາບແດ່ ! ເມື່ອໄດ້ສັນຕິພາບແລ້ວ ລູກຈະກັບມາຫາແມ່!

ບົວແກ້ວທັງເວົ້າສັ່ງລາແມ່ ທັງເດ່ມືໄປລູບຫົວນ້ອງສາວຄ່ອຍໆ ແລ້ວເວົ້າວ່າ:

- ຫລ້າ, ນ້ອງຢູ່ເຮືອນພະຍາຍາມເບິ່ງແຍງແມ່ແດ່ເດີ້, ຢ່າໃຫ້ເພິ່ນໄປຕາກແດດຕາກຝົນຫລາຍ, ຖ້າມີວຽກຫຍັງຫຍຸ້ງຍາກສົ່ງຂ່າວໃຫ້ອ້າຍຮູ້!

ເວົ້າແລ້ວ ບົວແກ້ວກໍຍ່າງລົງເຮືອນໄປ, ແມ່, ນ້ອງສາວ ແລະຊາວບ້ານກໍພາກັນຍ່າງໄປສົ່ງບົວແກ້ວຈົນຮອດຫົວບ້ານ ແລ້ວຈຶ່ງກັບຄືນ. ບົວແກ້ວທັງຍ່າງທັງຫລຽວຄືນມາກວັກມືສັ່ງລາໄທບ້ານ ແລະ ບ້ານຮອມ ອັນແສນຮັກຂອງຕົນ ພໍຍ່າງໄປຮອດກອງຣິມຈອງຕົ້ນຫນຶ່ງທີ່ພວມບານດອກຂາວກະຈະ ບົວແກ້ວກໍໄດ້ຍິນສຽງເອີ້ນຊື່ຕົນຢູ່ເບື້ອງຫລັງຢ່າງຟ້າວຟັ່ງ:

- ບົວແກ້ວ! ບົວແກ້ວ! ຖາແດ.

ຫ້າມຈຳໜ່າຍ

ບົວແກ້ວຫລຽວໄປຫາສຽງເອີ້ນກໍເຫັນນາງສາວຜູ້ໜຶ່ງພວມແລ່ນມາຫາ ຕົນດ້ວຍຄວາມຟ້າວ. ນາງສາວຄົນນັ້ນແມ່ນກົມມາລີ ເພື່ອນຂອງ ບົວແກ້ວ ນັ້ນເອງ, ເຂົາເປັນຄົນຮ່າງຄີງກົມ, ໃບໜ້າສ້ວຍຮູບໃບໂພ, ຂົນຄິ້ວດົກ ເບິ່ງແລ້ວເປັນຕາໜ້າຮັກອີ່ຫລີ. ພໍແລ່ນມາຮອດ ເຂົາທັງສອງກໍຢືນ ແນມ ເບິ່ງໜ້າກັນຢ່າງບໍ່ຮູ້ເບີດຈັກເທື່ອ, ໃນສາຍຕາຂອງແຕ່ລະຄົນຕ່າງກໍ ໄດ້ ບົ່ງບອກເຖິງຄວາມຄິດຮອດຄິດເຖິງ ແລະ ເປັນຫ່ວງເຊິ່ງກັນ ແລະ ກັນ ຢ່າງບໍ່ມີຂອບເຂດ. ດົນເຕີບບົວແກ້ວຈຶ່ງເວົ້າຂຶ້ນຄ່ອຍໆວ່າ:

- ກົມ, ແກ້ວຈະໄປກ່ອນເດີ, ຖ້າມີເວລາຂຽນຈົດໝາຍໄປ ຢາມ ແກ້ວແດ່!

- ແກ້ວຈະໄປດົນປານໃດຈຶ່ງຈະກັບມາ?

- ບໍ່ດົນດອກ, ເມື່ອໃດປະເທດຊາດຫາກໄດ້ສັນຕິພາບ,ເອກະ ລາດ ແລ້ວ ແກ້ວຊິກັບມາ.

- ແຕ່ຍາມນັ້ນແລ້ວແກ້ວຊິບໍ່ລືມເພື່ອນຜູ້ບໍລິສຸດຂອງແກ້ວຫວາ?

- ບໍ່ດອກ, ແກ້ວຈະບໍ່ລືມກົມ ແລະ ຈະບໍ່ລືມກົມຕະຫລອດຊີວິດນີ້.ກົມ ຈະເປັນເພື່ອນຊ່ວຍແຮງໃຫ້ແກ້ວຕີເອົາຊະນະສັດຕູທຸກໂຕຢູ່ທຸກສະໜາມຮົບ ແກ້ວໄປກ່ອນເດີສວາຍແລ້ວ ຈັກໜ່ອຍຍິນບັກບ່າເລືອດມາພັດຊິໄປຍາກ.

- ເຈົ້າໄປດີເທາະ! ແຕ່ແກ້ວຈົ່ງຢ່າລືມວ່າຢູ່ບ້ານຍັງມີໃຜຜູ້ໜຶ່ງຄອງ ແກ້ວ ແລະ ຈະຄອງແກ້ວຈົນຮອດໄຊຊະນະຄັ້ງສຸດທ້າຍ.

ບົວແກ້ວຈັບມືອຳລາກົມມາລີແລ້ວກໍອອກເດີນທາງຕໍ່. ເວລານີ້ ສຽງ ປາກສຽງເວົ້າທຸກສິ່ງທຸກຢ່າງໄດ້ງຽບສະງັດໄປ, ຍັງເຫລືອແຕ່ສຽງນົກຕົວ ລໍ ແລະ ຈັກຈັ່ນຮ້ອງສົ່ງບົວແກ້ວເທົ່ານັ້ນ.

ບົວແກ້ວຄິດມາຮອດນີ້ກໍໄດ້ຍິນນ້ອງສາວເອີ້ນ:

- ອ້າຍບົວແກ້ວ! ອ້າຍບົວແກ້ວ ແມ່ມາແລ້ວ!

ບົວແກ້ວສະເດີດຕື່ນຈຶ່ງຮູ້ວ່າຕົນພວມລະເມີຫາຍະດິດເກົ່າກໍຟ້າວ ຮ້ອງ

ໃສ່ນ້ອງວ່າ:

- ຫລ້າ! ນ້ອງໄປຕ້ອນແມ່ສາເດີ ເພິ່ນຄືຊິເມື່ອຍຫລາຍ.

- ເຈົ້າ! ນ້ອງໄປດຽວນີ້ລະ!

ນາງຫລ້າຟ້າວລົງເຮືອນແລ້ວແລ່ນໄປຕ້ອນແມ່ດ້ວຍຄວາມດີໃຈ.

ບົວແກ້ວເຊີນແຂກດື່ມນ້ຳ ແລ້ວຈຶ່ງຈີກ ຈ.ໝ ອອກມາອ່ານ, ໃນ ຈ.ໝ ຂຽນວ່າ:

ສະບາຍດີ ບົວແກ້ວ!

ເປັນເວລາດົນນານສົມຄວນແລ້ວເນາະ! ເກືອບຫົກປີແລ້ວ ແຕ່ທີ່ພວກເຮົາພັດພາກຈາກກັນ. ເປັນຈັ່ງໃດແກ້ວຍັງແຂງແຮງດີຢູ່ຕີ ແລະ ວຽກງານເດໄປຮອດໃສແລ້ວ. ສ່ວນກົມຢູ່ທາງບ້ານແມ່ນຍັງຄອຍ ສະບາຍດີພ້ອມດ້ວຍຄອບຄົວ ແລະ ດຽວນີ້ກົມກໍໄດ້ເຂົ້າໜ່ວຍກອງຫລອນຂອງບ້ານແລ້ວ. ມື້ກ່ອນນີ້ຈຸຂອງກົມຫາກໍຍິງຍົນຂອງພວກໂຈນອາກາດອາເມລິກາຕົກໜຶ່ງລຳ, ມ່ວນຂະໜາດເລີຍ ຖ້າມີແກ້ວຢູ່ນຳຍິ່ງຊິມ່ວນ.

ບົວແກ້ວເພື່ອນທີ່ຮັກ! ພວກເຮົາຈັບມືແຂງຂັນກັນຕໍ່ໄປອີກເນາະ ເມື່ອໃດສັນຕິພາບແລ້ວພວກເຮົາຈຶ່ງມີເລື່ອງມາເລົ່າສູ່ກັນຟັງ.

ພວກເຮົາຈົ່ງປະໃຫ້ຊີວິດໄວໜຸ່ມຂອງພວກເຮົາກ້າວຂຶ້ນຕາມກະແສລົມຂອງການປະຕິວັດຈົນຮອດໄຊຊະນະຄັ້ງສຸດທ້າຍ.

ອວຍພອນແກ້ວເຮັດສຳເລັດທຸກໜ້າທີ່.

ລາກ່ອນ ເທື່ອໜ້າພົບກັນໃໝ່.

ຮັກ ແລະ ຄອງແກ້ວສະເໝີ.

ເພື່ອນຂອງແກ້ວ ກົມມາລີ.

ບົວແກ້ວພັບ ຈ.ໝ ໄວ້ແລ້ວອ່ວາຍມາຖາມແຂກດ້ວຍຄວາມຕື່ນຕັນໃຈ:

- ໃຜເອົາ ຈ.ໝ ນີ້ໃຫ້ສະຫາຍເນາະ?

- ເຂົານັ້ນເອງ!

- ໂອ! ຄົນຈີນສະຫາຍກໍຮູ້ເຂົາຫວາ?

- ເຈົ້າ! ຂ້ອຍຮູ້ເຂົາໄດ້ດີ!

- ຄົນຈີນດຽວນີ້ສະຫາຍຮູ້ເຂົາເຮັດຫຍັງ? ຢູ່ໃສບໍ?

ບົວແກ້ວຖາມຈົ່ງເຈົ້າຈີນເຮັດໃຫ້ແຂກບໍ່ຮູ້ຈັກຈິຕອບ ລາວອ່ວາຍຫນ້າໄປຫາປ່ອງຢ້ຽມຖິ້ມສາຍຕາໃສ່ຕົ້ນຈອງທີ່ພວມບານດອກປະດັບເນື້ອງພອນ ທີ່ສວຍງາມແລ້ວໃຫ້ນັບບຸນນີ້ສວຍງາມຕື່ມ ດິນເຕີບຈຶ່ງຫັນຄືນມາຫາບົວແກ້ວພ້ອມທັງເວົ້າຂຶ້ນຊ້າໆ ແຕ່ແຈ່ມແຈ້ງ ແລະ ຫນັກແຫນ້ນວ່າ:

- ດຽວນີ້ຂ້ອຍກໍບໍ່ຮູ້ວ່າ ກົມມາລີນັ້ນເຮັດຫຍັງ? ຢູ່ໃສ? ເພາະເລື່ອງມັນເປັນແນວນີ້:

ໃນທ້າຍປີ ໑໙໗໑ ຕໍ່ຕົ້ນປີ ໑໙໗໒ ພວກຈັກກະພັດອາເມລິກາແລະລູກມືໄດ້ເພີ່ມທະວີການບຸກໂຈມຕີທາງດ້ານອາກາດເຂົ້າໃນເຂດປົດປ່ອຍ ຂອງພວກເຮົາຢ່າງຮຸນແຮງ ຫວັງດັບມອດກຳລັງປະຕິວັດ. ຕໍ່ສະພາບການ ດັ່ງກ່າວ ກອງບັນຊາການສູງສຸດໄດ້ສັ່ງໃຫ້ກຳລັງປ້ອງກັນອາກາດພວກເຮົາລົງໄປສູ່ແຕ່ລະທ້ອງຖິ່ນ ເພື່ອຝຶກຊ້ອມການຍິງຍົນໃຫ້ບັນດາຫນ່ວຍ ກອງຫລອນ ແລະ ຂ້ອຍເອງກໍຖືກລົງໄປຢູ່ໃນຫນ່ວຍຂອງກົມມາລີ, ດັ່ງນັ້ນຂ້ອຍຈຶ່ງ ລຶ້ງເຄີຍກັບເຂົາກ່ອນຫມູ່ ເພາະເຂົາເປັນຫົວຫນ້າຫນ່ວຍ, ແຕ່ລະມື້ສະມາຊິກໃນຫນ່ວຍຂອງກົມມາລີພາກັນຂຶ້ນໄປແອບຢ່າງບໍ່ຮູ້ອິດຮູ້ເມື່ອຍ, ແອບທັງວັນ ແລະ ຄືນ ໂດຍບໍ່ຄຳນຶງເຖິງສຸຂະພາບ ແລະ ອຸປະສັກໃດໆຢູ່ຕໍ່ຫນ້າ, ແຕ່ສິ່ງທີ່ຫຍຸ້ງຍາກກວ່າຫມູ່ຢູ່ນີ້ແມ່ນບໍ່ມີຜູ້ຊາຍພໍຄົນ, ທຸກຄົນໃນຫນ່ວຍລ້ວນ ແຕ່ແມ່ນຍິງສາວ ອາຍຸມີແຕ່ ໑໖ ຫາ ໒໐ ປີເທົ່ານັ້ນ, ສະນັ້ນໃນ ເບື້ອງຕົ້ນເຝິກໃຫ້ເຂົາ ຂ້ອຍຮູ້ສຶກວ່າຍາກເຕັມທີ, ຂ້ອຍຄິດຢາກຂໍກັບຄືນ ກອງແລ້ວປ່ຽນຜູ້ອື່ນມາແທນ, ແຕ່ແລ້ວຂ້ອຍພັດຄິດວ່າ: ເຮັດວຽກຫຍັງກໍແມ່ນຮັບໃຊ້ຊາດ ຮັບໃຊ້ປະຊາຊົນຄືກັນ, ຂ້ອຍຈຶ່ງພະຍາຍາມຝຶກໃຫ້ເຂົາຕໍ່ໄປອີກ. ໃນ

ທີ່ສຸດ ບັນດານາງສາວເມືອງພວນທີ່ເປັນໜ້າຮັກເຫລົ່ານີ້ກໍໄດ້ໃຊ້ປືນ໑໘,໕ ມມ ໄດ້ຢ່າງວ່ອງໄວຄ່ອງແຄ້ວ ພ້ອມທັງຈັດເຈນອີກດ້ວຍ. ໜ່ວຍ ກອງຫລອນ ໑໘,໕ ມມ ຂອງກົມມາລີໄດ້ນຳໄປຕັ້ງຢູ່ຈອມພູເບາະ ເພື່ອ ຕ້ານກັບການບຸກໂຈມຕີຂອງພວກໂຈນອາກາດອາເມລິກາເຂົ້າທາງເລກ ກ.

ຢູ່ມາຮອດຕອນເຊົ້າມື້ໜຶ່ງຂອງທ້າຍເດືອນສອງ, ເມກໝອກຍັງ ປົກຄຸມໄປທົ່ວທຸກຮ່ອມພູຮ່ອມຫ້ວຍຂາວກະຈະຢູ່, ສາຍລົມເຢັນຂອງພູພຽງເມືອງພວນພັດມາເປັນຊູດໆ ເຮັດໃຫ້ທຸກຄົນຮູ້ສຶກເຢັນສະບາຍໃຈ, ຢູ່ທາງທົ່ງນາໄກງພູນ ສຽງທະນີແຮ່ຮ້ອງປະສານກັບສຽງນົກເຂົາຂັນ, ນົກຄໍ່ຮ້ອງ ເປັນແຊວໆ, ຢູ່ເທິງພູຝູງໝູ່ນົກສາລິການ້ອຍບິນເພີນອອກຈາກຮັງໄປ ຫາກິນເປັນໝູ່ໆ. ພໍຕື່ນຈາກນອນ ບັນດານາງສາວເມືອງພວນກໍຮູ້ໂລດວ່າ: ມື້ນີ້ຟ້າຈະແດດດີ ພວກໂຈນອາກາດອາເມລິກາຈະຕ້ອງມາກຸ່ກກວນ ເຂດ ປົດປ່ອຍຢ່າງແນ່ນອນ. ພວກເຂົາຟ້າວແຕ່ງເຂົ້າກິນ, ຫໍ່ເຂົ້າສວຍ, ແລ້ວ ກໍຂຶ້ນໄປປະຈຳປ້ອມປືນແຕ່ເຊົ້າ. ຄວາມກະຕວງຂອງເຂົາບໍ່ຜິດພັ້ນອຍ, ພໍຮອດ ກ ໂມງ ໝູ່ເມກ, ໝອກກໍຈາງຫາຍໄປ ປະໄວ້ແຕ່ພູຜາປ່າດົງ ທີ່ອາບໄປດ້ວຍແສງອາລຸນອັນໃໝ່ ແລະ ທ້ອງຟ້າສີຄາມທີ່ເສາະໃສ ເທົ່ານັ້ນ. ສັນຍານໃຫ້ທຸກຄົນກຽມຕົວສູ້ຮົບ ແຕ່ຄວາມຄິດຂອງພວກຂ້ອຍໄດ້ພາດໄປ, ພວກຂ້ອຍນັ່ງປະຈຳປືນຈົນຮອດສິບເອັດໂມງກໍບໍ່ໄດ້ຍິນສຽງ ເຮືອບິນຄົນໃດລອດເຂົ້າມານອກຈາກສຽງໃບແປກຮຸກສີກັບດັງອີ່ອອນ ເໝືອນ ດັ່ງສຽງດົນຕີລະຄົມພວກຂ້ອຍເທົ່ານັ້ນ. ເມື່ອເຫັນບໍ່ມີເຫດຫຍັງເກີດຂຶ້ນ ພວກຂ້ອຍກໍພາກັນມານັ່ງກິນເຂົ້າສວຍຢູ່ກົກຕົ້ນແປກໃຫຍ່ຕົ້ນໜຶ່ງທີ່ຮົ່ມເຢັນດີແລະມີສາຍລົມພັດວອຍໆມາ. ໂຢ! ກິນເຂົ້າຢູ່ໃຕ້ຮົ່ມແປກແບບນີ້ມັນລື່ນຢູ່ ຮ້ານອາຫານໃຫຍ່ເພີ່ນແລວເດ. ເບິ່ງແຕ່! ມີສຽງດົນຕີຈາກຕົ້ນແປກ, ມີສາຍລົມເຢັນ, ມີອາຫານທຸກຊະນິດ...ເອົາປານໃດ ແຕ່ພໍທຸກຄົນຫາກໍກິນເຂົ້າໄດ້ຜູ້ລະສອງສາມຄຳ, ກົມມາລີ ກໍຮ້ອງຂຶ້ນ:

- ມີສຽງຍົນ!

ທຸກຄົນວຽງຫູຟັງ ແລະ ຫລຽວໄປທິດມີສຽງຍົນກໍປະກົດເຫັນຍົນ ແອບ ໑໕ ລົບໜຶ່ງພອນບິນມຸງໜ້າມາຫາພວກຂ້ອຍ. ຕໍ່ຈາກນັ້ນກໍແມ່ນ ຍົນແອຟ ໑໐໔ ສີ່ລຳບິນຕາມງກົ້ນກັນມາ. ກິມມາລີຮ້ອງຂຶ້ນເປັນຄຳສັ່ງ:

- ທຸກຄົນເຂົ້າຂຸມກຽມຕໍ່ສູ້ຮົບ!

ພວກນາງສາວມຽນທີ່ເຂົ້າປັບແປັບແລ້ວກໍແລ່ນໄປຫາຂຸມສູ້ຮົບ ຂອງຕົນຢ່າງຟ້າວຟັ່ງ, ຂ້ອຍເອົ້ານຳກິມມາລີວ່າ:

- ກິມ! ນ້ອງບັນຊາການສູ້ຮົບເດີ, ອ້າຍຈະໄປຫາຈຸສອງ.

- ເຈົ້າ!

ຂ້ອຍຟ້າວແລ່ນໄປຫາຈຸສອງພໍໂດດລົງຂຸມ ຫລຽວຄືນມາ ຂ້ອຍກໍ ເຫັນກິມມາລີພອມຢືນຕິດຕາມຍົນແຕ່ລະລຳຢ່າງບໍ່ລົດລະ. ເຂົາຢືນຢ່າງສະຫງ່າຜ່າເຜີຍເໝືອນດັ່ງຜູ້ບັນຊາທີ່ຊຳນິຊຳນານມາຫລາຍແລ້ວ. ພວກຂ້ອຍ ທຸກຄົນຫັນປາຍປືນຕິດຕາມຍົນແຕ່ລະຄັນ ກຽມຖ້າຟັງຄຳສັ່ງຂອງນາງ ເພື່ອພົ່ນລູກກະສຸນອອກສົ່ງຫານພວກບ້າເລືອດກະຫາຍສົງຄາມໃຫ້ສິ້ນຈາກໂລກນີ້.

ທັນໃດ ຍົນແອບ ໑໕ ທີ່ເປັນໜໍ່ສອດແນມກໍສັກຫົວລົງຍິງລູກຄວັນ ໃສ່ບ້ານນາມ້າ ເຊິ່ງເປັນບ້ານແຫ່ງໜຶ່ງຢູ່ຕີນພູເບາະ, ຄວັນຂາວກຸບຂຶ້ນເປັນເລົາ, ພວກ ແອຟ-໑໐໔ ເຫັນແນວນັ້ນກໍພັດປ່ຽນກັນສັກຫົວລົງຖິ້ມລະເບີດຢ່າງປ່ວງບ້າ, ແຕ່ຄັ້ງທຳອິດທີ່ພວກມັນສັກຫົວລົງມານັ້ນ ພວກມັນກໍໄດ້ ປະສົບກັບຫາລູກປືນ ໑໔,໕ ມມ ຂອງໜ່ວຍກອງຫລອນທີ່ຍິງຂຶ້ນເບື້ອສົ່ງຫານມັນ. ກິມມາລີຢືນຢູ່ເທິງປາກຂຸມຍົກຝາມືຂວາຂຶ້ນພຽງຫົວ ຟັນລົງໝົດແຮງພ້ອມທັງຮ້ອງຂຶ້ນ:

- ເພື່ອປະເທດຊາດ, ເພື່ອປະຊາຊົນ ຍິງ! ຍິງ!

ປືນ ໑໔,໕ ມມ ສີ່ກະບອກຂອງພວກຂ້ອຍພ້ອມກັນພົ່ນລູກກະສຸນ ອອກປານຫ່າຝົນ ເຮັດໃຫ້ເຮືອບິນລຳທຳອິດສັກຫົວລົງມານັ້ນຕ້ອງຫງາຍທ້ອງສັກ

ລົງທີ່ວນາກັບທີ່. ສຽງເຮືອບິນຕົກ, ສຽງໜາກບົ່ມແຕກດັງຂຶ້ນຈົນ ສະເທືອນຟ້າ ແຕ່ຍອນຄວາມດັ້ງດານໂສຕາຍຂອງພວກກະຫາຍສົງຄາມ ພວກມັນກໍໄດ້ພັດປ່ຽນກັນສັກລົງມາຖິ້ມລະເບີດອີກ ແຕ່ລະເທື່ອທີ່ພວກມັນ ສັກລົງມານັ້ນ ພວກມັນກໍບໍ່ສາມາດເອົາຕົວຫລົບຫລີກຈາກຫາລູກປືນແຫ່ງ ຄວາມຄຽດແຄ້ນຂອງວິລະສະຕີລາວຜູ້ຮັກຊາດທີ່ຍິງຂຶ້ນເມືອມັ້ຽນຫົວພວກມັນ ເຮັດໃຫ້ແອຟ ໑໐໕ ອີກລຳໜຶ່ງຕ້ອງປິ່ນລ່ວງດ່ອງໄປຫາຕີນພູເກົ່ງເໝືອນດັ່ງວ່າວຂາດເຊືອກ. ເມື່ອເຫັນວ່າບໍ່ໄດ້ທ່າ ພວກມັນກໍຫັນມາຍິງທຳລາຍປ້ອມປືນຂອງໜ່ວຍກອງຫລອນຢ່າງປ່ວງບ້າ, ລູກບົ່ມແຕກຂຶ້ນຕຶ້ມ ຕ້າມ, ຕຶ້ມ! ຕ້າມ! ຄວັນໝົ້ຄວັນໄຟປົກຄຸມໄປທົ່ວປ້ອມແຕ່ກົມມາລີຍັງຍືນກົດຕາມ ການເຄື່ອນໄຫວຂອງຍົນຢ່າງບໍ່ສະເທືອນເໝືອນດັ່ງຕົ້ນແປກຍືນຕາກລົມໃນຍາມໜາວ. ນີ້ຍິນລົມໜຶ່ງສັກລົງມາອີກ, ກົມມາລີກໍຮ້ອງຂຶ້ນເປັນຄຳສັ່ງ:

- ຍິງ! ຍິງ! ຍິງ!

ລູກປືນຂອງພວກຂ້ອຍພົ່ນອອກຈາກເລົາໄປເປັນລວາດງ ຖ້າບໍ່ຫລີກທັນມັນຄົງຈະຝັງລົບໄວ້ກັບທີ່ນີ້ອີກແລ້ວ, ມັນຟ້າວເຈີດຂຶ້ນຢ່າງຟ້າວຟັ່ງແລ້ວ ບໍ່ກ້າສັກຫົວລົງມາຕ່ຳອີກ. ພວກມັນບິນເວີ່ນຢູ່ສູງ, ຖິ້ມລະເບີດຊະຊາຍຢ່າງບໍ່ມີຈຸດໝາຍ. ທັນໃດນີ້ຍິນ ແອຟ ລົມໜຶ່ງໂສຕາຍຫລອນສັກຫົວລົງມາແຕ່ທິດຕາເວັນອອກ, ກົມມາລີຫລຽວເຫັນກໍຮ້ອງຂຶ້ນເຕັມແຮງ:

- ທິດຕາເວັນອອກ! ຍິງ! ຍິງ! ຍິງ!

ສຽງຮ້ອງຂອງກົມມາລີດັງກ້ອງກັງວານໄປທົ່ວປ້ອມແຮງກວ່າສຽງຍົນທີ່ພວມກະແທກແຫກອາກາດລົງມານັ້ນ. ປືນທຸກໆກະບອກຂອງພວກຂ້ອຍກໍຫັນປາກພົ່ນລູກກະສູນອອກສານເຂົ້າກັນເປັນຕາໜ່າງເຫລັກອັນແໜ້ນໜາສະກັດກັ້ນມັນໄວ້ ແຕ່ຊາແລ້ວມັນໄດ້ປ່ຽນລູກບົ່ມລົງມາຢ່າງໄຮ້ມະນຸດສະທຳ , ມັນຄິດຈະເຈີດຂຶ້ນແຕ່ມັນເຮັດບໍ່ໄດ້ ເພາະລູກກະສູນຂອງໜ່ວຍກອງຫລອນໄດ້ຫຸ້ມເອົາມັນເໝືອນດັ່ງນົກແຊວຫຸ້ມກາໄວແລ້ວ...ມັນພູໄຟອອກ ແລ້ວ

ຈົດໄປຫາພູຍອນ ເຮັດໃຫ້ຕົ້ນແປກຫັກໄປເປັນລ່າວ ລູກປື່ນແຕກຂຶ້ນ, ຄວັນຫມົ້ຄວັນໄຟກຸບຂຶ້ນທົ່ວບ່ອນຈົນບໍ່ສາມາດແນມເຫັນສິ່ງໃດໆທີ່ຢູ່ຫ່າງຈາກ ຕົນພຽງຫ້າແມັດ. ນາງບົວແດງທີ່ຢູ່ຂຸມຄອງນັ້ນແນມບໍ່ເຫັນກົມມາລີຢືນຢູ່ອີກກໍຮ້ອງຂຶ້ນດ້ວຍຄວາມວິຕົກ:

-ກົມມາລີ! ກົມມາລີ! ກົມມາລີ!

ບໍ່ມີສຽງຕອບຄືນ ນອກຈາກສຽງໄຟໄຫມ້ຫຍ້າແຟກດັ່ງຕ໊ອບ!ແຕັບ!.. ຕ໊ອບ!ແຕັບ! ເທົ່ານັ້ນ. ບົວແດງຟ້າວໂດດອອກຈາກຂຸມຄອງແລ່ນ ໄປຫາບ່ອນກົມມາລີ ພ້ອມທັງຮ້ອງຂຶ້ນຄ່ອຍໆ:

- ຕາຍ! ກົມໂຕຖືກເຈັບຫວາ! ແຕ່ບໍ່ໄດ້ຍິນສຽງກົມມາລີຕອບ ຄືນຢ່າງໃດ.

ບົວແດງອູ້ມກົມມາລີຂຶ້ນເຫັນຫນ້າເອິກຂອງນາງເຕັມແຕ່ເລືອດ ສີແດງຈື່ງຟ້າວເອີ້ນໃສ່ພວກຂ້ອຍ:

- ຫມູ່ເອີຍ! ກົມມາລີຖືກບາດເຈັບແລ້ວ!

ພວກຂ້ອຍໄດ້ຍິນແນວນັ້ນກໍຟ້າວໂດດອອກຈາກຂຸມສູ້ຣົບຢ່າງບໍ່ຮູ້ຈັກຢ້ານຕາຍ ແລະ ເວລານີ້ຍົນຄັນສຸດທ້າຍຂອງພວກໂຈນອາກາດອາເມລິກາກໍໄດ້ປົບຫນີໄປແລ້ວ, ພວກຂ້ອຍຢືນອ້ອມບົວແດງທີ່ພວມອູ້ມກົມມາລີ ເຊິ່ງພວມຫລັບຕານອນເຫມືອນດັ່ງຄົນນອນຫລັບນອນຝັນພາຍຫລັງການອອກແຮງງານອິດເມື່ອຍມາໃນມື້ຫນຶ່ງດ້ວຍຄວາມມິດງຽບ. ໃນຂະນະນີ້ ສາຍລົມ ເຢັນແຫ່ງພູພຽງເມືອງພວນກໍຄືວ່າມັນບໍ່ພັດມາອີກ, ຕົ້ນແປກທີ່ເຄີຍໄກວແກວ່ງ ໃບປະກອບເປັນສຽງດົນຕີກ່ອມພວກນາງສາວໃນທຸກມື້ນັ້ນກໍພາກັນຢືນນິ້ງສະງັດຄືດັ່ງພວກມັນກໍ່ຢາກຕິດຕາມຟັງບາດຫາຍໃຈຂອງກົມມາລີເຫມືອນ ກັນ. ຕົ້ນດອກໄມ້ບານທີ່ພວມບານດອກຂາວກະຈະຢູ່ຕາມຮ່ອມຫວຍ, ຮ່ອມພູ ກໍຄ່ອຍຮຸບດອກເຂົ້າ, ຝູງຫມູ່ນົກສາລິກາກໍພາກັນເຊົາຮ້ອງເຕັ້ນໄຕ່ໄປ ມາດ້ວຍຄວາມຫງວມເຫງົາ, ພວກຂ້ອຍທຸກຄົນຕ່າງກໍຮ້ອນອົກຮ້ອນໃຈຄອງຖ້າ

ການຟື້ນສະຕິຄືນມາຂອງກົມມາລີ. ຕໍ່ມາປະມານສາມສິບນາທີ ນາງຈຶ່ງຄ່ອຍ ມືນຕາຂຶ້ນ, ນາງຫລຽວເບິ່ງພວກຂ້ອຍທຸກຄົນ ແລ້ວຮ້ອງຂຶ້ນເປັນ ຄຳສັ່ງ ຄ່ອຍໆວ່າ:

- ທຸກຄົນເຂົ້າທີ່ກຳບັງກຣຸມຕົວສູ້ຮົບດ່ວນ!
- ມັນໜີແລ້ວເດ! ບົວແກ້ວຕອບຄ່ອຍໆ.
- ຄົນຈັ້ນປ່ອນປືນເດ?
- ປ້ອນປືນຍັງຕັ້ງໜັ້ນ!
- ເຮືອຍນ້ອງເດ?
- ເຮືອຍນ້ອງທຸກຄົນປອດໄພ!

ເມື່ອໄດ້ຍິນແນວນັ້ນ ກົມມາລີຍິ້ມອອກຄ່ອຍໆພໍໃຫ້ທຸກຄົນເຫັນໄດ້ຄວາມ ພາກພູມໃຈຂອງນາງ. ຈາກນັ້ນນາງກໍຈົກເອົາ ຈ.ໝ ການປີ່ຍື່ນໃຫ້ຂ້ອຍ ພ້ອມທັງເວົ້າດ້ວຍສຽງແຫບໆວ່າ:

- ອ້າຍກົງ! ອ້າຍຈົ່ງຊ່ວຍນ້ອງສົ່ງຈົດໝາຍການນີ້ໃຫ້ອ້າຍ ບົວແກ້ວ ແດ່.

ຂ້ອຍເດມືໄປຮັບເອົາມາເບິ່ງ, ແຕ່ບໍ່ເຫັນຂຽນສະຖານທີ່ຂອງ ຜູ້ຮັບ, ຂ້ອຍຈຶ່ງຟ້າວຖາມ:

- ບົວແກ້ວຂອງນ້ອງເຮັດຫຍັງ? ຢູ່ໃສ? ແຕ່ນາງບໍ່ຕອບ, ນາງຄ່ອຍ ຫລັບຕາເຂົ້າດ້ວຍຄວາມອິດເມື່ອຍ ແລ້ວກໍສະຫລົບໄປອີກ. ພວກຂ້ອຍ ໄດ້ ຈັດສົ່ງນາງໄປໂຮງໝໍທັນທີ ແຕ່ຂ້ອຍບໍ່ໄດ້ໄປນຳ ເພາະຈະຕ້ອງຢູ່ກຣຸມຕົວ ສູ້ຮົບດ່ວນ. ຈາກນັ້ນມາສາມມື້ລູນ ຂ້ອຍກໍໄດ້ຖືກກັບຄືນກອງພັນ ແລ້ວແຕ່ ນັ້ນ ມາຂ້ອຍກໍບໍ່ໄດ້ຮັບຂ່າວເຂົາອີກແຕ່ປະການໃດ.

ຊາຍໜຸ່ມແຂກຄົນນັ້ນເລົ່າສຸດກໍກົ້ມໜ້າລົງດ້ວຍຄວາມໂສກເສົ້າ. ບົວ ແກ້ວຫາຍໃຈໃຫຍ່ຮູດໜຶ່ງແລ້ວຈົມພຶມພຳຄືນດຽວ: "ຮື! ພວກຈັກກະ ພັດ ພວກສູຈົ່ງຊາສາມານກວ່າສັດເດຍລະສານ".

ຢູ່ນຳແມ່ໄດ້ອາທິດໜຶ່ງຕື່ມ ບົວແກ້ວກໍກັບຄືນກົມກອງ. ເຊົ້ານັ້ນແມ່ນມື້ໜຶ່ງຂອງກາງເດືອນສາມ ເໝືອນດັ່ງມື້ບົວແກ້ວອອກໄປນຳການປະຕິວັດກ່ອນໜ້ານີ້ສິບປີ. ຕົ້ນຄາຍ ຕົ້ນຈອງແຂວງຂັ້ນກັບບານສົ່ງກິ່ນຫອມຫວນ ໄປທົ່ວທຸກແຫ່ງຫົນ. ບົວແກ້ວຈາກແມ່ໄປເທື່ອນີ້ ຈິດໃຈຂອງບົວແກ້ວ ເຕັມໄປດ້ວຍຄວາມເບີກບານມ່ວນຊື່ນ. ບົວແກ້ວບໍ່ໄດ້ເປັນຫ່ວງເປັນໄຍນຳແມ່ຂອງຕົນອີກ ເພາະໄດ້ມີອຳນາດການປົກຄອງໃໝ່ເບິ່ງແຍງເປັນຢ່າງດີ ແລ້ວ. ບົວແກ້ວຍ່າງໄປຕາໂພນສະຫວັນ ດ້ວຍຄວາມຕື້ນຕັນໃຈ ເມື່ອລາວ ຫລຽວເຫັນໄຮ່ນາຕາກ້າ ແລະ ເຮືອນຊານບ້ານຊ່ອງຢັ້ງຢາຍຍາວຢຽດ ຢູ່ ສອງຟາກທາງ. ສິ່ງເຫລົ່ານີ້ເຮັດໃຫ້ບົວແກ້ວຕ້ອງຫວນເຖິງອະດີດ, ແຕ່ກ່ອນຢູ່ລຽບຕາມແຄມທາງນີ້ມັນຊິມີຫຍັງ ນອກຈາກຕົ້ນແປນ ແລະ ຂຸມລູກແຕກລູກບົ່ມເທົ່ານັ້ນ ແຕ່ມາເຖິງດຽວນີ້ມັນໄດ້ກາຍເປັນຕົວເມືອງແລ້ວເດ, ແນມເບິ່ງເຮືອນຫລັງໃດກໍເຮັດດ້ວຍເສົາຕັ້ງ, ແອ້ມ ແລະ ປູແປ້ນທົ່ວໝົດ , ເສຍແຕ່ບໍ່ທັນມີໄຟຟ້າເທົ່ານັ້ນລະ. ບົວແກ້ວຍ່າງຜ່ານບ້ານນ້ຳຕົ້ມ ດ້ວຍຄວາມພໍອົກພໍໃຈທີ່ໄດ້ເຫັນເຮືອນຊານຂອງປະຊາຊົນຕັ້ງເປັນຖັນແຖວຢ່າງມີລະບຽບຮຽບຮ້ອຍດີ, ເທົ່ານັ້ນຍັງບໍ່ພໍຢູ່ກາງເດີ່ນບ້ານຍັງມີເດີ່ນເຕົາລີບທຸງ ມີສະໂມສອນ ເຊິ່ງເຮັດດ້ວຍແປ້ນຢ່າງຈົບງາມ, ມີເຮືອນລຽງເດັກ ອີກດ້ວຍ. ບັງເອີນບົວແກ້ວໄດ້ຍິນສຽງເອີ້ນ:

- ອາຍທະຫານເອີຍ! ຊິໄປໃສ, ບໍ່ແວ່ກ່ອນຫວາ?
- ມາເຊົາກິນນ້ຳກ່ອນແມ່ອາຍ!
- ຊິຟາກໝູໄປນຳ!
- ອຸ້ຍ ອີ່ອັນນີ້ບໍ່ໜ້າອາຍແດ່!
- ຊິໜ້າອາຍຫຍັງ ກະດຽວເຈົ້າບໍ່ມີໝູໄປແທ້.

ບົວແກ້ວຫລຽວໄປຫາສຽງເອີ້ນກໍເຫັນນາງສາວສາມຄົນພວມນັ່ງດື່ມນ້ຳຢູ່ລະບຽງເຮືອນແປ້ນຫລັງໜຶ່ງ, ເບິ່ງຜູ້ໃດກໍໜ້າແດງອິ່ງຕິ່ງ, ພວກເຂົາ

ກໍຄືຊິແມ່ນເດີນທາງມາເຊັ່ນດຽວ, ບົວແກ້ວຄິດ:

- ຂອບໃຈແລ້ວເທື່ອໜ້າກ່ອນ.

- ບໍ່ນ່າ! ມາພັກຈັກໜ່ອຍກ່ອນລະບໍ, ພວກນ້ອງຊິມີໝູ່ໄປນຳ ຫລື ອ້າຍຢ້ານໝູ່ພວກນ້ອງພຸກແຂນແຕ່ງດອງກັບອ້າຍຊັ້ນຫວາ? - ເວົ້າ ແລ້ວ ນາງສາວສອງຄົນທີ່ນັ່ງຢູ່ເບື້ອງຂວາພີ້ກໍອວາຍໜ້າໄປຫົວຄິກໆໃສ່ຝາເຮືອນ ສ່ວນນາງຜູ້ນັ່ງຢູ່ເບື້ອງຊ້າຍສຸດພຸ້ນກໍປະກົດວ່າໜ້າແດງຂຶ້ນຜິດປົກກະຕິ. ບົວແກ້ວຂືນຄວາມບໍ່ໄດ້ກໍຂຶ້ນໄປນັ່ງຫລົ້ມນຳພວກນາງ. ຫລັງຈາກເຍັ້ນນ້ຳສູ່ບົວແກ້ວແລ້ວ, ນາງສາວຜູ້ນັ່ງຢູ່ເບື້ອງຂວາສຸດກໍຖາມບົວແກ້ວ:

- ອ້າຍຈະໄປໂພນສະຫວັນແມ່ນບໍ່?

- ເຈົ້າແມ່ນແລ້ວ!

- ໃຫ້ພວກນ້ອງຝາກໝູ່ຜູ້ນີ້ໄປນຳແດ່ເດີ? - ນາງທັງເວົ້າທັງຊີ້ມືໃສ່ນາງສາວຜູ້ນັ່ງຢູ່ເບື້ອງຊ້າຍສຸດ.

- ໄປລະບໍ່! ຊິເປັນຫຍັງ? - ບົວແກ້ວຕອບແລ້ວກໍຫລຽວເບິ່ງ ນາງສາວທີ່ຈະໄປຮ່ວມທາງກັບຕົນດ້ວຍແສງຕາອ່ອນຫວານ. ຟ້າເອີຍ! ນາງສາວຄົນນີ້ຈັ່ງແມ່ນເປັນຕາໜ້າຮັກອີ່ຫລີ, ນາງມີດວງຕາແວວວາວ ແຝງຄວາມສະຫລາດແຫລມຄົມ, ໃຜເດ້ຈະເປັນຜູ້ໂຊກດີໄດ້ເປັນຄູ່ຊີວິດ ຂອງນາງ, ນາງສາວຄົນນັ້ນເຫັນບົວແກ້ວແນມເບິ່ງຕົນຫລາຍກໍກົ້ມລົງ ຍິ້ມຫົວດ້ວຍຄວາມອາຍ. ວາດຍິ້ມຂອງນາງເຮັດໃຫ້ບົວແກ້ວຕ້ອງຄິດຫວນຫາໃຜຜູ້ໜຶ່ງ ເຊິ່ງຕະຫລອດຊີວິດ ບົວແກ້ວບໍ່ສາມາດລືມໄດ້ ແຕ່ບົວແກ້ວກໍບໍ່ນຶກຈະໄດ້ພົບເຂົາຜູ້ນັ້ນອີກແລ້ວ ເພາະເຂົາໄດ້ເອົາເລືອດເນື້ອ ແລະ ຮ່າງກາຍຂອງເຂົາມາປູແຜ່ນດິນເມືອງພວນນີ້ ເພື່ອຄວາມສຸກໃຫ້ຄົນຮຸ່ນຫລັງ. ບົວແກ້ວລຸກຂຶ້ນສັ່ງລານາງສາວສອງຄົນທີ່ຍັງເຫລືອ ແລ້ວອວາຍໄປເວົ້າຕໍ່ນາງຜູ້ທີ່ຈະໄປນຳຕົນວ່າ:

- ນ້ອງກຽມເຄື່ອງແລ້ວຫວາ? ພວກເຮົາໄປເທາະ!

- ເຈົ້າ! ຖາມຂອງບຶດໜຶ່ງ!

ນາງຍ່າງເຂົ້າໄປໃນເຮືອນຄາວໜຶ່ງກໍພາຍບ່າໂລອອກມາ, ນາງຈັບມືໜູ່ຂອງນາງແຕ່ລະຄົນຢ່າງແໜ້ນ ແລ້ວເວົ້າດ້ວຍສຽງເສາະໃສ:

- ເຮົາໄປກ່ອນເດີໝູ່.

- ເຈົ້າໄປດີ, ມື້ໃດກັບມາ ມາແວ່ເຮືອນກ່ອນໄດ໋!

- ເອີແມ່ນອນ ຢ້ານແຕ່ພວກໝູ່ລືມບໍ່ຫລອນ.

- ເອົາ! ຄັນລືມບໍ່ຫລອນກໍພາກັນກິນນ້ຳຕາງເຂົ້າຄືແຕ່ກ່ອນລະບໍ!

- ກໍໄດ໋! ລາກ່ອນ!

- ໂຊກດີ!

ນາງລີງຫລິດຂັ້ນໄດຍ່າງໄປໄດ້ສອງສາມກ້າວກໍໄດ້ຍິນໝູ່ເອີ້ນມາໃສ່:

- ກິນມາລີ ຍີ່ໂດ່ງນ້ຳຂອງເຈົ້າເດ໋!

ຄຳທີ່ວ່າ ກິນມາລີ ໄດ້ກະຈາຍໄປເຖິງຫູຂອງບົວແກ້ວ ແຕ່ບົວແກ້ວ ບໍ່ໄດ້ເອົາຫົວຊາ ເພາະລາວຄິດວ່າ ເພື່ອນຫູບໍລິສຸດຂອງລາວອາດຈະໄປໄກແສນໄກແລ້ວຢ່າງບໍ່ມີວັນກັບຄືນມາແລ້ວ. ຫລັງຈາກໝູ່ເອົາຍີ່ໂດ່ງນ້ຳ ມາສົ່ງ. ບົວແກ້ວ ແລະນາງສາວຄົນທີ່ຊື່ ກິນມາລີ ນັ້ນກໍພາກັນຍ່າງເດີນທາງຕໍ່, ແຕ່ບໍ່ມີໃຜປາກ, ໃຜລືມພໍຄວາມຈົບຈ້ອໄລຍະທາງ, ພວກເຂົາມີແຕ່ລັກແນມເບິ່ງກັນແລ້ວຍິ້ມຫົວຢ່າງລັບໆເທົ່ານັ້ນ. ພໍໄປຮອດບ້ານຮ້າງ ແຫ່ງໜຶ່ງທີ່ຍັງເຫລືອແຕ່ເສົາເຮືອນໄໝ້ ແລະ ຕົ້ນຈອງສອງສາມຕົ້ນພວມແຂ່ງຂັນກັນບານ, ບົວແກ້ວກໍອຸທານຂຶ້ນດ້ວຍຄວາມໂສກເສົ້າ, ເສຍດາຍ:

"ຕົ້ນຈອງອັນແສນຮັກເອີຍ! ສິບປີແລ້ວເດທີ່ຂ້ອຍໄດ້ພັດພາກຈາກເຈົ້າໄປ, ມາດຽວນີ້ເຈົ້າຍັງບານດອກສີ່ງກິ່ນຫອມຫວນຢູ່ເນາະ ແຕ່ບໍ່ມີໃຜເບິ່ງແຍງບົວລະບັດເຈົ້າແລ້ວ ເຈົ້າເຮັດຈັ່ງໃດຢູ່..."

ເມື່ອໄດ້ຍິນຄຳອຸທານຂອງບົວແກ້ວ ນາງສາວຄົນນັ້ນຫລຽວເບິ່ງ ບົວແກ້ວແຕ່ຫົວຈົນເຖິງຕີນສາມເທື່ອແລ້ວຖາມຂຶ້ນ:

- ແຕ່ກ່ອນອ້າຍຢູ່ບ້ານນີ້ຫວະ?
- ເຈົ້າ! ແມ່ນແລ້ວ, ເຮືອນອ້າຍຕັ້ງຢູ່ຂ້າງຕົ້ນຈອງທີ່ພວມບານຂາວກະຈະນັ້ນເດ!

ບົວແກ້ວຫັງເວົ້າຫັງຊີ້ມືໄປຫາຕົ້ນຈອງໃຫຍ່ຕົ້ນໜຶ່ງທີ່ພວມບານສົ່ງ ກິ່ນຫອມຫວນໄປທົ່ວບໍລິເວນແຫ່ງນີ້.

# ໄດ້ແນວພ່

ໂດຍ~ ລິນສຸກ ສຸກຣະບາວັດ

* ກ້ອນຂີ້ເຝື້ອສີຂາວຄືກັບຝຸ່ຍຝ້າຍເຊິ່ງເລື່ອນໄຫລເທົ້າສັນຍານູ ບາຈຮວນັ້ນ ຖືກເຫື່ອດຫາຍໄປເທື່ອລະນ້ອຍ, ເມື່ອລັດສະໝີສີທອງຂອງດວງອາທິດໄຫຼຂຶ້ນມາຢອງຫລັງພູ. ການເໜັງຕີງນາຍຄືງຂອງທຸກງຊີວິດ ທີ່ມີພູມລຳເນົາຢູ່ແຫ່ງນີ້ຄ່ອຍໆຟື້ນຕົວຂຶ້ນຕາມການບັນຊາຂອງທຳມະຊາດ, ຝູງນົກກາທີ່ສົ່ງສຽງຈອກແຈກ-ຈໍແຈເທິງບ່າຍໄມ້ຫວ່າງມືດຊຸ້ມລ້າວນັ້ນ ຕ່າງກໍໄຫຼພິນບິນຈອນຈາກເຮືອນຮັງມຸ່ງໜ້າສູ່ທ້ອງຟ້າແຫ່ງຄວາມເປັນອິດສະຫລະ ແລະ ມັນຈະເວີນເວັ້ຍເຈີດລົງຊອກຫາກິນເໝື່ອແຫ່ງໃດແຫ່ງໜຶ່ງຕາມອັດທະຍາໃສ...ຝູງງົວ, ຄວາຍ ເພື່ອນຜູ້ສະໜິດສະໜົມຂອງທ້ອງທົ່ງ ນາຖືກລ່າມເຊືອກຢູ່ຕາມເດີ່ນໜ້າສີຂຽວແດມນາ. ບາງຕົວກໍ່ມີລູກເຈົ້າ ຂອງມັນນັ່ງສະເມີ້ຍຢູ່ເທິງສັນຫລັງອັນທຶນທຶກ. ຊາວກະສິກອນເຮັດວຽກເປັນຈຸ, ເປັນໝູ່ຕາມທ້ອງທົ່ງໃຫຍ່ຫລວງສຸດສາຍຕາ ແລະ ເຂົາເຈົ້າຄືງຮູ້ສຶກ ລິງອິກລິງໃຈເມື່ອຄິດນໍ້ຮວງເຂົ້າໃຫຍ່ທີ່ຈະສຸກເຫລືອງອາລ່າມໃນອີກບໍ່ນານ.

ທົ່ງນາແຫ່ງໜຶ່ງຂອງເຂດເມືອງໂພນທອງ...ຮ່າງຄືງຂອງ ສອງເອື້ອຍນ້ອງພົ້ນຂຶ້ນກາຍກໍເຂົ້າພໍເຄິ່ງໄຕ, ເຂົາເຈົ້າຍ່າງຕໍ່ຫລັງກັນຕາມຄັນ

ມາມຸ່ງໜ້າສູ່ສາຍປ່າຟາກທົ່ງເບື້ອງນັ້ນ ເພື່ອປະກອບພາລະກິດຊ່ວຍ ຄອບຄົວເຂົາເຈົ້າເອງ. ຄວາມມີຊີວິດຊີວາຂອງອາກາດຕອນເຊົ້າເຮັດໃຫ້ ທັງສອງມີຄວາມຊື່ນບານຂຶ້ນ ຄ້າຍຄັ່ງດວງດອກໄມ້ ທີ່ອ້າກີບຮັບແສງ ອາລຸນ. ໂດຍສະເພາະມັນຊຶມເຂົ້າເຖິງດວງໃຈຂອງຜູ້ເປັນເອື້ອຍຢ່າງບໍ່ອາດພັນລະນາມັຍ. ໜຶ່ງວັນກ່ອນໜ້າຄືນີ້ເປີດພາກຮຽນປະຈຳປີ, ກິ່ນອາຍຂອງລາຍຊື່ຜູ້ເສັງຂຶ້ນຫ້ອງໄດ້ ບຸກກັບຄວາມພໍໃຈຕໍ່ປຶ້ມຫົວໃໝ່ ເຊິ່ງແມ່ຊື້ມາໃຫ້ແຕ່ຮ້ານຄ້າເມືອງຍັງຄົງກ່ອມກຸ້ມໃຈນາງທຸກເວລານາທີ. ໃນຫ້ວງແຫ່ງຄວາມຄິດ ບອກວ່ານາງຈະຂຽນປຶ້ມຫົວໃໝ່ນັ້ນດ້ວຍຕົວໜັງສືອັນສຸດແສນ ກົ່ນກອງ. ຫົວຂໍ້ແຖວທຳອິດທຳກໍ່ ຈະຂຶ້ນດ້ວຍຊື່ນາຕຸພູມທີ່ແສນຮັກ "ສາທາລະນະລັດປະຊາທິປະໄຕປະຊາຊົນລາວ" ແລະ ແຖວສຸດທ້າຍກໍຈະມີຊື່ ຂອງເຈົ້າຂອງປຶ້ມ..."ແພງຈັນ ຫ້ອງ ມ ນີ/໑", ໜ້າກາງກໍຈະແຕ້ມຕາຕະລາງສອນໃສ່ຢ່າງສວຍງາມ ມີທົ່ງເສັ້ນສີຟ້າ ແລະ ສີແດງ, ແພງຈັນ ຄິດຮອດຫ້ອງຮຽນ ທັງຄິດເຖິງໜ້າວຽກທີ່ຈະເຮັດໃນບໍ່ຊ້ານີ້. ນາງແນມເບິ່ງຕົ້ນເຂົ້ານາປີຂອງສະຫະກອນ ເຊິ່ງນາງໄດ້ປະກອບສ່ວນເຫື່ອໃດນາງຍິ່ງມີຄວາມຮູ້ສຶກພາກພູມໃຈເທື່ອນັ້ນ "ໂອ້...ເຈົ້າຊ່າງສວຍງາມດັ່ງສາວສີລະປະກອນທີ່ພວມກົ່ງກົ້ມໂຄ້ງຄຳນັບທ່ານຜູ້ຊົມແທ້ເດ!"...ສ່ວນນ້ອງຊາຍໄວ ຊ ຂວບ, ພໍແຕ່ອອກພົ້ນຕີນບ້ານມາ ບັນດາບົດເພງຕ່າງໆກໍໄຫລລຸດໆ ອອກມາປານຮີກະຕ່າຍ ຕາມໄວທີ່ໄຂຄຽງສາຂອງເຂົາ. ບາງເທື່ອ ເຂົາ ກໍນ້າວໜາກກະຖຸນໜົດເທື່ອໜົດແຮງຍິງໃສ່ຊຸມນົກທີ່ພວມແສ່ວລີ້ງ ສືບຕອດຮວງເຂົ້າ ພວມຖອກຮວງໃໝ່.

"ຊວັດ!"

"ເປັນໃດພັນຖືກເອັນບິນບໍ່" ເອື້ອຍເວົ້າຂຶ້ນ ພ້ອມທັງປ່ອຍສຽງ ຫົວອິກໆ.

"ດາດ" ແລ້ວສຽງຫົວທັງສອງກໍດັງຂຶ້ນອີກເທື່ອໜຶ່ງ.

ຄວາມຈິງເຂົາເຈົ້ານັ້ນມີຄວາມຊິນເຄີຍຕໍ່ການດຳລົງຊີວິດໃນຊົນນະບົດ ກິ່ນຕົມ, ສາຍຄວາຍ, ພູພາປ່າດົງ, ສຽງນົກກາ, ສຽງບິດຄີງຂອງ ຕົ້ນໄມ້, ໃບຫຍ້າ, ສາຍລົມອ່ອນໆ ທີ່ພັດມາຕາມເປີ້ນພູ ມັນຊາງ ເປັນພາບດຶງດູດໃຫ້ມີຄວາມຮັກແຜ່ນດິນຕອນນີ້ຢ່າງຫລວງຫລາຍ. ຍາມນີ້ພັກ ຣຽມ ເຂົາເຈົ້າກໍປິ່ນໜ້າໃສ່ວຽກງານຂອງຄອບຄົວ...ແສງສະຫວ່າງຂອງການປະຕິວັດເພີ່ມໃຫ້ເຂົາເຈົ້າເຂົ້າໃຈໃນການອອກແຮງງານ, ຮູ້ຈັກ ຮັກເຊື້ອແນວຊາດ, ຮູ້ຈັກຄຽດແຄ້ນຕໍ່ສັດຕູງູພິດ ແລະ ແຜແດງເປັນເຄື່ອງວັດແທກເຖິງສະຕິຄວາມຮັບຮູ້ຕໍ່ສິ່ງໃຫມ່ແຫງໄວເຍົາ.

ທັງສອງຍ່າງໄປຫາຈຸດຫມາຍວຽກງານຢ່າງຕັ້ງຫນ້າ ແລະ ຍ່າງໄປເລື້ອຍໆ ຈົນໄລຍະທາງນັ້ນຫຍໍ້ລົງໆ. ໃນທີ່ສຸດສອງເອື້ອຍນ້ອງກໍປາກົດຕົວຢູ່ວົງລ້ອມຂອງປ່າດົງ ເຊິ່ງປ່າດົງດັ່ງກ່າວແມ່ນບ່ອນຊອກຫາຫລົວຟືນ,ຊອກຫາຜັກຫັກຫນໍ່ໄມ້ຂອງຊາວບ້ານ.

ແພງຈັນຢື້ເດັດດອກໄສ້ໄກ່ມາດົມ ແລ້ວເຫນັບໃສ່ເກົ້າຜົມຂອງ ນາງດ້ວຍຄວາມທະນຸຖະໜອມ. ຈາກກິ່ນຫອມດອກໄມ້ປ່າເຮັດໃຫ້ນາງຄິດເຖິງໂຕະເອື້ອຍດູ ແລະ ຄິດເຖິງມື້ບຸນວັນທີ ໑ ເດືອນ ຜ...ດອກໄສ້ໄກ່ , ດອກຄັດເຄົ້າ, ດອກເຂັມ, ດອກເຜີ້ງ, ດອກສະມັ່ງ ຈັ່ງແມ່ນຊາດ ບານງາມ ທັງຫອມເອົ້າແທ້ເອົາວ່າ ແລະ ນາງຕັ້ງໃຈໄວ້ຕອນກັບເມື່ອຈະເກັບເອົາຫລາຍໆ ແລ້ວເອົານ້ຳພົມ ຫົ່ມຮຽນ ເພື່ອມື້ໜ້າຈະເອົາໄປເອ້ ເຕົ້າດອກໄມ້ໂຕະເອື້ອຍດູ.

ຄຳພັນ ຊ່ວຍເອື້ອຍຫ້ອນເອົາຟືນຈາກກົກໄມ້ຕາຍທີ່ລົ້ມພາດຈອມປວກ, ແພງຈັນດຶງຫີນວ່າໄມ້ລົງແລ້ວໃຊ້ພ້າຟັນບັ່ນເປັນທ່ອນຢ່າງບໍ່ຮູ້ອິດເມື່ອຍ. ຈາກວ່ານີ້ຫາວ່ານັ້ນ ບໍ່ພໍດາວດົ້ນຟືນກໍຄ່ອຍໆຫລາຍຂຶ້ນເກືອບພຽງພໍກັບ ຄວາມຕ້ອງການ...ສຽງຟັນໄມ້ຂອງແພງຈັນ ແລະ ສຽງດຶງໄມ້ຂອງຄຳພັນພ້ອມສຽງຮ້ອງສຽງເປບ ເຮັດໃຫ້ຄວາມອ້າງວ້າງເປົ່າປ່ຽວກາງປ່າກາງດົງກັບ

ເກີດມາມີບັນຍາກາດອົບອຸ່ນຂຶ້ນ.

ໃນຂະນະທີ່ທັງສອງພວມເພີດເພີນຢູ່ກັບການເອົາຟືນ ແລະເກັບ ດອກໄມ້ນັ້ນ, ເງົາຂອງກຸ່ມຄົນນຸ່ງສົ້ງເສື້ອລາຍສີໃບໄມ້ກໍ່ຄ່ອຍຄືບຄານເຂົ້າ ມາດັ່ງຕົວແມວຈອບຄຸບໜູ. ທັນທີທັນໃດ ສຽງບໍ່ຄຸ້ນເຄີຍຫູກໍແຜດກ້ອງຂຶ້ນ ກັດກິນບັນຍາກາດທີ່ສົດໃສຂອງທັງສອງໃຫ້ເຫລືອໄວ້ພຽງຄວາມເຄັ່ງຕຶງ ແລະຫວາດພະຫວາ.

"ຢຸດ"

ແພງຈົນຕື່ນຍຸບຈົນພ້າຫລຸດມື, ນາງຄວາມີໄປກຳແຂນນ້ອງພ້ອມ ທັງງວາກໜ້າໄປຫາທີ່ມາຂອງສຽງແປກປະຫລາດນັ້ນ, ຄວາມຢ້ານກົວຄວາມຫວັ່ນເກງຕໍ່ເຫດການ ລົມຫັບກັບສັນຊາດຍານທີ່ມີປະຈຳຕົວຂອງມະນຸດ ມັນໄດ້ຮວມກັນເຂົ້າບັງຄັບໃຫ້ນາງຖືກຂາດຶງແຂນນ້ອງແລ່ນໜີ ເພື່ອຫລີກເວັ້ນເຫດການທີ່ໜ້າຢ້ານກົວນີ້.

"ຢ່າໜີ...ຢ່າໜີ...ຖ້າໜີຕາຍ" ຄຳສັ່ງເກືອດຫ້ານ ເດັດຂາດໝັ້ນອອກຈາກກ້ອງກົກໄຮໃກ້ໆກັບສອງເອື້ອຍນ້ອງປະມານ ໑໐ ແມັດ.ທະຫານນອກກົດໝາຍສີ່ຄົນໃນຊຸດເຄື່ອງລາຍທ່ຳທາຍ, ສຸບໝວກສີແດງຫຼ້ອນແກກແຊກໃກ້ຈະກາຍເປັນສີໃໝ່ແລ້ວ. ພວກມັນປະກອບອາວຸດຄົບມື ພ້ອມດ້ວຍເຄື່ອງສຳພາລະຮັບໃຊ້ສົງຄາມອື່ນໆອີກຫລາຍຢ່າງ. ພຽງພິບຕາດຽວເທົ່ານັ້ນ, ພວກອັບປີດັ່ງກ່າວກໍໄດ້ມາຢືນອ້ອມຂ້າງອ້ອມແອ້ວຂອງສອງເອື້ອຍນ້ອງ. ທຸກຄົນລ້ວນແຕ່ຈ່ອຍຜອມເຫລືອງລ່າຈົນເກືອບຄືຂີ້ໝິ້ນ, ພວກມັນຄົງອຶດຫິວ ແລະ ຖືກເປັນອາຫານອັນມີລົດໂອຊະແກ່ພວກຂັ້ນ, ຍຸງ,ທາກ, ເຫລືອກຕະຫລອດເຖິງໝັດເມັ້ນ ເພື່ອບູຊາອຸດົມການອັນບ້າງບໍ່ງ. ເງິນໄດລາ ເງິນບາດທີ່ຊື້ເອົາຊີວິດ ແລະ ຄວາມມັກໃຫຍ່ໄຝ່ຝັນນັ້ນບໍ່ສາມາດມີຄຸນຄ່າໃນກາງປ່າດົງໄດ້ອີກ. ມີແຕ່ເປືອກໝາກເຫລັ້ອມ, ໃບຕົ້ວ,ໃບສະເມັກເທົ່ານັ້ນພໍຈະປະທັງຊີວິດຊຸກດັນໃຫ້ແຄວຂາອັນຈ່ອຍໆຄ້ຳເອົາເລົາ ຄືງ

ທີ່ຈູ້ມຕໍ່ເອົາຫົວໃຈຕາຍດ້ານອອກເຄື່ອນໄຫວລົບກວນບ່ອນທັ້ນບ່ອນນີ້ເພື່ອທຳລາຍຄວາມສະຫງົບສຸກຂອງປະຊາຊົນ. ໝວດເຄົາດຳດົກໜາຢາຍມະລຸງຕຸງນັງທົ່ວໃບໜ້າ, ເກືອບຢາກວ່າທຸກຂຸມຂົນບໍ່ມີຣອດບ່ອນຫວ່າງ. ພົນ ຜູ້ໃດກໍຫຍຸ້ງເຫຍີງຍາວຢຸ່ຣດຢ່ອນເຕະເຈະລົງເຖິງບ່າໄຫລ່, ເປັນຣາຍກ່ວາຈະນິແມນມານຈ້ຳ. ແກນຕາແຕ່ລະໜ່ວຍຖືກຈູກເຊືອງໄວ້ໃນໂກນກະດູກລຸ່ມຄິ້ວທີ່ສຣູບຈົ້ມປານຂົນໝູປ່າ. ມັນເຫລືອດໄຫລໄປມາເປັນສີຕີ່ນງວາດ ໃດວາດໜຶ່ງ ບົ່ງບອກວ່າມີຄວາມປ່ານກົວທີ່ເຊື່ອງຈ້ອນໃນຄວາມ ອາດ ຫານຈອມປອມນັ້ນ. ສ່ວນແພງຈັນ ມີອາການສັ່ນເຈັນເໝືອນລູກນົກທີ່ຖືກ ຝົນຣວຍຣຳ. ນາງຢຸດນັ້ງຢູ່ກັບທີ່. ທະຫານສາມຄົນເມື່ອເຂົ້າມາໃກ້ແລ້ວ ກໍຖອຍອອກໄປຫາບອນກຳບັງກຣຸມພອມ ປະຕິບັດຕາມການໃຈຫົວງົກຂອງອີກຜູ້ໜຶ່ງ ເຊິ່ງມີທ່າທາງສະແດງວ່າເປັນນາຍ.

"ພວກສູມາຫຍັງ?" ປະໂຫຍກທຳອິດໂດດອອກຈາກປາກໄປຂອງ ທະຫານໜໍໜຶ່ງຢືນຢູ່ເຊິ່ງໜ້າ...ແຕ່ຄຳຕອບຈາກສອງເອື້ອຍນ້ອງທີ່ຢືນຢູ່ກົງກັນຂ້າມມັນຍັງບໍ່ທັນມີ. ນອກຈາກສາຍຕາດຳຂອງເຂົາເຫລົ່ານັ້ນ ທີ່ ເພັ່ງເລັງໃສ່ໃບໜ້າອັນໂຫດຣາຍພວກທະຫານຣັບຈ້າງຢ່າງບໍ່ປະວາງ. ເຄື່ອງນຸ່ງແບບນີ້, ທ່າທີຈັ່ງຊີ້ ນາງເຄີຍເຫັນມັນຍາມຍັງນ້ອຍ...ເຄີຍເຫັນ ມັນເຂົ້າໄປກໍ່ກວນ ທຳລາຍຄວາມສະຫງົບສຸກຂອງປະຊາຊົນ ເຂດປົດປ່ອຍ. ພວກເພັດຈະຄາດ, ພວກໜານພານ, ພວກມີໂຫດກຳ, ພວກພັດຖິ່ນບໍ່ມີຫົວຖິ່ນປາຍນອນ, ຄິດມາລັກງົນນາງພໍ່ຢາກຣົບໂຣມເອົາຄວາມເວົ້າເຈັບໆ ນີ້ປາດໃສ່ໃບໜ້າມັນແທງ ແຕ່...

"ພວກສູມາຫຍັງ...ບໍ່ໄດ້ຍິນຫວະກູຖາມ" ປະໂຫຍກທີ່ສອງຈອນຂຶ້ນອີກ ແຕ່ຄຳຕອບກໍຍັງຄົງນິດຈອຍນອຍເໝືອນເດີມ.

"ສູມາຫຍັງ...ສູມາຫຍັງ?" ມັນຍ່າງເຂົ້າມາໃກ້ງ ພ້ອມທັງຈັບແຂນແພງຈັນຊຸກໄປມາ, ອີກມືຂ້າງໜຶ່ງກໍຄືວໃສ່ປືນນ້ອຍທີ່ເໜັບແອວແລ້ວ ຂູ່

ຂວັນຕື່ນຕາມສັນດານຄົນພານ.

"ບໍ່ຍອມບອກກູຈັ້ນຫວະ" ຝາມືພອມຈະໂຍນເຂົ້າໃສ່ໃບໜ້າ ແຕ່ແພງຈັນເອົາຄຳເວົ້າລົດຝາມືນັ້ນໃຫ້ຢູ່ຄາທີ່.

"ຂ້ອຍມາຫາຟືນ"

"ມາຫາຟືນ ມຶງກະບອກກູຄືງຕື່ ມຶງເຂົ້າໃຈບໍ່ບ່ອນນີ້ແມ່ນເຂດກູ ຫວງຫ້າມ...ຈັກໜ່ອຍແລ້ວຕາຍລາ ຢ່າຫາວ່າ ບໍ່ບອກ"

"ຮື!" ແພງຈັນບໍ່ພໍໃຈຕໍ່ຄຳເວົ້າທີ່ໂວຫານອວດດີ ໂດຍສະເພາະ ຄຳເວົ້າ "ເຂດຂອງກູ"

"ແຕ່ນີ້ໄປບ້ານໄກບໍ" ໜໍ່ທະຫານຖາມຕໍ່.

"ໄກເຕີບ..."

"ໄກຈຳໃດ"

"ອອກຈາກນີ້ໄປຫາໂສກຕາແຍງ, ອອກຈາກໂສກຕາແຍງໄປຫາ ທົ່ງປົ່ງ, ອອກຈາກນັ້ນແມ່ນທົ່ງນາ ແລ້ວກໍທົ່ງນາ..."

"ເຈົ້າງ...ສູຄືຊິບໍ່ຈັກຄິດໄລ່ຫຍັງດອກ"

ທະຫານຮັບຈ້າງເຖົ້າ ໃຊ້ສາຍຕາໄກ່ປ່າ ແນມລອດໄປທຸກຈອກທຸກແຈຂອງປ່າ ເພື່ອແວດລະວັງຕໍ່ຄວາມຕາຍທີ່ອາດຈະແລ່ນມາແກ່ລາກເອົາຊີວິດມັນ.

"ຢູ່ບ້ານສູ ມີທະຫານກອມມູນິດບໍ່"

"ບໍ່ມີ" ນາງຕອບ ທັງແກວ່ງຫົວປະຕິເສດ.

"ກອງຫລອນເດ ມີບໍ່"

"ອື...ບໍ່ມີ"

"ພະນັກງານ ອື່ນໆເດ"

ແພງຈັນຢືນແກວ່ງຫົວປະຕິເສດໃນທ່າທີປົກກະຕິ, ທີ່ຈິງແລ້ວສິ່ງທີ່ພວກມັນຖາມຫາ ລ້ວນແຕ່ມີທັງນັ້ນ ເພາະນາງເຂົ້າໃຈວ່າ ພວກນີ້ແມ່ນ ພວກ

ຫມາພານ, ພວກພັດຖິ່ນ ເຊິ່ງພວກເຂົາຍັງບໍ່ເຂົ້າໃຈເຖິງຄວາມ ປະ ລາ ໄຊອັນເຈັບແສບ ແລະ ຍັງວິນວິວຄິວມືດວ່າຈະກັບຄືນມາສ້າງຟ້າ ສ້າງໄຟ ໄດ້ອີກ. ດັ່ງນັ້ນ ນາງຈຶ່ງບໍ່ອາດສາມາດບອກສິ່ງທີ່ແສນແພງກວ່າຊີວິດ ໃຫ້ ພວກກຸ່ມໂຈນອັນຕະພານດັ່ງກ່າວຊາບ. ນອກຈາກຄຳຖາມທີ່ຕັ້ງໃຫ້ ກັບຕົນ ເອງວ່າ "ຊິຈັດການກັບພວກນີ້ແນວໃດ?"

"ພວກສູ!" ມັນຮ້ອງສຸດສຽງ ແລະ ກັດແຂ້ວກາດໆ. ແພງຈັນຕື່ນຢຸບ ຫມົດແຮງ ແລວຖອຍຫາງອອກ ໔-໕ ກາວ.

"ພວກສູ...ກູຖາມບໍ່ອອກບໍ່ເຂົ້າ...ກູຮູ້ມຶງແລ້ວ ມຶງຄືລູກກອມມູນິດ, ຈັດການມັນ" ສົ້ນສຽງສັ່ງ ຜູ້ເປັນນາຍ, ພູມໄມ້ຫາງຂ້າງໄຫວຕິງຍິບຍາບ ລູກສະຫມຸນຫຸ້ມເພື່ອບ, ແຕ່ບາງຄົນກໍເຮັດສີບໍ່ຫົວຈາເທົ່າໃດ ເພາະ ການ ຈັດການກັບເດັກນ້ອຍ ໑໔-໑໕ ປີມັນບໍ່ພໍຈະຕອບສະຫນອງຈຸດປະສົງມັນໄດ້ ສິ່ງທີ່ມັນຕ້ອງການກໍຄືເຂົ້າປາອາຫານ ເພື່ອເປັນທຶນຮອນໃຫ້ຊີວິດ ພໍມີ ໂອ ກາດແກ້ຍາວການຕາຍຕື່ນອີກໄລຍະຫນຶ່ງ. ປາຍປືນທຸກກະບອກຖືກເດ່ ມາ ໃສ່ຈຸດດຽວ ໂດຍມີສອງເອື້ອຍນ້ອງເປັນເປົ້າຫມາຍ. ຖ້າມັນລັ່ນ "ໂປ້ງ" ອອກມາເທື່ອໃດແນ່ນອນມັນກໍຈະຍາດເອົາລົມຫາຍໃຈຂອງສອງຄົນຢ່າງບໍ່ມີ ປານີປານອມ.

ຄຳພັນຈັບແຂນເອື້ອຍຫມົດແຮງ ພ້ອມທັງສັ່ງສຽງຮ້ອງໄຫ້ຟົດສະຫມັ່ນ. ທະຫານຫນໍ່ຫນຶ່ງປຸ້ນເອົາແພຢັດເຂົ້າປາກຈັນສຽງຮ້ອງໄຫ້ນັ້ນມິດໄປກັບບາດ ໃນສະພາບທີ່ຫນ້າສືວຫນ້າຂວານຈັ່ງຊີ້ ແພງຈັນຄິດພໍ້ເຖິງຄຳສັ່ງຂອງລຸງປະ ທານ " ຝ ຮັກ ມ ຈົວ". ນາງຕັດສິນໃຈຢ່າງແນ່ນອນວ່າ "ບໍ່ມຶງ ກໍກູ"

"ພວກສູຫລີກໄປ...ກູຊິຈັດການອີ່ນີ້ເອງເກີນວ່າມັນຫົວແຂງ... ມັນ ຊິລອດມືກູບໍ່...ຈຳນີ້ພໍດີຂຶບເພາະ" ນໍແຕ່ເຖົ້າຫົວງູອອກຄຳສັ່ງ,ພວກລູກ ນ້ອງທັງສາມກໍຍ່າງກ່ອມກ້ອຍເຂົ້າພຸ່ມທັງອຸ້ມເອົານ້ອງຂອງແພງຈັນເຂົ້າໄປ ລີ້ນຳ.

"ພວກເຈົ້າຈິເຮັດແນວໃດກໍເຊີນໂລດ ແຕ່ຢ່າລືມວ່າ ເຈົ້າກໍແມ່ນ ຄົນລາວຄືຂ້ອຍນີ້ແຫລະ"

ໝໍເຖົ້າຫົວງູບໍ່ຟັງຟ້າ ຟັງໄຟ ມັນກືນນ້ຳລາຍເອືອກລົງຄໍບາດ ໜຶ່ງ ແລ້ວພັບແຂນຂຶ້ນກາຍສອກ. ຄວາມຕັ້ງໃຈແມ່ນມຸ້ງຫວັງຈະກັດຫຍ້ຳ ພົມມະຈາລີໄວ ໑໔ ປີຂອງນາງໃຫ້ຢູ່ຄາປາກ. ແພງຈັນໃຊ້ຕີນຄວາໃສ່ ກ້ອນຫີນໝາຍຈະໃຊ້ເປັນອາວຸດໂຍນໃສ່ປາກໝໍເຖົ້ານັ້ນເມື່ອໂອກາດເໝາະສົມ, ແຕ່ນິ້ວມືອັນໂຫຍຮຽວຍື້ນມາກຳແຂນນາງແໜ້ນພໍປານກັບແກ້ຈັບຟາເຂືອນ . ມັນໂນ້ມນ້າວສຸດແຮງ ໝາຍຈະໃຊ້ແພງຈັນກະແທກລົງດິນ ແລະ ກໍຈະລຸບຫັນທີຕາມແບບສະບັບນັກເລງ, ແຕ່ຕົວຈິງມັນກໍບໍ່ງ່າຍຄືຄຳຄາດຄິດ ດອກ. ນາງຟົດຕົວອອກໄວປານສາຍຟ້າແມບ. ຕໍ່ມາກຳປັ້ນທີ່ບໍ່ປອກເປືອກ ກໍລືອເຂົ້າມາໃສ່ໃບໜ້າເແພງຈັນໝົດເຫື່ອໝົດແຮງ, ຖ້າຖືກເປົ້າ ນີຫວັງ ຈະຕ້ອງສະຫລົບ, ແຕ່ນາງຕັ້ງສະຕິໄດ້ຈຶ່ງຫລົບວັບບາດໜຶ່ງ ອັນເຮັດໃຫ້ ໂຕມັນເຊວແປ່ວແວ່ງໄປ.

"ບໍ່ໄດ້ແນວໜຶ່ງກູຈິເອົາແນວໜຶ່ງ...ກ່ອນມື້ງຈິຕາຍມືງຕ້ອງ ເປັນຂອງກູ" ໝໍຈິ່ມພຶມພຳຊູດຊຣວ ແລ້ວກໍໂດດຊຸກແພງຈັນ. ການຕໍ່ສູ້ດອຍການກະຊາກລາກດຶງເກີດຂຶ້ນຢ່າງຊຸນລະມຸນວຸ່ນວາຍ. ຄວາມໝົດຫວັງໃນການປົກປ້ອງຊີວິດແພງຈັນໄດ້ເຄື່ອນຍ້າຍເຂົ້າມາໃກ້ເຕັມທີ. ລົມຫາຍໃຈທີ່ເຄີຍມີບໍ່ຮູ້ວ່າມັນໄປທາງໃດ. ນາງຮູ້ສຶກຕີບຕັນ, ເຫື່ອແຮງກຳລັງວັງຊາຄື ຈັ່ງວາລາຖອຍໄປໝົດ, ມີແຕ່ຄວາມອິດເມື່ອຍກາວເຂົ້າມາແທນເທົ່ານັ້ນ.ສາຍຕານາງຮູ້ສຶກມືດມົວ ແລະ ມອງບໍ່ເຫັນສິ່ງໃດ, ໃນທີ່ສຸດແພງຈັນກໍຖືກ ກະຊາກລົ້ມລົງດິນຈົນລົດແອ້ກງ.

"ໂອ້ຍ"

ນີ້ແມ່ ເວົ້າດີບໍ່ມັກ" ສຽງເຂາະໃສ່ຄາຍອອກຈາກປາກມັນອີກ ເທື່ອໜຶ່ງ ເມື່ອເຫັນນາງລົ້ມລົງດິນ.

24/VII

"ຫລ້າເອີຍ ມາເປັນຂອງອ້າຍສາ" ສຳນຽງເຂາະເຈາະ ເປັນຕາສົບໂຂກຫອຍຕິດຕາມມາທັງໆທີ່ມັນເອງເມື່ອຍພໍຕາຍ. ຄວາມຫວັງທີ່ ແລກມາດ້ວຍເຫື່ອແຮງຄົງຈະປະສົບພົບພໍ້ບໍ່ເທົ່າໃດນາທີຕໍ່ໜ້າ. ນ້ຳລາຍ ຂີ້ຟູມຟາວແຫ່ງຄວາມຫິວໂຫຍຣິກກະຈາຍຟຸ້ງອອກຈາກຮີມສົບໜາໄປຕິດປີກຂອງໜາພານບ້າຕົນຫາພໍປານນ້ຳລາຍໝູທີ່ຣິກມັດຕາກແດດ. ມັນຫຍັບເຂົ້າມາໃກ້ໆ ແລະ ໂຍບຕົວລົງ. ແພງຈັນຮວບຮວມເອົາກຳລັງແຮງທັງໝົດ ທີ່ມີຢູ່ໃນຮ່າງກາຍໄວ້ລໍຈັງຫວະທີ່ເຫັນວ່າສົມຄວນ.

"ຢ່າໄດ້" ແພງຈັນຮ້ອງຂຶ້ນໝົດແຮງພ້ອມດຽວກັນ ຕີນຂອງນາງກໍຢັນໃສ່ຫວ່າງຂາໝໍ່ເຖົ້າອັນເຮັດໃຫ້ມັນເອົາຫລັງໄປຈົນກົກໄມ້ດັງອຶ. ໂດຍບວກກັບພົນສະທ້ອນຈາກຕີນຢັນຖືກໜາກອັນຄະມັນຈຶ່ງລົ້ມລົງນອນອິດູໂກ່ໂຂ່ຢູ່ພື້ນດິນດົ້ນເຕີບ. ແພງຈັນລຸກຂຶ້ນປັດຂີ້ຝຸ່ນອອກຈາກສິ້ນເສື້ອ. ໝໍ່ເຖົ້າມາຍເຫັນເກີດຄວາມແຄ້ນໃຈຕໍ່ນາງທີ່ນອກຈຸດສຳຄັນເຮັດໃຫ້ຄວາມ "ຢາກ " ຕ້ອງຫາຍເຂົ້າກີບເມກ. ມັນຈົກປືນນ້ອຍອອກຈາກແອວ ໝາຍຈະປິດຊີບແພງຈັນ. ແຕ່ລູກນ້ອງສອງຄົນທີ່ກົບດານຢູ່ພຸ່ມໄມ້ເຂົ້າມາປ່າຍປືນອອກກ່ອນ.

"ຢ່າ...ຢ່າໃຫ້ມີສຽງປືນແຕກ...ທ່ານກອມມັງດັງ ຍັງເຊື່ອຢູ່ບໍ ວ່າຈະໄວ້ວາງໃຈຕໍ່ສະພາບບອນນີ້"

ປືນຖືກເກັບມ້ຽນເຂົ້າຊີບ ແລະ ໝໍ່ໜຶ່ງເວົ້າຕໍ່:

"ຈະເຮັດແນວໃດກໍແລ້ວແຕ່ ທ່ານກອມມັງດັງ...ແຕ່ຢ່າລືມວ່າ ກວັນແລ້ວທີ່ບໍ່ໄດ້ກິນເຂົ້າ. ຈະກັບອຸບົນຄືນກໍຕ້ອງຕາຍ ເພາະການຍ່າງ ຂີ້ລ້າຍກໍ ໑໕ ຫາ ໒໐ ວັນ"

"ຈະເຮັດແນວໃດແລ້ວອີບເຮັດ ຈົກໜ່ອຍມີບັນຫາ" ທະຫານໝໍ່ໜຶ່ງອອກຄຳເຫັນ.

"ເອົານີ້ ໃຫ້ມັນ" ຜູ້ເປັນນາຍຊີ້ໃສ່ມີດ.

"ບໍ່ໄດ້...ກອນຊິຈັດການມັນຕ້ອງສ້າງສິ່ງເປັນພົນປະໂຫຍດແກ່ ພວກ

ເຮົາ" ທະຫານໜຸ່ມທີ່ສອງອອກຄຳເຫັນ.

"ເຮັດແນວໃດ" ນາຍມັນຖາມຄືນ.

"ໃຫ້ມັນໄປຈອກເຂົ້າມາໃຫ້...ເຮົາເອົານ້ອງມັນເປັນໂຕປະກັນຫ້າມບໍ່ໃຫ້ມັນໄຂຄວາມລັບແກ່ໃຜຟັງ...ຖ້າມັນບອກນ້ອງມັນກໍຕ້ອງຕາຍ. ເຊື່ອແນ່ວ່າວິທີນີ້ຈະໄດ້ຜົນດີ" ພວກມັນພາກັນເຮັດຈົ່ງລຶງບຶດໜຶ່ງແລ້ວກໍງຶກຫົວຮັບເອົາການຕົກລົງຢ່າງງ່າຍດາຍ.

ແພງຈັນລຸກຂຶ້ນຢ່າງບາດຕໍ່າບາດສູງ, ທ່າທາງຂອງນາງຍັງເຄັ່ງ ຂຶມເໝືອນເດີມ. ໄຟແຄ້ນລຸກໄໝ້ເປັນແປວໃນຫົວໃຈນາງ. ຖ້າມີອິດທິ ລິດນາງຈະຕ້ອງມ້ຽນຄາບ ອາບໂຕພວກນີ້ບໍ່ໃຫ້ເຫລືອແມ່ນແຕ່ກະດູກ, ສາຍຕານາງຈຸດສຸມໄປຍັງພວກສາມຄົນທີ່ສິ້ນທະນາກັນ ແລະ ອະດີດແຫ່ງຄວາມແຄ້ນກໍສະທ້ອນມາເຖິງມັນສະໝອງ...

× ×

×

ສຽງກໍາປະນາດຂອງວັດຖຸລະເບີດແຜດກ້ອງໄປທົ່ວທິດແດນສາລະວັນ, ຄັ່ງມັນຈະກືນກິນຊີວິດ ແລະ ຈັບສິນຂອງປະຊາຊົນບໍ່ໃຫ້ເຫລືອໄວ້ແຕ່ ພົງທຸລີ, ຄວັນສີດຳລອຍເປັນປຸ່ມກຽວກັນຂຶ້ນສູ່ກາງຫາວ ປຽນສະພາບ ທ້ອງຟ້າໃຫ້ຕົກຢູ່ໃນຄວາມມືດມົວ."ໂອ ສົງຄາມ...ໂອ! ຄວາມດັບສູນ" ໄຟມະຫາຊຸບາດລາກດຶງເອົາເຮືອນຊານບ້ານຊ່ອງ ແລະ ຄວາມສວຍງາມ ຮົ່ງມີຂອງບ້ານເກີດເມືອງນອນເຂົ້າສູ່ໄສ້ພຸງ...

ເຫດເກີດຂຶ້ນມາແລ້ວຕັ້ງສາມມື້...

ແມ່, ແພງຈັນ ແລະ ນ້ອງຍັງຄົງຍັດຢຽດບຽດສີກັນໃນຂຸມ ຫລົບໄພ. ໃຈຂອງທຸກເປັນແມ່ບໍ່ສາມາດເດົາອອກໄດ້ວ່າມີຫຍັງເກີດຂຶ້ນ. ອາການຂອງເພິ່ນກະວາງກະວົນ. ເມື່ອສິ້ນສຽງປືນ ແລະ ສຽງບຶ້ມ ເພິ່ນຄ່ອຍປ່ອນຫົວເງີຍອອກຈາກຂຸມເທື່ອໜຶ່ງ ເພື່ອທອດສາຍຕາໄປຍັງ ບ້ານເຮືອນ ທີ່ຕັ້ງຢູ່

ແຄມເຊ.

"ໂອ! ໄໝ້ແລ້ວ" ສາຍຕາດຳຄູ່ນັ້ນຈ້ອງມອງຢ່າງບໍ່ພັບ ແລະບັນທຶກເອົາເຫດການອັນແສນໂຫດຮ້າຍນັ້ນເຂົ້າສູ່ຫ່ວງແຫ່ງຄວາມຊົງຈຳ. ນ້ຳໃສໃສຄ່ອຍໄຫລລົ້ນລົງຈາກເບົ້າຕາຫລືເພີ່ນຫວງຫາໃຜຜູ້ໜຶ່ງທີ່ຍັງບໍ່ທັນມີໜ້າໃນຂຸມຫລົບໄພ.

ຍົນຂ້າເສິກ ແອຟ ໑໐໔ ແຫກທ້ອງຟ້າມາຈາກທິດຕາເວັນຕົກ, ມັນສົກທິ້ວລົງແລ້ວກໍທະຍານຂຶ້ນພາຍຫລັງຫວ່ານຄວາມຈິບຫາຍລົງສູ່ແຜ່ນດິນ . ສຽງປືນນ້ອຍປືນໃຫຍ່ພາກພື້ນດິນແຕກຂຶ້ນປານຫ່າຝົນ ພ້ອມໆກັນກັບຍິນ ນັ້ນແສວລົງ. ໄຟລຸກວາບບາດໜຶ່ງທີ່ກົ້ນຍົນລຳນັ້ນ ແລະ ພຽງພິບຕາດຽວມັນກໍຕັ້ງທິ້ວພັກຫົວລົງສູ່ພື້ນດິນຈົນສະເທືອນໄປທົ່ວຂຸມຫລົບໄພ ອັນເຮັດໃຫ້ ຂີ້ດິນປາກຂຸມເຮຍລົງມາ. ຕິດຕາມກັບສະພາບດັ່ງກ່າວກໍຍັງມີສຽງປືນ ນ້ອຍດັງຂຶ້ນປະປາຍໄປທົ່ວບໍລິເວນອັນເປັນການປະທະລະຫວ່າງກຳລັງປະຕິ ວັດ ແລະ ສັດຕູ ເຊິ່ງຫວ່າງເຊົ້ານັ້ນກໍຕ່ອຍກັນດຸເດືອດກັບກອງຫລອນບ້ານ.

ຊ່ວງຕໍ່ມາ, ເງົາກຸ່ມຄົນທີ່ເຄື່ອນຍ້າຍຕາມຊາຍປ່າກ້ຳໃຕ້ກໍໂຜ່ຂຶ້ນ. ພໍ່ເຖົ້າປຸ້ຍ ຜູ້ເຊິ່ງຖືກມອບໝາຍເປັນຜູ້ດູແລ ຜູ້ຍິງ ແລະ ເດັກນ້ອຍຢູ່ຂຸມຫລົບໄພຕາງພວກຜູ້ສອນຜູ້ຊາຍທັງຫລາຍທີ່ໄປເຮັດວຽກກັບທະຫານທ້ອງຖິ່ນເຝົ້າມອງຕິດຕາມການເຄື່ອນຍ້າຍນັ້ນຢ່າງຈົດຈໍ່.

"ຫ່າ...ຄົນເຮົາຈັ້ນຕະຫວ່າ" ພໍ່ເຖົ້າປຸ້ຍທ້ວງຂຶ້ນໝົດແຮງ ທີ່ເຫັນອ້າຍນ້ອງຫາມຄົນເຈັບເຂົ້າມາສູ່ບ່ອນປອດໄພ.

"ຮວາຍ! ບັກສາຍເປັນຫຍັງ" ພໍ່ເຖົ້າຮ້ອງສຽງຫລົງ ແລ້ວ ລຸກຍ່າງໄປຫາສາມຄົນນັ້ນ...

"ແມ່ແພງເອີຍ" ສຽງອິດອ່ອນໂຮຍແຮງຂອງຜູ້ບາດເຈັບເວົ້າ ອອກ, ທ່າທາງຂອງເຂົາຢູ່ໃນສະພາບທີ່ບໍ່ໜ້າໄວ້ວາງໃຈ ແລະ ໃຜໆກໍເຝົ້າ ຊອມເບິ່ງອາການ, ໂດຍສະເພາະ ແພດປະຈຳກອງຮ້ອຍທີ່ຕິດຕາມເອົາ ອອກ

ຈາກສະໜາມນັ້ນ ໄດ້ເຝົ້າເບິ່ງອາການໄຫລຂອງນ້ຳເຊໂລມສູ່ຮ່າງກາຍຜູ້ເຈັບດ້ວຍຈິດໃຈຮັບຜິດຊອບສູງ. ເພິ່ນລ້າງບາດແຜທີ່ຖືກສະເກັດບົມ ຫລັງຈາກນັ້ນກໍໃສ່ຢາ ແລະ ເອົາຜ້າພັນ, ພ້ອມດຽວກັນ ເພິ່ນກໍຫັນໄປ ລະດົມແມ່ຂອງແພງຈັນທີ່ກຳລັງປ່ອຍສຽງສະອື້ນ.

"ເຮັດໃຈດີໆ ອາການຂອງອ້າຍຫາກຊິຄ່ອຍດີຂຶ້ນດອກ. ທາງ ກອງຮ້ອຍໄດ້ສົ່ງໂທລະເລກໄປຍັງກອງບັນຊາການດ້ານຮົບ ເພື່ອເອົາລົດມາຮັບອ້າຍໄປປິ່ນປົວຢູ່ໂຮງໝໍເຂດພຸ້ນ"

ແມ່ແພງຍັງຄົງນ້ຳຕາລິນອາບໜ້າ ແລະ ປ່ອຍສຽງສະອື້ນຢູ່ຂ້າງ ຜົວແພງ, ສ່ວນແພງຈັນໄດ້ແຕ່ແນມເບິ່ງໜ້າແມ່ ແລະຮ້ອງໄຫ້ນຳແມ່ເໝືອນກັນ.

ເລືອດສີແດງຂອງຜູ້ບາດເຈັບໄຫລຊຶມອອກບໍ່ຢຸດເຊົາ, ເວລານີ້ ທຸກສິ່ງທຸກຢ່າງຢູ່ໃນພາວະບໍ່ໜ້າໄວ້ວາງໃຈ. ຫົນທາງແຫ່ງການມີຊີວິດ ລອດຂອງພໍ່ແພງຈັນຖືກໄກອອກທຸກໄລຍະ. ໜ້າຕາຜູ້ບາດເຈັບລ່າເຫລືອງເຂົ້າທຸກທີ, ດວງຕາທັງສອງເບື້ອງຄ່ອຍຂາວນານ.

"ຈົ່ງເບິ່ງລູກດີໆເດີ... ບັນດາສະຫາຍຈົ່ງສືບຕໍ່ພາລະກິດຂອງ ພວກເຮົາ"

ລົມຫາຍໃຈຖືກສູບເຂົ້າປອດບາດຫ່າງໆທັງຝືດເຄືອງ ແລະ ໃນທີ່ສຸດ. ... ສຽງຮ້ອງໄຫ້ຂອງແມ່ລູກ ແລະ ຜູ້ອື່ນໆທີ່ຢູ່ໃນເຫດການສົ່ງອອກ ມາຈາກປາກຂຸມ, ພວກຜູ້ຊາຍທັງສາມທີ່ນຳພໍ່ແພງຈັນມາສົ່ງພາກັນ ເປັ່ງສາຍຕາແຫ່ງຄວາມຄຽດແຄ້ນຢ່າງບໍ່ພົບ ເໝືອນດັ່ງຈະບອກໃຫ້ຜູ້ທີ່ຊື່ "ສາຍ" ວ່າ "ເຮົາຈະສືບຕໍ່ພາລະກິດ, ເຮົາຈະແກ້ແຄ້ນແທນສະຫາຍຮ່ວມ ອຸດົມການດຽວກັນ". ເຂົາເຈົ້າກັດແຂ້ວ ແລະ ເລັ່ງໄຟແຄ້ນນັ້ນໄປຍັງ ສະໜາມຮົບອີກເທື່ອໃໝ່.

x x

"ມຶງເຂົ້າມານີ້...ຖ້າບໍ່ຢາກຕາຍ" ທະຫານໜໍໃໝ່ຖາມຂຶ້ນ, ແຕ່ແພງຈັນຍັງຢືນບໍ່ຕິງ...

"ມຶງຢືນຊິວຢູ່ຫັ້ນເຮັດຫຍັງ...ເຂົ້າມາຖ້າບໍ່ຢາກຕາຍ"

ແພງຈັນສະບັດໜ້າບາດໜຶ່ງ ແລ້ວເກັບຄວາມຫລັງມ້ຽນໄວ້ໃນຄວາມແຄ້ນເທື່ອໃໝ່.

"ກູຈະມີທາງໃຫ້ມຶງເລືອກສອງຢ່າງຄື ຕາຍ ແລະ ຍັງ,ຖ້າມຶງບໍ່ຢາກຕາຍ ມຶງຕ້ອງຊອກເຂົ້າຊອກຂອງກິນມາໃຫ້ກູ ພາຍໃນຊົ່ວໂມງໜຶ່ງ ຂ້າງໜ້າ...ສ່ວນນ້ອງມຶງກູຈະບໍ່ປ່ອຍໃຫ ຫາກວ່າເຂົ້າປາອາຫານບໍ່ມາ ຮອດກູ... ແລະ ພິເສດ ຖ້າມຶງໄຂຄວາມລັບໃຫ້ຜູ້ອື່ນຟັງ ນ້ອງມຶງຈະຕ້ອງຖືກຕາຍ ແລະ ມຶງເອງກໍດີກັນ"

ແພງຈັນ ຢືນຄຶດຢູ່ບຶດໜຶ່ງ" ຈັ່ງຊັ້ນມັນກໍດີແລ້ວເດ" ນາງຄຶດແລະຍິ້ມຢູ່ໃນໃຈ.

"ເປັນໃດ ມຶງຊິຮັບບໍ່" ມັນຢ້ຳຄວາມເກົ່າ.

"ຮັບ"

"ດີ...ຕ້ອງໄປເອົາໃຫ້ໄດ້ເຂົ້າສຸກ, ຂອງກິນ, ເຂົ້າສານອີກ ຈັກໝື່ນ..."

ແພງຈັນງຶກຫົວ...ແລ້ວກໍຖີກບາດຍ່າງກັບຄືນບ້ານ.

ບົນເສັ້ນທາງກັບຄືນບ້ານ, ມັນສະໝອງຂອງນາງທຳງານເໝືອນຖົ່ວກົບຈັກ...ມັນຄືສັດຕູຂອງຊາດ, ມັນຄືຜູ້ອາຄາດບາດໝາງປະຊາຊົນ,ແມ່ນຜູ້ລ້າງຮອຍແປ້ວຊີວິດແກນາງ ແລະ ນ້ອງເມື່ອອາຍຸໄດ້ ໔ ປີ. ເມື່ອສັນຕິພາບໄດ້ກັບຫລາວຕ່າວຄືນມາ ນາງຕິດຕາມແມ່ມາດຳລົງຊີວິດຢູ່ເຂດນີ້ເຊິ່ງເປັນທ້ອງຖິ່ນຂອງຜູ້ເປັນແມ່ ແຕ່ພວກອັບປີຊີກະບານກໍຍັງຕິດຕ້ອຍຫ້ອຍຕາມມາລ້າງພານອີກ.

"ຮື! ເຖິງເວລາແລ້ວທີ່ຈະຕ້ອງລ້າງແຄ້ນ...ເຖິງເວລາແລ້ວ ທີ່ຈະ

ຕ້ອງຄິດບັນຊີ...ມືກູ ຈະຕ້ອງບໍ່ມີມື້ງ" ໄຟແຄ້ນໃນດວງໃຈກຳລັງທົ່ວອອກ ເປັນແປວ ແລະ ກະເດັນແຕກເປັນໜັດແດງໄປທົ່ວໂຕ...

× ×

×

ປະມານໜຶ່ງຊົ່ວໂມງກ່ວາໆ...

ແພງຈັນພາຍທໍ່ເຂົ້າ ພ້ອມດ້ວຍເຄື່ອງກິນຍ່າງລັດມາທາງສາຍປ່າບ່ອນ ເກົ່າ, ສາຍຕານາງແນມກວດໄປເບິ່ງສະພາບນອກຕົວຢ່າງມິຄິມິຖັນ, ສິ່ງ ທີ່ນາງວາດພາບເອົາໄວ້ກໍຄືເສັ້ນທາງແຫ່ງຄວາມປອດໄພເມື່ອມີເຫດ ບັງ ເອີນເກີດຂຶ້ນ.

"ມາພີ້" ທະຫານພັດຖິ່ນໜຸ່ມໜຶ່ງຈີກປາກຮ້ອງຂຶ້ນ ແຕ່ບໍ່ແຮງປານໃດ. ມືຫາບີ້ວຂອງມັນກວັກວັບໆ, ຍ້ອນພາຍຸແຫ່ງຄວາມຫິວໂຫຍກຳລັງຄຸກຄາມຊີ ວິດທີ່ສ່ຽງໄພຂອງພວກມັນຢ່າງໜັກ. ທັງສີ່ຄົນ ຕ່າງກໍມາຊຸມແພງຈັນເປັນ ຈຸດດຽວ ໂດຍບໍ່ລໍໄລນຳອີຫຍັງທັງນັ້ນ.

"ຢູ່ໃສ ນ້ອງຂ້ອຍ" ນາງຖາມ.

ຫັ້ນເດ...ມາຫາເອື້ອຍເຈົ້າໄວ" ເສືອເຖົ້າຊີ້ບອກ ແລະ ຮ້ອງ ຄຳ ພັນມາຫາເອື້ອຍຢ່າງອາລົມດີ. ເວລາຢູ່ຕໍ່ໜ້າແອບເຂົ້າມັນກໍບໍ່ພິດຫຍັງກັບ ເສືອທີ່ຖືກຖອນແຂ້ວຖອນເລັບ.

"ຢ່າໜີໄປໃສໄດ໋" ມັນເວົ້າຖົ້ມທ້າຍ ກ່ອນຈະນັ່ງລົງໄຂແອບເຂົ້າ , ພວກທະຫານນອກກົດໝາຍພ້ອມກັນນັ່ງລົງ ແລະ ວຸ້ນວາຍຢູ່ກັບການ ແບ່ງ ຕອນ ປານວ່າຕືນຈຸ້ມພໍ້ຂອງມຸ້ກ.

ແພງຈັນ ຈັບແຂນນ້ອງຄ່ອຍຖອຍຕົວອອກຫ່າງປະມານ ໑໐ ແມັດແລະ ທຳທ່າຫລິ້ນຕົວຢູ່ບໍລິເວນນັ້ນ.

"ເຮີຍ! ຢ່າໜີໄດ໋ ຈັກໜ່ອຍຊິນອນລາງວັນໃຫ້"

"ເອີ" ແພງຈັນວິກຫົວຮັບຊາບ.

ເວລາໄລ່ເລ່ຍກັນພຸ່ມໄມ້ທີ່ຢູ່ຂ້າງກໍມີການໄຫວຕົວສ່ຳງກັບຖືກລົມພັດທຳມະດາ. ບໍ່ພໍບຶດສຽງຢຽບໄມ້ໂດກເບື້ອງຫລັງກໍດັງຂຶ້ນ.

"ເປາະ"

ພວກມັນຫລຽວຄືນຫລັງດ້ວຍຄວາມຕື່ນຕົກໃຈ, ແຕ່ມັນຊ້າເກີນໄປເສຍແລ້ວ.

"ຢຸດ! ຍົກມືຂຶ້ນ" ຫມໍເສືອເຖົ້າຄວ້າໄປຈັບເອົາປືນທີ່ອີງ ຂອນໄມ້ຂ້າງພຸ່ມບ່ອນມັນນັ່ງ.

"ປັງ" ນີ້ວມືກ້ຳຂວາທີ່ຈິ່ວຮ້າຍຂອງມັນກໍອຳລາໄປຢ່າງບໍ່ມີວັນກັບມາ. ມືທັງ ໒ ຍົກຊູຂຶ້ນເຫນືອຫົວ. ອ້າຍນ້ອງກອງຫລອນພາກັນກວດກາຢຶດເອົາອາວຸດຂອງພວກສັດຕູ ແລະ ມັດພວກມັນສົ່ງໃຫ້ເຈົ້າຫນ້າທີ່ດຳເນີນ ການຕາມລະບຽບ.

ແພວຈັນມີຄວາມພໍໃຈໃນການມີຍຸດທະສາດ ແບບນຽມ ຂອງອ້າຍນ້ອງກອງຫລອນແລະນາງເອງກໍມີຄວາມເອກອ້າງທີ່ໄດ້ປະກອບສ່ວນອັນ ນ້ອຍໆຂອງຕົນໃນວຽກງານຂອງຊາດ. ສີບນາງຕົວນຸ່ບງມີບງດັ່ງຈະບອກພວກປະຕິການວ່າ: "ການທີ່ຫມາຕາຍແລ້ວແອບຍໍຄໍຂຶ້ນເທົ່ານັ້ນຍ່ອມເປັນໄປ ບໍ່ໄດ້ຈັກເທື່ອ".

# ຄວາມເວົ້າຂອງຕ່າຮູ້

ໂດຍ - ແຄນຄະນະບຸດ

* ວັນທີ ໒ ທັນວາໄດ້ເປັ່ງລັດສະໝີອັນແຮງກ້າໄປທົ່ວ ແຜ່ນດິນລ້ານຊ້າງ. ສາທາລະນະລັດປະຊາທິປະໄຕປະຊາຊົນລາວໄດ້ກຳເນີດ ເກີດຂຶ້ນເດັ່ນສະຫງ່າຢູ່ໃນເວທີສາກົນ. ພັກປະຊາຊົນປະຕິວັດລາວຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວໄດ້ນຳເອົາເອກະລາດ ສິດເສລີພາບ ອິດສະຫລະພາບ ແລະ ຄວາມເປັນເຈົ້າຂອງປະເທດຊາດມາໃຫ້ປະຊາຊົນລາວຜູ້ມີມູນເຊື້ອດຸໝັ່ນອົດທົນ ແລະ ພິລະອາດຫານ, ພ້ອມນັ້ນ ປະຊາຊົນລາວທຸກທົ່ວໜ້າກໍໄດ້ພ້ອມຈິດພ້ອມໃຈອອກເຫື່ອເທແຮງກາຍເດີນໄປໃຫ້ຄົ້ນທາງຂອງພັກໃນພາລະກິດດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ.

ໃນພາລະກິດດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມໄດ້ເອົາການ ປະຕິວັດສາມປະການໄປພ້ອມໆກັນ (*) "ຍ້ອນສະພາບຕົວຈິງຂອງການ ປະຕິວັດໃນປະເທດເຮົານີ້ແຫລະ ພັກເຮົາຈຶ່ງໄດ້ຢືນຢັນຖານະບົດບາດອັນສຳຄັນຂອງການສຶກສາ ແລະ ມີແຜນນະໂຍບາຍວ່າການສຶກສາຕ້ອງໄປກ່ອນບາດກ້າວໜຶ່ງ" ດັ່ງນັ້ນປະເທດລາວໃໝ່ຈຶ່ງໄດ້ໄຂຂອບຟ້າເປີດກວ້າງໃຫ້ປະຊາຊົນລາວຜູ້ຫູໜວກຕາບອດຍ້ອນໄພກືກໜັງສືຂອງລະບອບເກົ່າໃຫ້ ກາຍເປັນຜູ້ທີ່ຫູແຈ້ງຕາໃສ ອ່ານໄດ້ຂຽນເປັນ. ລູກລັດຖະກອນ, ກຳມະກອນ,

ລູກຜູ້ທຸກຜູ້ຍາກ, ລູກຕາສີຕາສາ, ພໍ່ໄຮ່ຊາວນາ, ລູກລາວຫລານລາວທຸກທົ່ວໜ້າບໍ່ໄດ້ເປັນເດັກກາງຖະໜົນ ບໍ່ໄດ້ເປັນຄົນຕາບອດແຈ້ງ ພວກເຂົາມີໜ້າຢູ່ຕາມໂຮງຮຽນຕ່າງໆໃນທົ່ວປະເທດ. ພັກ ແລະ ລັດຍັງໄດ້ ເອົາໃຈໃສ່ລ້ຽງທຶນຮອນຊຸກຍູ້ສົ່ງເສີມ ເພື່ອໄປຮ່ຳຮຽນເອົາວິທະຍາສາດ ວິທະຍາການຈາກບັນດາປະເທດເພື່ອນມິດສັງຄົມນິຍົມ ແລ້ວນຳເອົາຄວາມ ຮູ້ເຫລົ່ານັ້ນມານຳໃຊ້ເຂົ້າໃນການສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງຂຶ້ນເປັນກ້າວໆ.

ໝາກຫົວໃຈຂອງລະບອບໃໝ່ໄດ້ຖະໜອມຫອມຮັກ ຫອບອູ້ມເອົາລູກຊາວນາໝາເຕົ່າຄືຂ້ອຍ, ຂ້ອຍຊຶ່ງແມ່ນໜຶ່ງໃນຈຳນວນພັນຈຳນວນ ໝື່ນຂອງນັກສຶກສາທີ່ຖືກສົ່ງໄປຮຽນທີ່ຕ່າງປະເທດ ຖ້າແມ່ນລະບອບເກົ່າແລ້ວຄືຈະເປັນຄວາມຝັນຫລາຍກວ່າ. ຫວ່າງເດືອນຫລັງນີ້ ຂ້ອຍໄດ້ກັບຄືນ ມາບ້ານເກີດເມືອງນອນ ພ້ອມດ້ວຍຄວາມສຳເລັດແຫ່ງຄວາມບາກບັ່ນ ພະຍາຍາມຂອງຕົວເອງກໍຄືຍ້ອນຄວາມເອົາໃຈໃສ່ສຸດຂີດຂອງຜູ້ໃຫ້ທຶນສຶກສາ.

ເມື່ອມາຮອດວຽງຈັນໃໝ່ໆ, ຂ້ອຍກໍພົບວ່າວຽງຈັນມີຫລາຍອັນ ແຕກຕ່າງເກົ່າ. ວຽງຈັນໝາກຫົວໃຈຂອງຊາວລາວໄດ້ປ່ຽນໂສມໜ້າ ໃໝ່ຢ່າງໄວວາ, ແຕ່ຂ້ອຍຂໍຍົກເອົາບາງອັນທີ່ຂ້ອຍໄດ້ເຫັນໃນມື້ທຳອິດທີ່ຂ້ອຍຂີ່ລົດຈາກເດີ່ນບິນເຂົ້າສູ່ຕົວເມືອງ, ຂ້ອຍແນມເຫັນປ້າຍປະກາດ,ປ້າຍຮ້ານຄ້າໂຄສະນາຕ່າງໆເປັນຕົວໜັງສືລາວ, ຂ້ອຍພົບເຫັນປ້າຍເຮືອນ ຝາກເດັກ, ປ້າຍໂຮງຮຽນບຳລຸງວັດທະນະທຳເມືອງສີໂຄດ, ປ້າຍ ໂຮງຮຽນສ້າງແພດແຂວງ, ປ້າຍໂຮງຮຽນການຄ້າວຽງຈັນ, ປ້າຍໂຮງຮຽນອະ ນຸບານ ແລະ ເຮືອນຝາກເດັກຂອງແຂວງ, ປ້າຍໂຮງຮຽນມັດທະຍົມສີຖານເໜືອ, ປ້າຍໂຮງຮຽນອຸດົມສີໂຄດ...ທີ່ຈໍ້ຊອງຂຶ້ນຕາມເສັ້ນທາງຫຼວງພະບາງ ແລະ ເສັ້ນທາງທີ່ໃກ້ຄຽງ ໃນຄາວລະບອບເກົ່ານັ້ນ ຂ້ອຍກໍເຫັນ ມີແຕ່ປ້າຍໂຮງຮຽນປະຖົມສົມບູນສີຖານເໜືອ, ປ້າຍໂຮງຮຽນປະຖົມສົມບູນ

ວັດໄຕນ້ອຍ ແລະ ສ່ວນຫລາຍແມ່ນປ້າຍໂຄສາ, ໂຄສາເທົ່ານັ້ນ.

ອັນນີ້ ມັນແມ່ນການເຕີບໃຫຍ່ຂະຫຍາຍຕົວຂອງການສຶກສາໃນ ລະດັບຕ່າງໆ ແຕ່ຂ້ອຍຍັງບໍ່ທັນກ້າໄດ້ວ່າ ເນື້ອໃນທີ່ສິດສອນນັ້ນເປັນແບບໃດ, ຈົນຮອດມື້ໜຶ່ງຂ້ອຍຈຶ່ງປະສົບພົບພໍ້ເຫດການອັນໜຶ່ງ ເຖິງວ່າບໍ່ແມ່ນ ເລື່ອງໃຫຍ່ຫລວງກໍ່ຕາມ ແຕ່ມັນກໍ່ສຳຄັນ ແລະ ມີຄຸນຄ່າສຳລັບຂ້ອຍ ຜູ້ຊຶ່ງ ຈະມີສ່ວນໃນຊະຕາກຳຂອງປະເທດຊາດໃນອະນາຄົດ.

ເມື່ອມາຮອດວຽງຈັນ ໃນເວລາລໍຖ້າຈັບຈ້ອນວຽກງານ ຂ້ອຍກໍ່ຖື ໂອກາດໄປຢາມພີ່ນ້ອງ ໝູ່ຄູ່... ມີແລງມື້ໜຶ່ງຂ້ອຍໄດ້ມີໂອກາດໄປ ເຮືອນຂອງຄົນຮັກຂອງຂ້ອຍ, ເທື່ອນີ້ເປັນເທື່ອທີສອງແລ້ວ ຫລັງຈາກທີ່ກັບມາແຕ່ຕ່າງປະເທດ ແລະ ເທື່ອນີ້ມັນກໍ່ແມ່ນເທື່ອທີ່ຂ້ອຍຍັງຫອບເອົາວາດຊົງແບບເຄີຍໄວ້ຊົງທີ່ຕ່າງປະເທດນັ້ນໄປເຮືອນນັ້ນອີກ. ຄົນໃນຄອບຄົວຂອງນາງກໍ່ຕ້ອນລັບຮັບລົມດ້ວຍໄມຕີຈິດອັນດີ ໃນຖານຮູ້ຈັກຮັກແພງກັນ. ພໍ່ແມ່ ຂອງນາງກໍ່ຮ່ວມໂອ້ລົມນຳ; ເພິ່ນໄດ້ຖາມຂ່າວຄາວ ຖາມເຖິງວຽກງານ ການຮ່ຳຮຽນ ແລະ ຊີວິດຢູ່ຕ່າງປະເທດ, ແຕ່ບໍ່ດົນເພິ່ນກໍ່ຖອນຕົວ, ສຸດທ້າຍກໍ່ເຫລືອແຕ່ຂ້ອຍກັບນາງທີ່ເວົ້າຄຳມ່ວນອວນຄຳລົມຕໍ່ກັນຢ່າງຄຶກອຶກຄຶກໃຈ.

ລົມກັນບໍ່ເທົ່າໃດ, ອິນທະຫວາ ຜູ້ເປັນນ້ອງສາວຂອງ ວຽງຂຶນ ກໍ່ຈູງແຂນເດັກນ້ອຍອາຍຸປະມານສີ່ປີ ຊຶ່ງແມ່ນໜໍ່ແໜງຂອງລະບອບໃໝ່ ຍ່າງເຂົ້າມາໃນຫ້ອງນັ້ນ.

- ສະບາຍດີອ້າຍ! ອິນທະຫວາຖາມ.

- ເຈົ້າສະບາຍດີ, ພາກັນໄປໃສມາ? ຂ້ອຍຕອບແລ້ວຖາມຄືນ.

- ພາຄຳຮູໄປຢາມບ້ານແມ່ຕູ້ທີ່ບ້ານທາດຫລວງມາ,ອ້າຍມາດົນ ແລ້ວຫວະ? ນາງຕອບຂ້ອຍ ແລ້ວຖາມຕໍ່:

- ປະມານເຄິ່ງຊົ່ວໂມງແລ້ວ, ເອີ! ແອນ້ອຍມານັ່ງນຳອ້າຍພີ້,ຂ້ອຍຮ້ອງ ທັງເດ່ມືເອົາຫາວນ້ອຍ ຫລັງຈາກນາງອິນທະຫວາຖອນຕົວ ເລີຍໄປ

ທາງເຮືອນຄືວ.

ເມື່ອມີຈຳນວນມາເພີ່ມ ຜູ້ເປັນແຂກກໍຫັນຄວາມສົນໃຈມາຫາທ້າວ ທີ່ແລ່ນເຂົ້າມານັ່ງຢູ່ຫວ່າງກາງ. ຂອຍເດີ່ນໄປຍິບເບົາງທີ່ກົກແຂນຂອງ ສະມາຊິກໃໝ່ ຜູ້ເປັນຕາຮັກຕາແພງ, ແກ້ມຕຸກຕຸ່ຍ, ແວວຕາສົດໃສ, ຍີ້ມບາດໃດແກ້ມບອງທັງສອງຂ້າງເພີ່ມຄວາມມີສະເໜ່ໄປໃນຕົວ.

- ເພິ່ນນີ້ຕິ! ແມ່ນນ້ອງຊາຍຫລ້າຫົວແກ້ວຫົວແຫວນ?

- ແມ່ນແລ້ວ, ທັງແມ່ນຜູ້ຫົວຂີ້ດື້ພ້ອມ ສະຫລອກກອກ ແລະ ກໍ່ປາກກ້ອງແທ້ໄດ່ເພີ່ນຫັ້ນ.) ຍິນເອື້ອຍເວົ້າໃຫ້ພູ້ນ້ອງຊາຍກໍເຮັດມືນຕາ ໃຫ້ຍແນມເບິ່ງໜ້າຜູ້ເປັນເອື້ອຍ.

- ຄັ້ງກ່ອນ, ອ້າຍມານີ້ ເພິ່ນໄປໃສຄືບໍ່ເຫັນ? ຂອຍຖາມຕໍ່:

- ນ້າສາວ ມາຮັບເອົາໄປນອນຢາມແມ່ຕູ້, ໃພ້ງກໍຮັກເພິ່ນ. ນາງຕອບຂອຍພ້ອມບອກນ້ອງຊາຍ, ຖາມສະບາຍດີອ້າຍເບິ່ງດູ.

- ສະບາຍດີອ້າຍ.

- ເຈົ້າສະບາຍດີ.

- ນ້ອງຊື່ຄຳຮູ້ແມ່ນບໍ່? ຂ້ອຍຖາມຊື່.

- ແມ່ນຊື່ຫລິ້ນຊື່ງ ຊື່ແທ້ແມ່ນ "ສົນໄຊ"

- ຊື່ມ່ວນນໍ, ແມ່ນໃພໃສ່ຊື່ໃຫ້?

- ແມ່ບອກວ່າ "ເອື້ອຍຂືນເປັນຜູ້ຮອງກ່ອນໝູ່"

ຂ້ອຍງວກໜ້າມາຫາເຈົ້າຂອງຊື່ ທັງເວົ້າ: "ຫາໃສ່ຊື່ຊ່ວຍແດ່ເດີ , ຫລານຊາຍອ້າຍເກີດມາໄດ້ສາມເດືອນແລ້ວ ພໍ່ແມ່ເຂົາຍັງຫາຊື່ແທ້ໃຫ້ບໍ່ໄດ້"

- ບໍ່? ຊິລິຖາໃສ່ຊື່ລູກຂອງອ້າຍ!

- ລູກອ້າຍຫວະ? ສະເໜີໃຫ້ຜູ້ເປັນແມ່ມັນໃສ່ເອງ, ມັກແນວໃດຕາມໃຈນ້ອງໂລດ, ຂອຍເວົ້າທັງຫົວໃສ່ໜ້າ.

- ຮື! ພ້ອມທັງຂືນຕາງອນນັ້ນກໍພັບເພືອບລົງ.

ຂ້ອຍກໍໄດ້ແຕ່ຫົວ, ສ່ວນທ້າວນ້ອຍ "ສິນໄຊ" ຫລຽວພຸ້ນ ຫລຽວ ພີ້, ເບິ່ງໜ້າເອື້ອຍແລ້ວກະເບິ່ງໜ້າຂ້ອຍ. ບຶດໜຶ່ງກະເລີຍຄວັກເອື້ອຍແລ້ວໂຢ້ຕົວລຸກ ພ້ອມທັງອັດປາກລັກສະນະຊິ່ມໃສ່ຫູຂອງເອື້ອຍ. ຂ້ອຍກໍ ແນມເບິ່ງ ທັງໄດ້ຍິນສຽງປາກແຕ່ດັງບໍ່ຄັກປານໃດວ່າ:"...ວ່າຈັ່ງໃດເອື້ອຍ"

- ນ້ອງກະລອງໃຊ້ຄວາມສາມາດຖາມເພິ່ນເອງ, ຜູ້ເປັນເອື້ອຍແນະນຳ.

- ບອກແດ່ກະບໍ່ໄດ້, ທ້າວນ້ອຍຕໍ່ວ່າ.

- ຖາມອ້າຍພີ້ອ້າຍຈະບອກໃຫ້, ຂ້ອຍສະເໜີ.

ທ້າວນ້ອຍ ງວາກໜ້າມາຫາ, ສຽງທີ່ຍັງບໍ່ທັນໝົດກິ່ນນ້ຳນົມນັ້ນກໍດັງຈະດັງແຈ້ງຂຶ້ນ.

- ຄັນຊັ້ນ ອ້າຍຊື່ວ່າຈັ່ງໃດ?

- ອ້າຍຊື່ "ສຸວັນ"

- ອ້າຍສຸວັນ!

- ແມ່ນແລ້ວ ອ້າຍຊື່ ສຸວັນ ຈື່ໄວ້ເດີ. ຂ້ອຍເນັ້ນໜັກຕື່ມ.

- ອ້າຍສຸວັນ! ແອນ້ອຍທວນຊື່ນັ້ນອີກ ພ້ອມທັງຈ້ອງເບິ່ງໜ້າຂ້ອຍ . ຂ້ອຍກໍເບິ່ງຄືນ ແລະ ເພັ່ງເລັ່ງເບິ່ງໃບໜ້າອ່ອນອຶມເລືອດນັ້ນ. ຄ້າຍໆ ກັບວ່າມີຮູບໃບໜ້າຂ້ອຍໃນແກ້ວຕາມົນທີ່ສົດໃສທັງຄູ່. ບາດແລ້ວສຽງເວົ້າບໍ່ຂ້ອງບໍ່ຄາກໍມ່ອນໆຂຶ້ນ:

- ອ້າຍສຸວັນ! ອ້າຍເປັນຈິກໂກະຫວະ? ຄຳວ່າ: "ຈິກໂກະຫວະ?" ແມ່ນລາກສຽງຍາວດັ່ງຕັ້ງໃຈເຮັດ. ຄຳຖາມທີ່ບໍ່ເຄີຍໄດ້ຍິນມາກ່ອນ ໄດ້ເຮັດໃຫ້ຂ້ອຍຕື່ນຫຍຸບກັບບາດ ພ້ອມທັງຄິດໃນໃຈວ່າ "ມາບິດໃດຫວະນີ້ ? ຄຳຖາມແບບນີ້ກະຕຸກເສັ້ນຂ້ອຍແທ້!" ບາດແລ້ວຂ້ອຍກໍຕອບຄຳຖາມ ນັ້ນແບບໜ້າວ່າຕາເສີຍ.

- ອ້າຍກະເປັນຄົນນ້ອງເອີຍ, ອ້າຍບໍ່ໄດ້ເປັນຈິກໂກະນາ.

- ພົມອ້າຍຍາວ, ອ້າຍກະເປັນຈິກໂກະ, ຄຳວ່າ "ຈິກໂກະ" ທ້າວເວົ້າທົ່ງໝົດແຮງ.

- ອື! ຄຳຣູ້! ຢ່າໄປເວົ້າໃຫ້ເພິ່ນ, ມີສຽງຮ້ອງຫ້າມຈາກ ວຽງຂິນຜູ້ເປັນເອື້ອຍດັງຂຶ້ນ.

- ເອື້ອຍຄູ ອະນຸບານນ້ອງເວົ້າວ່າ: ຜູ້ຊາຍຈັ່ງພົມຍາວແມ່ນເປັນຈິກໂກະ, ຈິກໂກະແມ່ນພວກບໍ່ດີ, ທ້າວນ້ອຍອອດງຂຶ້ນ.

ໃນກໍລະນີແບບນີ້, ໄດ້ມີແນວໃດແນວໜຶ່ງເກີດຂຶ້ນໃນຈິດໃຈຂ້ອຍ , ຂ້ອຍບໍ່ປາກຂະໜິບຕາເປັນເຊີງສັນຍານບອກວຽງຂິນວ່າ ບໍ່ຕ້ອງຫ້າມ, ແຕ່ກໍນັ່ງເຮັດຕານ້ອຍ ແລະ ຄືຈັ່ງວ່ານັ່ງເຮັດສໍ່ຫັດຂິດຕົວເອົາ ຄ້າຍກັບ ຢ້ານສິ່ງໃດສິ່ງໜຶ່ງ. ວຽງຂິນຄືຈະຄິດເກງໃຈກໍເລີຍຮ້ອງບອກນ້ອງສາວ ມາເອົາ ແລະ ບອກທ້າວນ້ອຍວ່າ: ໄປແອບຮ້ອງເພງ "ຮັກທ່ານຜູ້ນຳ" ນຳເອື້ອຍອິນເດີ, ມື້ໜ້ານຳມາຮ້ອງສູ່ອ້າຍສຸວັນຟັງ. ທ້າວນ້ອຍຍັງຢາກຢູ່ແຕ່ອິນທະຫວາກໍອຸ້ມເອົາໄປຫ້ອງຂອງນາງ.

ເມື່ອຍັງສອງຄົນ, ບັນຍາກາດມິດງຽບກໍເກີດຂຶ້ນຊົ່ວຂະນະໜຶ່ງ, ຂ້ອຍບໍ່ປາກບໍ່ຈາຫຍັງຕື່ມ, ຮູ້ສຶກຕົວເອງອອກຮ້ອນອອກລົນວາດໃດວາດໜຶ່ງ . ຄ້າຍກັບວ່າ ໄດ້ຍິນຄຳເວົ້າຈາກປາກຄຳຣູ້ ຍັງຕິດຫູຢູ່. "ອ້າຍສຸວັນ! ອ້າຍເປັນຈິກໂກະຫວາ?..." ແລ້ວຄຳວ່າ: "ຈິກໂກະ ໆໆໆ" ກໍຄືແຮງເພີ່ມສຽງດັງກຶກກ້ອງຫູຢູ່. ຂ້ອຍເຫີ້ງຫລັງໃສ່ເບາະ ແລະ ວາງແຂນພາດ ໃສ່ຂອບຕັ່ງນັ່ງ ພ້ອມນັ້ນໃນຈິດໃຈຂອງຂ້ອຍກໍມີບັນຫາໃໝ່ໆສຳລັບຕົວເອງຕັ້ງເຄົ້າຂຶ້ນ.

"ຈິກໂກະໆໆໆ!" ຄຳຣູ້ວ່າຂ້ອຍເປັນຈິກໂກະ, ຈິກໂກະ! ຄືຜູ້ຈັ່ງໃດຂ້ອຍຫລິງເອົາມືງຳຫົວຕົວເອງ, ແມ່ນແຫ! ພົມຂ້ອຍຍາວອີ່ຫລີ, ຂ້ອຍກົ້ມເບິ່ງເຄື່ອງທີ່ຂ້ອຍນຸ່ງອີກ. ຊຸດຄາບອຍທີ່ລາຄາແພງ ແລະ ຊົ້ງໂກ້ເກ້ ຊຸດນີ້ມັນກໍຄືຈະສົມທົບນ້ຳໜັກຄຳວ່າ "ຈິກໂກະ" ໃຫ້ອຸດົມສົມບູນຂຶ້ນ.ມັນເພີ່ມ

ຄວາມສະຫວ່າງລາສີໃຫ້ຂ້ອຍ ຫລືວ່າມັນເພີ່ມຄວາມອັບປີໃຫ້ຂ້ອຍ? ເອີ ! ໃນຕົວຈິງຂອງຂ້ອຍແລ້ວກໍບໍ່ແມ່ນເປັນຄົນໄລເລຫຍັງນາ, ແຕ່ວ່າຊີວິດຂອງຂ້ອຍນີ້ຄືໃຜ? ຄືຄົນລາວຜູ້ຖະໜອມຖ່ອມຕົວຫລືກາຍເປັນຄົນລາວຜູ້ ໂກ້ເກ້ຂີ້ອວດສຳຫາວແລ່ນນຳສະໄໝທີ່ບໍ່ສອດຄ່ອງກັບສະພາບບ້ານເມືອງໄຕເອງແລ້ວຕິ. ດຽວນີ້ຂ້ອຍຢູ່ເມືອງລາວ, ບໍ່ແມ່ນປະເທດທີ່ຂ້ອຍຫາກໍກັບມາ . ບ້ານເພີ່ນເມືອງທ່ານ ມີຫລາຍອັນທີ່ແຕກຕ່າງກັບບ້ານເຮົາ ເພາະ ສັງຄົມບ້ານເພີ່ນເປັນແນວນັ້ນ, ການຈິ່ງພົມຍາວກໍພໍເບິ່ງແດ່. ຕາມສັງຄົມບ້ານເຮົາ ແຕ່ປູ່ຍ່າຕາຍາຍມາຜູ້ຊາຍບໍ່ເຄີຍຈິ່ງພົມຍາວຄືຜູ້ຍິງ, ມາໃນສະໄໝລ່າເມືອງຂຶ້ນແບບໃໝ່ຂອງອາເມລິການາປົກຄອງ ພວກມັນໄດ້ເອົາວັດທະນະທຳຂອງຕາເວັນຕົກມາເບື່ອເມົາຊາວໜຸ່ມ, ເມື່ອປະເທດຊາດໄດ້ ຮັບການປົດປ່ອຍ ຮອງຮອຍອັນນັ້ນກໍຍັງເສດເຫລືອ ແລະ ພວກສັດຕູກໍຫາທຸກວິທີສິ່ງເສີມ ເພື່ອທຳລາຍການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມຢູ່ ປະເທດເຮົາ. ຢືນຢູ່ຕໍ່ໜ້າການຕໍ່ສູ້ລະຫວ່າງສອງເສັ້ນທາງໃຜຈະເອົາຊະນະໃຜ? ບາດຂ້ອຍເດຫລະ? ໄດ້ຕອບສະໜອງກັບການຮຽກຮ້ອງຂອງພັກ ແລະສະພາບການໃໝ່ແລ້ວບໍ່ນີ້? ພົມຍາວສົມທົບກັບເຄື່ອງນຸ່ງຊຸດຄືແບບນີ້ ມັນແມ່ນການປະເອີບປະເອີ ແລະ ເຫິ່ແໜໄປແບບໃດແລ້ວນີ້? ສົມຄວນບໍ? ທີ່ຈະເອົາຕົວເອງໄປເກືອກກົ້ວ ເພື່ອຊຸບໂຕເອງໃຫ້ເປັນ ຈິກໂກະ. ຈິກໂກະຄືຈະບໍ່ແມ່ນພຽງແຕ່ຊື່ຂອງຜູ້ຈິ່ງພົມຍາວເທົ່ານັ້ນ. ເອື້ອຍຄູຢູ່ໂຮງຮຽນ ອະນຸບານຄືຈະຕ້ອງເວົ້າເຖິງພົນຮ້າຍ ແລະ ຄວາມເປັນອັນຕະລາຍຂອງຈິໂກະທີ່ເກີດຂຶ້ນເປັນໄພຂອງສັງຄົມຂອງລະບອບໃໝ່."ຈິກໂກະ ມັນແມ່ນພວກບໍ່ດີ!" ໂອ! ຂ້ອຍແມ່ນພວກນີ້ຫວະ? ຂ້ອຍຮູ້ສຶກເບື່ອໜ່າຍ ແລະ ກຽດຊັງຄຳນີ້ເກີດຂຶ້ນ, ຍ້ອນວ່າເປັນ ຈິກໂກະຫາງສັ້ນຫລືຫາງຍາວມັນກໍແມ່ນຊື່ສັດຊະນິດໜຶ່ງທີ່ມີໄວ້ປະດັບກຽດຂອງຄົນເສລີບີຮົວ. ຈິກໂກະນີ້ບໍ່? ຈະເອົາມາເປັນນາມມະຍົດສຳລັບເອກອາງຄຸນຄ່າຂອງຂ້ອຍ. ຂ້ອຍຜູ້ຊັງ ລະບອບ

ໃຫ່ມໄດ້ຊູບລ້ຽງໃຕ້ໃຫ່ຍກ້າໜ້າບານ ມີວິຊາຄວາມຮູ້ ແລ້ວຊື່ຂອງສັດ ຈົກໂກະ! ຈົກກ້ຽມ! ຍົ້ກະປອມ! ຣົບປີ້! ນີ້ຫວະ? ມີຄູນຄ່າຄວນບູຊາ ຈົນບໍ່ສາມາດລົບລ້າງໄດ້. ມັນມີຄວາມສຳຄັນຈົນທຸ້ມເທຕົນເອງໄຄວ່ຄວ້າ ຫາເພື່ອຢາກໃຫ້ມີລົ້ນຣອງຊື່ທີ່ເປີະເປື້ອນນີ້ເບາະ? ຂ້ອຍໄດ້ກາຍເປັນຕົວຢ່າງທີ່ໃຜໆເຫັນແລ້ວອຶດຫົວໃນໃຈບໍ່ໄດ້ແລ້ວຫວະນີ້? ໂອ້! ບໍ່! ບໍ່!ເດັດຂາດ, ຂ້ອຍຈະບໍ່ເປັນໝູ່ເພື່ອນຂອງຊື່ຈຳພວກນີ້, ຂ້ອຍຮ້ອງບອກຕົວເອງໃນໃຈ, ເໝືອນກັບຮູ້ອາລົມຂອງຂ້ອຍ ວຽງຂຶ້ນເໜັ້ນນ້ຳຕີ່ມໃສ່ຈອກໃຫ້ ແລ້ວຖາມຂ້ອຍ ຍ້ອນວ່າຂ້ອຍຊຶງຢູ່ດົນເຕີບ.

- ອ້າຍສຸວັນຄຶດຫຍັງລະ?

- ຄົນນີ້ສະຫລາດເນາະ ແທນທີ່ຂ້ອຍຈະຕອບ ຂ້ອຍກັບເວົ້າຂຶ້ນ ແບບລອຍໆ.

- ຮື! ແມ່ນຫຍັງເກາະ? ນາງຖາມຄືນໃນຄວາມເວົ້ານັ້ນ.

- ຄົນນີ້ສະຫລາດເນາະ, ຂ້ອຍເວົ້າຄືນຄວາມເກົ່າ.

- ແມ່ນຄວາມອ້າຍ, ນ້ອງຂໍເອກະພາບນຳວ່າ: "ບໍ່ມີຫຍັງຈະ ສະຫລາດລື່ນຄົນ"

- ນ້ອງກໍແມ່ນນອນຢູ່ໃນຈຳນວນຄົນສະຫລາດ.

- ນ້ອງຫວະ? ບາງທີນ້ອງອາດຈະສະຫລາດໄດ້ ແຕ່ກໍຍ້ອນປາສະຈາກການຊຸກຍູ້ຊ່ວຍເຫລືອ ບອກວ່າຈາກຜູ້ອື່ນກໍຄືອ້າຍບໍ່ໄດ້.

- ນ້ອງສະຫລາດບອກຄຳຮູ້ຊຸກຍູ້ອ້າຍເນາະ! ຂ້ອຍທົດລອງເວົ້າແບບເບບເນັບ.

- ບໍ່ງ! ນ້ອງບໍ່ໄດ້ບອກ, ນາງປະຕິເສດສຽງຄ່ອຍ ແລະ ປີ້ມນອນຄ້າຍກັບປານຂ້ອຍບໍ່ເຊື່ອ ແລ້ວນາງກໍເວົ້າຕໍ່:

- ຄຳຮູ້ຖາມອ້າຍຕ່າງຫາກ.

- ຄຳຮູ້ຖາມອ້າຍຕ່າງຫາກ, ຂ້ອຍທວນຄືນ ແລະ ເວົ້າຕໍ່: ຄືຈະ

ແມ່ນບອກອ້າຍຫລາຍກວ່າ.

- ອາດຈະແມ່ນ. ແລ້ວນາງກໍ້ຈ້ອງສາຍຕາເບິ່ງຂ້ອຍຢ່າງບໍ່ຫລົບຫລີກ ສຳລັບຂ້ອຍກໍ້ສູ້ໜ້າ ແລະ ແນມສົບສາຍຕານັ້ນ, ຂ້ອຍພົບໃນຕາທີ່ບໍ່ປະກົດ ມີແວວຫຍໍ້ຫຍັນປະນາມ ບໍ່ມີແວວດາດຄັ້ນບັງຄັບ. ດວງຕາຄູ່ງາມນີ້ບົ່ງບອກ ຄວາມຮັກ ແລະ ຄວາມເປັນຫ່ວງເປັນໄຍບົ່ມຊ້ອນເອົາຄວາມປາຖະໜາ ແຫ່ງຄວາມບໍລິສຸດຜຸດຜ່ອງໄວ້ໃນສ່ວນເລິກຂອງຄວາມແນ່ນອນທີ່ຈະຂໍ ມອບ ຄວາມຫວານຊື່ນສົດໃສຂອງວັນຂ້າງໜ້ານັ້ນໃຫ້ຂ້ອຍມີຫຸ້ນສ່ວນຊີວິດນຳ.

"ແວວຕາ ເປັນອາຈາຂອງຫົວໃຈ" ໄດ້ສາຍແສງແຫ່ງຄວາມ ຂໍຮ້ອງ ວິ້ງວອນ ແລະ ເຈືອປົນເອົາຄວາມລະດົມທີ່ບໍ່ຈຳເປັນເວົ້າສິ່ງໃດ ສິ່ງໜຶ່ງ ອອກມານັ້ນ ເໝືອນກັບຮູ້ສຶກຄວາມຜິດຂອງຕົນເອງ ຂ້ອຍຫລົບສາຍຕາລົງ ຕ່ຳ ແລ້ວກໍເວົ້າລະບາຍຄວາມໃສ່ຕົວເອງ.

"ຄັກແທ້ຂ້ອຍເພ້ຮູ້ບໍ່? ຖືກເດັກນ້ອຍອະນຸບານຂິນຂວາຍ" ເວົ້າແລ້ວ ຂ້ອຍກໍເງີຍໜ້າເບິ່ງຄູສິນທະນາ.

-ນີ້ອື່ນເດີ ອ້າຍຈະເປັນຜູ້ທຳອິດທີ່ຕັດຜົມ ຊິເອົາຈິງຄູບາໂລດ.

- ກະພໍດີ ຄຳຮູ ຊິໄດ້ຫວງໃຫ້ວ່າ: "ຄົນໂທດໂຕນຈາກຄຸກທາງ ໃດ ມາຂຶ້ນເຮືອນ" ແລະ ແລ້ວພວກຂ້ອຍກະຫົວຂັນພ້ອມກັນ.

ວັນຕໍ່ມາ ຊຶ່ງແມ່ນວັນອາທິດ, ຂ້ອຍໄດ້ໄປເຮືອນນັ້ນອີກ, ຂ້ອຍ ຄ່ອຍ ຍ່າງເຂົ້າເດີ່ນບ້ານ ຄຳຮູຫລຽວເຫັນກໍແລ່ນມາຫາ, ດຶງແຂນຂ້ອຍ ຍ່າງ ພ້ອມຫົວບອກວ່າ: "ເອື້ອຍຂິນຢູ່ສວນຜັກຫລັງບ້ານ"ຂ້ອຍກໍຕ້ອງຈາວຕາມ. ສຽງເອີ້ນ "ເອື້ອຍຂິນ! ເອື້ອຍຂິນ!" ກະເຮັດໃຫ້ຂ້ອຍແນມໄປທາງໜ້າ ຢ່າງຕັ້ງໃຈ. ໃກ້ຈະຮອດສວນຜັກ ສຽງອິນທະຫວາຮ້ອງຫ້ວງ: "ອ້າຍ ສຸວັນມາ" ກະເຮັດໃຫ້ໃຜຜູ້ໜຶ່ງເງີຍໜ້າຂຶ້ນຈາກການຫລົກຫຍ້າ ຫັນ ໜ້າ ມາທາງຂ້ອຍ. ບາດແລ້ວສຽງຫວງຕອບຮັບແຂກໜ້າເກົ່າຈິງໃຫມ່ກໍດັງຂຶ້ນ ຕໍ່:

- ຄຳຮູ້! ມື້ນີ້ເອື້ອຍຈະພາຮ້ອງເພງ ຕ້ອນຮັບອ້າຍສຸວັນຍ່າງ ຂະໜາດເລີຍເນາະ.

- ໃຫ້ເອື້ອຍຂຶ້ນຮ້ອງກ່ອນ, ຈັກແມ່ນເຈດຕະນາຂອງຄຳຮູ້ຫລືບໍ່? ພໍເວົ້າສຸດ ຜູ້ເປັນເອື້ອຍກໍກົ້ງຕາໃຫຍ່ໃສ່ ແລ້ວຄຳຮູ້ກໍບ່ຽນມາທາງຫົວຂ້ອຍ.

ວຽງຂຶນ ແນມເບິ່ງຂ້ອຍແຕ່ຫົວສຸດຕີນ. ໃບໜ້າທີ່ຂ້ອຍລັກເບິ່ງ ຍາມໃດກໍບໍ່ຮູ້ຈັກເບື່ອນັ້ນ ສົດຊື່ນ ແລະ ຍິ້ມແຍ້ມແຈ່ມໃສ ເໝືອນທ່ອນ ໂຮມເອົາຄວາມພາກພູມໃຈອາດໃດອາດໜຶ່ງ. ບໍ່ຮູ້ວ່າ ສາຍຕາຂອງພວກເຮົາພົບກັນຍາມໃດ ສຳລັບຕົວຂ້ອຍແລ້ວ ຄົ້ນພົບແສງຕາທີ່ສົດໃສ ແລະ ຄົນຂຳນັ້ນ ອ່ານອອກເຫັນໄດ້ຄວາມໃນໃຈທີ່ເລືອກເຟັ້ນແລ້ວວ່າ: "ອ້າຍສຸວັນ ! ມື້ນີ້ອ້າຍຈ່າງຈິບງາມ ແລະ ໜ້າຮັກຫລາຍ. ອ້າຍຄືຊາຍໜຸ່ມລາວ ໃໝ່ ແລະ ຈະເປັນຍອດຊາຍຜູ້ຊະນະໃຈນ້ອງແລ້ວ..."

ສ່ວນຂ້ອຍເອງກໍໄດ້ແຕ່ຍິ້ມ - ວຽງຂຶນ ຕ້ອງອ່ານພົບດວງຕາທີ່ ຂາຍຄວາມໃນໃຈຂອງຂ້ອຍ ເພາະຄວາມຄິດຂອງຂ້ອຍກະພວມບອກຕົວເອງວ່າ "ອ້າຍບໍ່ພຽງແຕ່ຈະຕັດຜົມທໍ່ນີ້ ອ້າຍຍັງຈະຕ້ອງຕັດ ແລະ ດັດຫລາຍອັນອີກທີ່ບໍ່ສອດຄ່ອງກັບລະບອບໃໝ່, ອ້າຍຈະຕ້ອງກຳຈັດປັດເປົ່າສິ່ງທີ່ຄົງ ຄ້າງອັນເປື່ອຍເຍື່ອຍນັ້ນໃຫ້ໝົດສິ້ນໄປ ແນວຄິດເກົ່າ ອ້າຍຈະຕ້ອງ ລົບລ້າງ, ອ້າຍຈະຕ້ອງຮ່ຳຮຽນ ແລະ ຝຶກຝົນຕົນເອງໃຫ້ມີແນວຄິດໃໝ່ ໃຫ້ມີທັດສະນະຫລັກໝັ້ນ ຄຸນສົມບັດປະຕິວັດ, ອ້າຍຈະເຮັດທຸກສິ່ງຢ່າງ ເພື່ອນາມມະ

ຂອງຊາວໜຸ່ມປະຊາຊົນປະຕິວັດລາວ, ອ້າຍຈະເອກອ້າງຄຸນຄ່າ ຂອງໄວໜຸ່ມ ດ້ວຍຄວາມເຊື່ອໝັ້ນການນຳຂອງພັກ ບົນໜ້າທີ່ວຽກງານ ຕົວຈິງ. ເພື່ອອະນາຄົດຂອງປະເທດ ເພື່ອສ້າງຄວາມຮຸ່ງເຮືອງໃຫ້ແກ່ ບ້ານເກີດເມືອງນອນ, ຄວາມຫອມຫວນຂອງຊີວິດພວກເຮົານັ້ນຈະຕ້ອງ ອ້າຍຍອມໃຫ້ຄວາມຮັກທີ່ພວກເຮົາເທີດທູນເໜືອກວ່າສິ່ງໃດນັ້ນ ຄືຄວາມຮັກຮັກຊາດ, ຮັກລະບອບໃໝ່, ຮັກດິນລາວ, ຮັກດິນດອນຕອນໜ້າ, ຮັກ ຮິດ

ຄອງປະເພນີອັນດີງາມຂອງລາວ, ເດັດຂາດບໍ່ໃຫ້ສັດຕູຕົວໃດມາມ້າງ ເພທຳລາຍ. ວຽງຂຶ່ນເອີຍ! ອ້າຍຈະຂໍເປັນໜຸ່ມລາວທີ່ແທ້ຈິງຂອງ ປະເທດຊາດ ແລະ ກໍແມ່ນເພື່ອເປັນໜຸ່ມລາວປະຈຳໃຈຂອງນ້ອງຜູ້ດຽວເທົ່ານັ້ນ? ແນ່ນອນ ຊີວິດອັນສົດໃສ ແລະ ວິດງານຂອງພວກເຮົາ ກໍແມ່ນຢູ່ບ່ອນ ນີ້, ແມ່ນບໍ່ທີ່ຮັກ!

---

(*) ຄັດຈາກ ຄຳປາໄສທີ່ກອງປະຊຸມພະນັກງານສຶກສາທົ່ວປະເທດ ປີ ໑໙໗໘ ຂອງນາຍົກໄກສອນ ພົມວິຫານ. (ໜ້າ ໑໖).

- ອ້າຍສິນຊາຍ ຄິດກິຕາໃຫ້ນ້ອງຟັງແດ່ດູ! ສຽງຂອງຍິງສາວ ຄົນໜຶ່ງເປັນສຳນຽງພາກໃຕ້ດອດຂຶ້ນກ່ອນນາງຈະປ້າຍກົ້ນນັ່ງລົງແປ້ນມາບ່ອນສິນຊາຍຢູ່.

- ອ້າຍຄິດເມື່ອຍແລ້ວລະ ແຕ່ບໍ່ມີຜູ້ໃດຟັງ! ສິນຊາຍເວົ້າແບບເສີຍໆ

- ອ້າວ! ກໍຍັງວ່ານ້ອງຖືກໄປລວມ ຫາກໍເລີກມານີ້ເດ.

- ອື! ນ້ອງໄປລວມວຽກຫຍັງຫື ພິລາກອນ!

- ຄິດກິຕາໃຫ້ນ້ອງຟັງກ່ອນ ຈັ່ງຊິບອກ!

ສິນຊາຍບໍ່ມີຄຳເວົ້າແນວໃດຕໍ່ວ່າຕໍ່ຂານໄປໄດ້ອີກ ເພາະພິລາກອນ - ແມ່ນເພື່ອນຍິງຮ່ວມຫ້ອງຮຽນດຽວກັບເຂົາ ພິເສດໄປກວ່ານັ້ນພິລາກອນຍັງແມ່ນຜູ້ທີ່ເຄີຍເຫັນອົກເຫັນໃຈເຂົາ ແລະ ຊ່ວຍເຫລືອເຂົາໃນຍາມຈຳເປັນ ນາງບໍ່ໄດ້ຈຳແນກວ່າ ເຂົາຮຽນມາຈາກປະເທດທຶນນິຍົມ, ສິ່ງສຳຄັນແມ່ນນາງໄດ້ຍ້ອງຍໍສັນລະເສີນສິນຊາຍທີ່ໄດ້ກັບຕ່າວຄືນມາຫາປະເທດຊາດແລະນາງກໍນັບຖືສິນຊາຍຄືກັບເພື່ອນຜູ້ຊື່ສັດຢູ່ໃນອຸດົມຄະຕິອັນດຽວກັນ. ສິນຊາຍທັງຄິດກິຕາ ທັງຮ້ອງເພງ ບາງຄັ້ງເຂົາກໍເຮັດແສງຕາເສືອດໄປເສືອດມາສຳຫລວດທົ່ວໃບໜ້າ ແລະ ຮ່າງຄີງຂອງພິລາກອນ ທີ່ພວມອາບຍ້ອມ ກັບແສງດອກໄຟນີອອນສາດສ່ອງອອກມາຈາກຂອບປ່ອງຢ້ຽມຂອງຫໍພັກ. ສ່ວນຫົວໃຈສິນຊາຍກໍໄດ້ແຕ່ຄິດລຳພຶງລຳພັນໄປຕາມອາລົມຂອງຄີນທີ່ກຳລັງເປົ່າປ່ຽວ...ໂຫ! ພິລາກອນ, ເຈົ້າຫົວ ເຈົ້າຍິ້ມໄປຕາມສຽງເພງຂອງຂ້ອຍແຕ່ຂະນະນີ້ ເຈົ້າຮູ້ແລ້ວບໍ່ວ່າ ຫົວໃຈຂ້ອຍ ມັນພວມເວົ້າກັບເຈົ້າແນວ ໃດຂ້ອຍຢາກບອກເຈົ້າໃຫ້ຮູ້ວ່າ ເຈົ້າແມ່ນເພື່ອນຍິງທີ່ຂ້ອຍຮັກແລະບູຊາເໜືອກວ່າສິ່ງໃດ, ຂ້ອຍບໍ່ເຫັນໃຜເຂົ້າໃຈຂ້ອຍ ແລະ ເຫັນອົກເຫັນໃຈ ຂ້ອຍເທົ່າກັບເຈົ້າ, ເຈົ້າເປັນຜູ້ໃຫ້ຄວາມອົບອຸ່ນຂ້ອຍ ທັງຮອຍຍິ້ມ ແລະວາຈາແມ່ນແຕ່ວັດຖຸທີ່ຈຳເປັນ ເຈົ້າກໍຍອມເສຍສະຫລະເພື່ອຂ້ອຍ ເຈົ້າເປັນເພື່ອນຜູ້ມັກຖາມເຖິງຄວາມສຸກທຸກຂ້ອຍຫລາຍກວ່າຜູ້ອື່ນ ແລະ ເຈົ້າກໍເຫັນສິ່ງ ທີ່

ຈາ່ເປັນໃນຕົວຂ້ອຍຫລາຍກວ່າຫມົດທຸກຄົນ. ເວີນຄຳຍາມຂາດເຂີນ ເຈົ້າ ກໍຊ່ວຍແບ່ງປັນ, ສິ່ງເສື້ອຍາມມັນຂາດສ້ອຍ ກໍແມ່ນຮ້ອຍຫຍິບຈາກລາຍ ມືຂອງເຈົ້າມາປະທັບໃສ່ ຕະຫລອດຮອດສະບູ ຢາຖູແຂ້ວ ຍາມຂ້ອຍບໍ່ມີ ກໍ ແມ່ນເຈົ້າແລ່ນຫາມາຊ່ວຍ, ຂ້ອຍພັດພາກຈາກບ້ານເກີດເມືອງນອນ ໄກ ຈາກຄວາມອົບອຸ່ນຂອງຄອບຄົວພໍ່ແມ່ ມາແຕ່ນ້ອຍໆ ຍ້ອນໄພສົງຄາມ ຈົນ ຂ້ອຍໃຫຍ່ປານນີ້ກໍຍັງບໍ່ທັນໄດ້ກັບເມືອເຫັນບ້ານເກີດເມືອງນອນ ເຫັນຫນ້າ ຕາພໍ່ແມ່, ຊີວິດຂ້ອຍໂດດດ່ຽວປ່ຽວພອຍ ເຫມືອນນົກນ້ອຍພາກຮັງ ມັນ ເຄີຍອາບຢູ່ກັບຄາບນ້ຳຕາ ແລະ ຄວາມທຸກໂສກສາລະພັດຢ່າງ, ແຕ່ເປັນ ຫຍັງພິລາກອນ! ເມື່ອຢູ່ໃກ້ເຈົ້າແລ້ວ ຂ້ອຍຮູ້ສຶກມີກຳລັງໃຈ, ຂ້ອຍ ເຂັ້ມ ແຂງແຮງກ້າ ຄືກັບຈະເອົາຊະນະທຸກອຸປະສັກທີ່ມາກີດຂວາງຢູ່ທາງ ເບື້ອງ ຫນ້າ, ຍ້ອນຂ້ອຍມີເຈົ້າເປັນເພື່ອນ ແລະ ມີເຈົ້າເຫມືອນກັບນ້ອງສາວ ຜູ້ ຮ່ວມອຸທອນກອນເລືອດດຽວກັບຂ້ອຍນັ້ນລະ!

- ຮຸ່ຍ! ອ້າຍສົມຊາຍນີ້ກໍໂພດ ຈັກແມ່ນລະເມີອີ່ຫຍັງ ຮ້ອງເພງ ກໍ ຮອດບໍ່ຖືກວັກ.

- ແຫ້ຫວະ?

- ແຫ້ລະບໍ! ຮ້ອງເພງດຽວຫລິບໄປຫລິບມາກໍເລີຍບໍ່ຮອດບ່ອນສຸດຈັກ ເທື່ອ.

- ອູ້ຍ!...ຕາຍ! ເປັນໄປປານນັ້ນຫວະ?... ສົມຊາຍຄິດຢູ່ໃນໃຈ.

- ຮ້ອງເພງໃຫມ່ແນ່ດູ! ພິລາກອນສະເຫນີ ຮ້ອງເພງໃຫມ່.

- ຄັນຊັ້ນກໍຮ້ອງເພງ "ພົບກັນໃນສັນຕິພາບ" ສາບໍ!

- ເຊີນອ້າຍຮ້ອງໄປໂລດ! ແລ້ວພິລາກອນກໍຈັບປຶ້ມເພງຊຶ່ງແມ່ນລາຍ ມືຂອງນາງເອງເປັນຜູ້ກາຍໃຫ້ສົມຊາຍໄປແຂບຮ້ອງຂຶ້ນມາເປີດເບິ່ງແຕ່ລະ ຫນ້າ. ຫມາຍຄວາມວ່າ ພິລາກອນກໍບໍ່ສາມາດຈະອັດໃຈສົມຊາຍໄດ້ເພາະ ວ່າ ເພງ "ປະເທດລາວໃຕ້" ແລະ ເພງ "ພົບກັນໃນສັນຕິພາບ" ເອົາ

ຮູ້ສຶກວ່າໄດ້ຫລ່ຽນໄຫລຕິດປາກຕິດຄໍຕັ້ງແຕ່ລາວເຂົ້າຮຽນຢູ່ປະເທດ ຝະລັ່ງ ພູມ! ອັນຮ້ອງຍາກແດ່ກໍມີແຕ່ເພງປະຕິວັດອອກໃຫມ່ໆທີ່ພິລາກອນພວມຈົດໃຫ້ເຂົາຮຽນຮ້ອງນັ້ນລະ! ສົມຊາຍຈະຕັ້ງຕົ້ນຮ້ອງເພງໃຫມ່ກໍຈິງ ແຕ່ແນວຄິດ ແລະ ຈິດໃຈຂອງເຂົາກໍກັບໄປວຽນມາຢູ່ອ້ອມຮອບຕົວຂອງພິລາກອນຢ່າງອອກໄປໃສ່ບໍ່ໄດ້. ໂອ! ພິລາກອນ, ລູກສາວເມືອງໃຕ້  ໃບຫນ້າເຈົ້າຂາວນວນຢ່າງທຳມະຊາດ ເຫມືອນກັບກີບດອກຈຳປາທີ່ພວມ ບານອ້າອາບແສງອາລຸນອັນໃຫມ່. ການປະຕິວັດໄດ້ຊຸບຫລໍ່ກໍ່ສ້າງໃຫ້ເຈົ້າເຕີບໃຫຍ່ແລະ ເຂັ້ມແຂງແທ້ ນໍ! ຂ້ອຍໄດ້ຟັງເຈົ້າເລົ່າເຫດການໃນບັ້ນຍຶດຢູ່ເສດຮ່ວມກັບຂະບວນນັກສຶກສາຈາກສະຖາບັນຕ່າງໆ, ຂ້ອຍໂລດຄິດອັດສະຈັນໃນຕົວເຈົ້າທີ່ບໍ່ເກງກົວຕໍ່ອັນຕະລາຍຫຍັງທັງສິ້ນ. ດ້ານຫນຶ່ງຂ້ອຍກໍຮູ້ສຶກກິນແຫນງໃນຖານະທີ່ເປັນຊາຍເອີກສາມສອກ ແຕ່ບໍ່ມີໂອກາດໄດ້ສ້າງວິລະກຳອັນລ້ຳເລີດຮ່ວມກັນກັບເຈົ້າ, ຖ້າບໍ່ດັ່ງນັ້ນຊີວິດຂ້ອຍທີ່ມີເຈົ້າເປັນເພື່ອນໃນມື້ນີ້ຄົງຈະສົດຊື່ນຫລາຍທີ່ສຸດ. ໃນຍາມປະເທດຊາດໄດ້ຮັບການປົດປ່ອຍ, ເຈົ້າເຫມືອນນົກນ້ອຍທີ່ມີອິດສະຫລະພາບ ພວມເຈີດແອ່ນຢູ່ເທິງທ້ອງຟ້າສີຄາມ. ບັດນີ້ເສັ້ນທາງທີ່ພວກເຮົາທັງສອງເລືອກເອົານັ້ນສຸດແສນສະຫງ່າງາມ, ພວກເຮົາຈະໄດ້ກາຍເປັນວິສະວະກອນແຫ່ງດວງວິນຍານຂອງຄົນຮຸ່ນໃຫມ່, ເພື່ອກໍ່ສ້າງອະນາຄົດອັນຮຸ່ງໃສຂອງປະເທດຊາດ, ຍ້ອນຈັ່ງຊັ້ນບໍ ພິລາກອນຈຶ່ງຮຽນດ້ວຍຄວາມບາກບັ່ນຂະຫຍັນພຽນ, ເຂົາໄດ້ຮັບຄວາມໄວ້ວາງໃຈຈາກຫມູ່ຄູ່ ບໍ່ວ່າແຕ່ດ້ານການຮ່ຳຮຽນ ວິຊາສະເພາະ, ດ້ານທັດສະນະ ແຮງງານ ແລະ ການປ້ອງກັນໂຮງຮຽນ ແມ່ນເຂົາໄດ້ປະກອບສ່ວນຢ່າງ ຕັ້ງຫນ້າ. ສົມພໍ ຄັນເວົ້າເຖິງເລື່ອງຄວາມກ້າວຫນ້າ ກ້າວຕາພິລາກອນ ຈຶ່ງມັກເວົ້າເລື້ອຍໆວ່າ: "ມີແຕ່ຫລໍ່ຫລອມຕົນເອງໃນວຽກງານຕົວຈິງ ເທົ່ານັ້ນ!..."

- ເອີ! ແມ່ນອ້າຍເປັນຫຍັງໄປແລ້ວຫື! ຮ້ອງເພງ ຈຶ່ງບໍ່ຖືກວັກ ຈັກ

ເທື່ອ. ພິລາກອນອັດປຶ້ມເພງໄວ້ ພ້ອມສີກແສງຕາສຸມໃສ່ໃບໜ້າສົມຊາຍ.

- ອ້າຍຮ້ອງບໍ່ຖືກວັກແທ້ຫວະ ພິລາກອນ?

- ກະແຫລະບໍ! ຈັກແມ່ນອ້າຍລັກລະເມີໄປທາງໃດບຸ, ຢ່າລືມວ່ານ້ອງຈັບປຶ້ມເພງຕິດຕາມອ້າຍຮ້ອງຢູ່ໄດ໋.

ແລ້ວສົມຊາຍ ເຂົາກໍເລີຍຄິດລະອາຍທີ່ຕົນພວມຫລົງລະເມີຢູ່ກັບຕົວ ພິລາກອນ, ແຕ່ກໍບໍ່ຍອມສະແດງທ່າທີອອກໃຫ້ນາງຮູ້ໃນເວລານັ້ນໂລດ ເຂົາຈຶ່ງຊອກຫາວິທີລົມກັບພິລາກອນໄປເລື່ອງໃໝ່.

- ເອ!...ພິລາກອນ ປານໃດນ້ອງຈຶ່ງຊິບອກອ້າຍໃຫ້ຮູ້ຫື!

- ຢາກຮູ້ຫຍັງລະ? ນາງພາໂລຖາມຄືນ.

- ອ້າວ! ກໍວຽກນ້ອງໄປລອນມາຫັ້ນຕວາ!

- ອື່! ວຽກຊາວໜຸ່ມຫັ້ນເບາະ!

- ຫັ້ນລະ! ອ້າຍບໍ່ແມ່ນຊາວໜຸ່ມຊິບໍ່ໃຫ້ຮູ້ນຳແດ່ຈັ້ນບໍ່!

- ອຸຍ! ອ້າຍສົມຊາຍນີ້ກໍດາຍ, ອ້າຍກໍແມ່ນຊາວໜຸ່ມຄືກັນຫັ້ນລະ! ຕ່າງແຕ່ວ່າອ້າຍບໍ່ທັນແມ່ນສະມາຊິກຂອງອົງການຈັດຕັ້ງເທົ່ານັ້ນ. ວຽກຂອງຊາວໜຸ່ມກໍແມ່ນວຽກຂອງອ້າຍຄືກັນ, ມື້ອື່ນທາງຄະນະເພິ່ນກໍຍັງຊິປະກາດໃຫ້ຮູ້ຢູ່, ຄັນວ່າອ້າຍຢາກສົນໃຈຫລາຍ ນ້ອງກໍຊິເວົ້າໃຫ້ຟັງດຽວນີ້ໂລດລະ ຄືວ່າ: ນັບແຕ່ມື້ອື່ນໄປ ໂຮງຮຽນພວກເຮົາຈະໄດ້ຢຸດການຮຽນໄວ້ ຊົ່ວຄາວ ເພື່ອລະດົມກຳລັງທັງໝົດ ໂດຍສະເພາະກໍແມ່ນກຳລັງຊາວໜຸ່ມຂຶ້ນໄປຕັດໄມ້ປ່ອງຢູ່ດ່ານສູງໃຫ້ໄດ້ຈຳນວນ ໕.໐໐໐ ລຳ ເພື່ອເອົາມາ ສານຝາແອ້ມເຮືອນທີ່ປຸກໃໝ່ໃຫ້ພວກເຮົາ ແລະ ພວກຊຸມນ້ອງທີ່ເຂົ້າໃໝ່ໄດ້ມີບ່ອນຢູ່ບ່ອນກິນພຽງພໍ.

- ອ້າຍເດ ຈະຕັດສິນໃຈໄປນຳພວກນ້ອງໄດ້ບໍ່? ສົມຊາຍບໍ່ປາກເຮັດຊິງລຶງຢູ່ ເພາະວ່າເຂົາພວມຄິດຫວງການຮ່ຳຮຽນທີ່ຫາກໍເປີດຂຶ້ນມາໄດ້ອາທິດໜຶ່ງແລ້ວ. ບັດນີ້ຊ້ຳພັດຊິຖືກໂຈະໄວ້ອີກ. ເມື່ອພິລາກອນເຫັນທ່າທີອຶ້ງ

ຕົ້ວຂອງສົມຊາຍ ກໍເກີດຫົນຫວາຍຟ້າວລຸກໜີພ້ອມບາດ.

- ອຸຍ! ຈັ່ງແມ່ນໜັກປາກເດີ, ຣອດໂມງແລ້ວ ນ້ອງຊິກັບ ຫໍພັກກ່ອນລະ! ພິລາກອນເວົ້າແບບຄືບໍ່ອາໄລໄຍດີ, ຄວາມຈິງກໍບໍ່ທັນຣອດໂມງຈ້ຳດອກ! ແຕ່ເປັນຫຍັງນາງຈຶ່ງເຮັດຈັ່ງຊັ້ນ! ປະໃຫ້ສົມຊາຍຕົກ ສະເງີ້ຫລຽວນຳຫລັງ.

- ພິລາກອນ! ຢ່າຟ້າວໄປແມ້! ອ້າຍຍັງມີເລື່ອງຢາກເວົ້ານຳ ນ້ອງໜາ.

- ນ້ອງບໍ່ມີເວລາ, ເລື່ອງນັ້ນປະໃຫ້ອ້າຍຕັດສິນໃຈເອົາເອງ!

ພິລາກອນທັງເວົ້າທັງຍ່າງແບບບໍ່ຫລຽວຫລັງ ແລ້ວນາງກໍແລ່ນຫລີບຂຶ້ນເມືອເຖິງຫໍພັກອັດປະຕູມິດຈີ່ຫລີ່, ແຕ່ສຳຫລັບຄືນນີ້ພິລາກອນ ນາງບໍ່ ອາດຈະຫລັບຕານອນໄດ້ງ່າຍໆ ເພາະນາງເປັນຜູ້ເຮັດໃຫ້ບັນຍາກາດການ ສົນທະນາກັບສົມຊາຍຕ້ອງກົ້ນີ້ຢຸດສະຫງັກລົງຢ່າງແຂງກະດ້າງ, ນາງ ພິກຂ້າງພິກຄີງແລ້ວກໍຕັ້ງຄຳຖາມຂຶ້ນຜູ້ດຽວວ່າ: ສົມຊາຍເອົາຈະບໍ່ຄຶດເສຍໃຈໃຫ້ເຮົາບໍ? ເປັນຫຍັງເຮົາຈຶ່ງສະແດງຕົວເປັນຄົນໃຈສັ້ນແບບນັ້ນ? ຄິດແລ້ວນາງກໍທັ່ງລົມຫາຍໃຈອອກບາດແຮງໆ ຄືກັບວ່າຢາກລະບາຍຄວາມອຸກອັ່ງທັງໝົດອອກຈາກຕົນເອງ ແຕ່ແລ້ວມັນກໍຍັງມີຫລາຍບັນຫາທີ່ເຮັດ ໃຫ້ນາງຕ້ອງຄິດອີກ, ນາງຄິດວ່າ ຕົນເອງຈະເຮັດຫລ້ອນໜ້າທີ່ຂອງ ໜ່ວຍຊາວໜຸ່ມມອບໝາຍໃຫ້ບໍ? ເພື່ອຂົນຂວາຍກໍ່ສ້າງສົມຊາຍໃຫ້ເຂົ້າຢູ່ໃນອົງການຈັດຕັ້ງຊາວໜຸ່ມ. ຜ່ານມາ ນາງເອງກໍບໍ່ເຄີຍມີຫຍັງຜິດພາດ ຈັກເທື່ອ, ກົງກັນຂ້າມ ຍ້ອນການໃກ້ຊິດຕິດແທດຂອງນາງ ສົມທົບກັບການຈັດຕັ້ງ ແລະ ໝູ່ເພື່ອນຈຶ່ງເຮັດໃຫ້ສົມຊາຍເປັນຄົນຕື່ນຕົວກ້າວໜ້າ ສາມັກຄີກວ້າງຂວາງ ແລະ ທຸ່ນທ່ຽງ ອຸ່ນອ່ຽນ ຮ່ຳຮຽນຕະຫລອດມາ. ບາງຄັ້ງເມື່ອເຫັນນາງເຮັດດີນຳສົມຊາຍ ເປັນຕົ້ນ: ຍາມເຂົາຂາດເຂີນເຄື່ອງໃຊ້ຂອງສອຍເຊັ່ນ: ສະບູ, ຢາຖູແຂ້ວ ນາງກໍແບ່ງອັດຕາຂອງນາງໄປໃຫ້ ,

ໝູ່ກໍເວົ້າຢອກເຍີ້ຍ "ໄຄແດ່ສື້!..." ຈັ່ງຊັ້ນຈັ່ງຊີ້ ຫລືວ່າ ເວລາເຄື່ອງສິນຊາຍຂາດ ນາງກໍຮີບໄປຫຍິບໄປຕາບໃຫ້ ໝູ່ຜູ້ມັກເວົ້າມັກຢອກກໍເຈາະຈີ້ມຫາເລື່ອງຢູ່ພໍ່ສຳນັ້ນ. ຜ່ານມາ ນາງເອງກໍເຄີຍໄດ້ຮັບການຊ່ວຍເຫລືອຈາກສິນຊາຍເຊັ່ນກັນ ໂດຍສະເພາະກໍແມ່ນທັງດ້ານການຮຳຮຽນ ເພາະເຂົາເປັນຜູ້ຮູ້ພາສາຕ່າງປະເທດຫລາຍ ການຄົ້ນຄວ້າຂອງເຂົາກໍເລິກເຊິ່ງແລະ ເຂົ້າໃຈດີ ເພາະສະນັ້ນ ມີບັນຫາຂ້ອງຄາແນວໃດ ສິນຊາຍ ກໍຊ່ວຍແນະນຳຫລືອະທິບາຍໃຫ້ນາງຟັງຢ່າງບໍ່ອວດອິ່ງທະນົງຕົວ, ຈົນລາງເທື່ອໝູ່ກໍເວົ້າຢອກ ສິນຊາຍວ່າເປັນ "ຊ່ຽວຊານ" ຫລືວ່າເປັນ "ທີ່ປຶກສາ" ຂອງນາງແນວນັ້ນແນວນີ້. ບະ! ມັນຊິເປັນໄປໄດ້ບໍ? ສິນຊາຍຈະຄຽດໃຫ້ເຂົາທີ່ເຂົາສະແດງຄວາມວອນອອກໄປຫວ່າງກີ້ນີ້, ຜ່ານມາ ສິນຊາຍ ເຂົາ ກໍເປັນຄົນມັກໝູ່ ມັກເພື່ອນ ຈິດໃຈກວ້າງຂວາງ ຈົນເຂົາເອງກໍຮູ້ສຶກ ເກີດຄວາມພໍໃຈ ແລະ ບໍ່ມີຫຍັງຕິ ໃນຕົວເຂົາຈັກດີ້, ແຕ່ອັນນີ້ຍັງເປັນ ຄວາມລັບທີ່ບໍ່ທັນບອກໃຫ້ໃຜຮູ້. ເອົາລະ! ຖ້າແມ່ນສິນຊາຍຄຽດ ຫລືບໍ່ຄຽດ ກໍຈະເຫັນເຂົາໃນມື້ອອກແຮງງານ...ພິລາກອນຄິດຫລາຍຈົນເຊື່ອບຫລັບໄປຢ່າງບໍ່ຮູ້ເນື້ອຄີງ.

ຕອນເຊົ້າຂອງມື້ກຽມອອກເດີນທາງໄປດ່ານຊູງ, ພິລາກອນ ຄິດແປກປະຫລາດ ແລະ ຕົກໃຈແຮງທີ່ສຸດ ເພາະໃນບັນດາຜູ້ທີ່ລໍຖ້າລົດກຽມ ໄປອອກແຮງງານມື້ນັ້ນ ບໍ່ເຫັນໜ້າສິນຊາຍຢູ່ຫັ້ນເລີຍ, ນາງຄິດຢາກຖາມແຕ່ກໍຢ້ານໝູ່ຈັບພິລຸດໄດ້ ເລີຍອົດໃຈຄອງຄອຍເຂົາດ້ວຍຄວາມຫົ້ນຫວາຍ.

- ເປັນຫຍັງ ພິລາກອນ ຄືວ່າເຮັດໜ້າຫຍຸ້ງແຕ່ເຊົ້າແທ້? ອ້າຍບົວເພັດ ຫົວໜ້າໜ່ວຍຊາວໜຸ່ມຖາມ. ພິລາກອນຫັນມາມານເຂົ້າດ້ວຍຄວາມຕົກໃຈ ເພາະຄິດວ່າ ຈັ່ງໃດ ອ້າຍເພັດກໍຕ້ອງຮູ້ເລື່ອງພາຍໃນຫົວໃຈຂອງຕົນຄັກໆ.

- ບໍ່ແມ່ນຕື່ນນອນບໍ່ໄດ້ສ້ວາຍໜ້າບໍ? ອ້າຍສິນພອນ ຄົນມັກຢອກ ມັກ

ມ່ວນພັດເວົ້າສອຍຂຶ້ນອີກ ໄດ່ແດ່ ແຕ່ລາວບໍ່ເວົ້າຢອກຂ້ອຍໃສ່ອ້າຍສິນຊາຍ ຢູ່ຕໍ່ໜ້ານວນຈິນ, ຕາມທຳມະດາ ເພິ່ນກັບອ້າຍສິນຊາຍ ບໍ່ເຄີຍປະຂ້າງກັນຈັກເທື່ອ ຍາມໄປອອກແຮວວານຄືແນວນີ້, ເພາະເພິ່ນມັກມ່ວນ ມັກຊື່ນ ແລະ ມັກຮ້ອງເພງໃຫ້ອ້າຍສິນຊາຍເສບເລື້ອຍໆ.

- ເຮີຍ! ບໍ່ແມ່ນພີລາກອນເຮັດໜ້າໜຸ້ງ ຍ້ອນບໍ່ເຫັນໃຜຜູ້ໜຶ່ງຕິບໍ? ອ້າຍສິງຄຳ ເປັນຕົວການຈັກເລື່ອງທີ່ ພີລາກອນ ພອນຄິດຂຳໄວ້ໃນໃຈຂຶ້ນມາ.

- ແມ່ນແຫລະເວີຍ! ສຽງສະໜັບສະໜູນຂອງໝູ່ທີ່ຈຸ້ມກັນລໍຖ້າ ລຶດດັງຕຶ້ງຂຶ້ນ ເຮັດໃຫ້ພີລາກອນລະອາຍ ຈົນຫົວໃຈເຕັ້ນ.

- ສິນພໍດອກ! ອົດໃຈ ຈັກໜ່ອຍເດີ ພີລາກອນ, ເຂົາພວມໄປຊ່ວຍໝູ່ຫາມເປົາເຂົ້າຢູ່ສາງບຶດໜຶ່ງ ເຂົາກໍມາຮອດລະ! ອ້າຍບົວເພັດ ເວົ້າຄວາມນີ້ສຸດ ກໍພໍດີລົດມາຕອນຄືນໄປອອກແຮວວານແລ່ນຕິດມາ, ດົນເຕີບສິນຊາຍ ແລະ ໝູ່ກໍຫາມເປົາເຂົ້າທີ່ກອງໄປນຳກໍມາຮອດພໍດີ.

- ໄວໆແດ່ສິນຊາຍ! ໃຜຜູ້ໜຶ່ງຄອງຖ້າເຈົ້າຢູ່ໄດ໋! ອ້າຍສິນພອນເກາະເລື່ອງຂຶ້ນມາຢອກອີກຕື່ມ.

- ແມ່ນໃຜເກາະ! ສິນຊາຍພັດຖາມຈົ້ເຂົ້າອີກ, ເຮັດໃຫ້ພີລາກອນໜ້າແດງຂຶດງ ທັງຈົ່ມຢາກຮ້າຍໃຫ້ສິນຊາຍຢູ່ໃນໃຈວ່າ: ຊຸ່ຍ! ຈັ່ງແມ່ນບໍ່ຈັກຄວາມ ອ້າຍອັນນີ້ກະດາຍ, ເຂົາຊອກເລື່ອງມາຢອກໂຕກໍບໍ່ຮູ້ຈັກ, ຜູ້ຕອບຄຳຖາມ ອ້າຍສິນຊາຍ ກໍແມ່ນອ້າຍສິງຄຳ ເພິ່ນເຮັດ "ບຸຍສິບ" ມາໃສ່ນາງແລວໝົດທຸກຄົນກໍເຂົ້າໃຈ ແລະ ໂຮເຊົ້ງຂຶ້ນ. ເວລານັ້ນ ນາງກັບອ້າຍສິນຊາຍກໍພໍແຕ່ປະສົບສາຍຕາກັນ ແລ້ວເຂົາກໍມີແຕ່ຍິ້ມຢູ່ຊື່ໆ, ນາງຢາກເວົ້າແນວໃດແນວໜຶ່ງ ເພື່ອຂໍໂທດນຳເຂົາ ເພາະຢ້ານເຂົາເສຍໃຈໃຫ້ຕົນໃນມື້ນັ້ນ ແລະ ຄິດຢາກສະແດງຄວາມຊົມເຊີຍເຂົາທີ່ຕື່ນຕົວໄປອອກແຮວວານນຳໃນມື້ນີ້. ແຕ່ກໍບໍ່ມີໂອກາດໄດ້ເວົ້າຂຍັງພໍຄວາມ, ລົດຕິດ ຈັກ

ແລ້ວ ໝູ່ກໍເລີຍຮ້ອງນາງຂຶ້ນໄປນັ່ງເທິງເບາະທ້ອງຂັບ, ຈາກນັ້ນ ກໍເລີ່ມແລ່ນມຸ່ງໜ້າອອກສູ່ເສັ້ນທາງໄປຫາດານສູງ.

ມື້ໜຶ່ງຜ່ານໄປ...ມື້ສອງຜ່ານໄປອີກ, ມື້ນີ້ເປັນມື້ທີ່ສາມ ແລະກໍແມ່ນມື້ສຸດທ້າຍຂອງແຜນການຕັດໄມ້. ພວກອ້າຍນ້ອງກໍຈະໄດ້ຢຸດເຮັດປ່າ ຂຶ້ນພູອີກແລ້ວ. ພິລາກອນ ພ້ອມດ້ວຍໝູ່ ເອື້ອຍນ້ອງລຸກຂຶ້ນມາໜຶ້ງເຂົ້າ ແລະຕົ້ມນ້ຳໄວ້ແຕ່ເດິກ ແລ້ວພວກນາງກໍຈັດແຈງເຂົ້າປາອາຫານສຳຫລັບ ປັ້ນເຂົ້າໃຫ້ອ້າຍນ້ອງທຸກຄົນ ເພື່ອກຽມຂຶ້ນພູອີກ. ຫລັງຈາກປັ້ນເຂົ້າເຈົ້າແລ້ວນາງກໍໄປເອົາບັ້ງທິງ ແລະ ບີ້ດົວນ້ຳມາຮ້າຍເອົານ້ຳໃຫ້ອ້າຍນ້ອງ ໄປກິນນຳທາງເມື່ອເວລາຕັດໄມ້. ແຕ່ເຊົ້ານີ້ນີ້ ບໍ່ເຫັນສົມຊາຍອອກມາຮັບເອົາບີ້ດົວນ້ຳນຳພິລາກອນອີກ, ນາງນັ່ງຄິດແປກໃຈຢູ່ຜູ້ດຽວວ່າ:ເປັນຫຍັງ ປານນີ້ອ້າຍສົມຊາຍຈຶ່ງຍັງບໍ່ມາຮັບເອົາບີ້ດົວນ້ຳ ຫລືລາວບໍ່ສະບາຍບໍ? ໝູ່ເພີ່ນຄືບໍ່ເຫັນເວົ້າຫຍັງໃຫ້ນາງຮູ້ນຳ, ໃຜກໍກຽມຕົວຂຶ້ນພູໝົດແລ້ວເດ! ຫລັງຈາກນາງຄິດແນວນັ້ນດົນເຕີບ ຈຶ່ງເຫັນສົມຊາຍ ຫອບເສື້ອແລ່ນມາຫານາງດ້ວຍທ່າທີຟ້າວຟັ່ງ ກະລຶກກະລົນ.

- ພິລາກອນ! ນ້ອງມີເຂັມ ແລະ ດ້າຍບໍ? ຊ່ອຍຫຍິບກະດຸມເສື້ອໃຫ້ແດ່, ບໍ່ຮູ້ວ່າມັນຂາດອອກແຕ່ຍາມໃດ! ສົມຊາຍຍື່ນເສື້ອພ້ອມກັບກະດຸມ ທີ່ເອົາມາກໍຊອກໄດ້ຍື່ນໃຫ້ພິລາກອນ.

- ອ້າຍນີ້ກໍໂພດ! ແຕ່ກີ້ເຮັດຫຍັງຢູ່? ພິລາກອນເວົ້າ ຄືຈັ່ງວ່າສິຂັດດງໃຈ.

- ຄືນນີ້ອ້າຍຢ້ານລົບກວນນ້ອງ ເພາະກິນເຂົ້າແລງຄ່ຳໂພດ. ພໍສົມຊາຍເວົ້າສຸດຄວາມ ສຽງເຂັນຂອງໝູ່ທີ່ຢືນລໍຖ້າຢູ່ນອກປະຕູຄ້າຍກໍຮ້ອງມາໃສ່ເປັນຈັ້ນໆ.

- ໂອ້ຍແດ່!...ໂອຍ! ແນວວ່າຄືນນີ້...ຮ...ຈັ່ງແມ່ນມັນ ລີງເຮືອນຍາກນໍ!

- ເອົາໄປງ... ຈັກໜ່ອຍໝູ່ຊິເກາະຫາເລື່ອງມາຢອກອີກແລ້ວ.

ພິລາກອນຟ້າວຍັດເສື້ອໃສ່ມືໃຫ້ສົມຊາຍ ແລ້ວເຂົາກໍສວມປຸບປັບ ເຂົ້າຄີງ, ມືຄວາຈັບເອົາບິດວນ້ຳ ຟ້າວແລ່ນອອກໄປ, ຄາວໜຶ່ງພັດຕາວໜ້າມາຫາພິລາກອນ ພ້ອມທັງສັ່ງໄວ້ວ່າ:

"ມື້ແລງພວກອ້າຍຊິເອົາໜໍ່ໄມ້ມາແກງ, ກະວ່າຊິເຊີນອ້າຍນ້ອງກອງພັນທີສອງມາກິນເຂົ້າສາມັກຄີຮ່ວມກັບພວກເຮົາ. ນ້ອງກຽມມ່າເຂົ້າເບືອໄວ້ຖ້າເດີ!"

ແລ້ວເຂົາກໍແລ່ນຫລີບອອກຈາກປະຕູຄ້າຍ ຈົນລືມຂອບໃຈພິລາກອນຊ້ຳ ພິລາກອນລັກອົດຫົວຢູ່ໃນໃຈຕໍ່ທ່າທີກະຟັກກະຟ່າມຂອງສົມຊາຍ ຈັ່ງໃດກໍ ມີຫວັງຖືກອ້າຍສົງຄຳຍືນຖ້າຢູ່ນອກປະຕູຄ້າຍຢອກອີກຄັກ. ແຕ່ສິ່ງຊຳຄັນແມ່ນນາງຈະບໍ່ລືມຄວາມສົມຊາຍສັ່ງໄວ້, ພວກເຮົາຊິເຊີນອ້າຍນ້ອງກອງພັນ ທີສອງມາຮ່ວມພາເຂົ້າສາມັກຄີນຳ ເພາະມື້ອື່ນເຊົ້າ ພວກເຮົາກໍຈະໄດ້ຈາກເພິ່ນກັບຄືນແລ້ວ. ຄິດເບິ່ງພຽງແຕ່ມາຢູ່ນີ້ສາມວັນເທົ່ານັ້ນ, ຄວາມ ສະໜິດແໜ້ນຂອງພວກເຮົາກັບອ້າຍນ້ອງກອງພັນທີ່ສອງກໍຄືປາກັບນ້ຳ, ເພິ່ນໃຫ້ຄວາມສະດວກ ແລະ ອົບອຸ່ນແກ່ພວກເຮົາທຸກຢ່າງ ໃນນາມເພິ່ນເປັນຜູ້ປົກປັກຮັກສາຄວາມສະຫງົບສຸກຢູ່ໃນເຂດນີ້. ເພິ່ນມອບເຮືອນໃນຄ້າຍສອງຫລັງຂອງພວກອ້າຍນ້ອງນັກຮົບທີ່ອອກໄປເຄື່ອນໄຫວເຂດນອກໃຫ້ພວກເຮົາພັກຊົ່ວຄາວ. ແຕ່ລະຄືນຜ່ານມາ ຫລັງຈາກພວກເຮົາກິນແລງແລ້ວ ກໍຈັດລາຍການມ່ວນຊື່ນ ດ້ານໜຶ່ງກໍແມ່ນເພື່ອຖອດຖອນບົດຮຽນ ແລະ ສະຫລຸບວຽກງານປະຈຳວັນ. ພວກເຮົາກໍເຊີນເອົາອ້າຍນ້ອງກອງພັນທີ່ສອງ ມາຟ້ອນລຳວົງສາມັກຄີນຳ. ຟ້ອນລຳວົງອ້ອມໄຟກອງຮາ ຈັ່ງແມ່ນມັນມ່ວນ ! ອ້າຍນ້ອງກອງພັນທີ່ສອງເປັນຜູ້ຕີກອງ, ອ້າຍສົມພອນເປັນຜູ້ຮ້ອງເພງ , ອ້າຍສົມຊາຍເປັນຜູ້ເຊຍກີຕາ. . .ໂອຍ! ຟັງແລ້ວເກີນວ່າມັນປະສານ ກົມກຽວກັນດີແທ້, ມັນມ່ວນອອນຊອນ ແລະ ເປັນຕາຟ້ອນອີ່ຫລີ ເພາະສຽງ

ກອງທຳນອງເສບມັນບື້ມບວນແບບລຳວົງລາວແທ້ງ. ຄັນວ່າບໍ່ໄດ້ອ້າຍ ສິນຊາຍມານຳ ຈັກວ່າພວກເຮົາຊິມ່ວນກັນຮອດຂັ້ນໃດເດນໍ! ຕາມອ້າຍສິງຄຳເລົ່າສູ່ຟັງ, ຕອນເພິ່ນເອົາບີດົງມາຮ້າຍນ້ຳເຊົ້າວານນີ້ ເພິ່ນວ່າ ສິນຊາຍເຮັດວຽກຫາວຫັນແທ້ງ, ຄິດເບິ່ງແຕ່ວ່າໝູ່ອາງຄາດໝາຍໃຫ້ໝັ້ນໜຶ່ງ ຜູ້ໜຶ່ງຕັດໄມ້ໃຫ້ໄດ້ ໕໐ ລຳ ພ້ອມກັບແກ່ລົງຈາກພູມາກອງໄວ້ແຄມ ທາງ, ເວື່ອນໄຂຂຶ້ນພູ ແລະ ແກ່ໄມ້ລົງມາກໍຍາກພໍແຮງແລ້ວ, ແຕ່ປານນັ້ນ ສິນຊາຍຍັງສາມາດຕັດໄດ້ ໑໐໐ ລຳຕໍ່ມື້ ແລະ ເຂົາກໍບໍ່ເຄີຍສະແດງ ຄວາມອິດເມື່ອຍ ຫລື ງົ່ວງຮວທໍ້ຖອຍແຕ່ປະການໃດ. ພິລາກອນເລີຍເວົ້າ ເສີມທ້າຍອ້າຍສິງຄຳວ່າ:

"ແຫລະບໍ! ອ້າຍສິນຊາຍ ລາວກໍກຳເນີດຢູ່ບ້ານພູ ເມືອງຜາ"

ແຕ່ອ້າຍສິງຄຳ ເພິ່ນຊ້ຳພັດບໍ່ວ່າແນວນັ້ນ ເພິ່ນວ່າ:

"ບໍ່ແມ່ນຈັ່ງຊັ້ນດອກ! ອາດແມ່ນຢູ່ທາງຄ້າຍມີຜູ້ແຕ່ງເຂົ້າເລງ ແກງງາຍແຊບໆໄວ້ຖ້າຕີບໍ?". ພິລາກອນຄິດຢາກຮ້າຍໃຫ້ອ້າຍສິງຄຳ:

"ຮື! ມີແຕ່ທາເລື່ອງມາຢອກ!" ແລ້ວນາງກໍຊິດນ້ຳຕົ້ມກິນຍັງອຸ່ນໆ ຢູ່ໃນຈອກທີດຫລັງເພິ່ນຈົນຮ້ອງສຽງເຫລີໄປ.

ມື້ສຸດທ້າຍຂອງການຂຶ້ນພູ ຕັດໄມ້ຄືວ່າຜ່ານໄປໄວແທ້ງ, ເຮັດໜ້າຍັງກໍບໍ່ທັນໄດ້ພໍເທົ່າໃດ ຕາເວັນກໍເລື່ອນລັບລົງປາຍໄມ້ແລ້ວ. ພິລາກອນຢູ່ ຄ້າຍພ້ອມກັບໝູ່ແມ່ຍິງ ໑໐ ປາຍຄົນ ຟ້າວກຽມໜົ້ງເຂົ້າຕົ້ມນ້ຳ ແລະ ເກັບຜັກໄວ້ແຕ່ງກິນແລງ, ໂດຍສະເພາະແລ້ວກໍແມ່ນກຽມເຮັດແກງໜໍ່ໄມ້ທີ່ ສິນຊາຍສັ່ງຄວາມໄວ້ ເພື່ອຊິເຊີນອ້າຍນ້ອງກອງພັນທີສອງມາຮ່ວມພາເຂົ້າສາມັກຄີນຳ.

ມື້ນີ້ ອ້າຍນ້ອງກັບຈາກໄປຕັດໄມ້ຢູ່ພູມາເວັນກ່ວາປົກກະຕິ. ສິນຊາຍ, ສິນພອນ ແລະ ສິງຄຳ ພາກັນປັ້ໜໍ່ໄມ້ມາເຕັມແຮງ, ສ່ວນໝູ່ຜູ້ອື່ນໆ ກໍຈັບແມງແຄງ ແລະ ງົມເອົາ "ຫອຍລັກຕັກ" ຈັບຢູ່ຕາມກ້ອນຫີນໃນ ນ້ຳ

ຫ້ວຍນ້ອຍໆລຽບຕີນພູມາພ້ອມ. ພວກເຂົາເຈົ້າປະເປັເຄື່ອງໃຫ້ເອື້ອຍນ້ອງແຕ່ງກິນ ແລ້ວກໍພາກັນໄປຫາຈອກອາບນໍ້າ. ສ່ວນອ້າຍສົມຊາຍແລະ ອ້າຍສົມພອນຍັງຢູ່ປອກຫນໍ່ໄມ້ຊ່ວຍພວກເອື້ອຍລ້ຽງ ຈົນວ່າຈັກເປັນຕ່ອນຕື້ມ ໃສ່ຫມໍ້ແລ້ວເພິ່ນຈຶ່ງໄປອາບນໍ້າ.

ກ່ອນແສງສີທອງຂອງດວງອາທິດ ຈະສະຫລາຍຕົວຈາກຂອບຟ້າເບື້ອງຕາເວັນຕົກ ກິ່ນຫອມຂອງພັກຄະແຍງ ແກງຫນໍ່ໄມ້ໃສ່ຫອຍ, ແຈ່ວ ແມງແຄງ ແລະ ອາຫານແນວອື່ນໆອີກຫລາຍຢ່າງກໍສົ່ງກິ່ນຫອມເກືອກກົ້ວໄປທົ່ວບໍລິເວນນັ້ນ. ພໍດີຜູ້ຕາງຫນ້າພວກອ້າຍນ້ອງໃນກອງພັນທີສອງທີ່ນັກ ສຶກສາໄປເຊີນເອົາເພິ່ນກໍມາເຖິງ, ກ່ອນລົງມືກິນ ຜູ້ຕາງຫນ້າຂະບວນກໍໄດ້ກ່າວສະແດງຄວາມຂອບອົກຂອບໃຈຕໍ່ພວກອ້າຍນ້ອງໃນກອງພັນທີ່ສອງ ທີ່ໄດ້ອໍານວຍຄວາມສະດວກ ແລະ ຄວາມປອດໄພ ພ້ອມທັງໃຫ້ການຕ້ອນຮັບ ຢ່າງອົບອຸ່ນ ຈົນກ່ວາວຽກງານສໍາເລັດຕາມຄາດຫມາຍ, ຖືວ່ານີ້ກໍເປັນການປະກອບສ່ວນສໍາຄັນອັນຫນຶ່ງເຂົ້າໃນການກໍ່ສ້າງ ແລະ ຊຸກຍູ້ການສຶກສາ ຂອງຊາດໃຫ້ກ້າວຫນ້າຂະຫຍາຍຕົວຂຶ້ນຈັກໄດ້. ສຽງຕົບມືມ້ວນທ້າຍການ ອອກຄໍາເຫັນຂອງສະຫາຍຫົວຫນ້າຂະບວນຈົບລົງ ຕໍ່ມາພາເຂົ້າສາມັກຄີ ເລີ່ມເປີດຂຶ້ນດ້ວຍບັນຍາກາດສະຫນິດສະຫນົມທັງອົບອຸ່ນ ແລະ ເປັນກັນເອງ ທີ່ສຸດ.

ຄາບເຂົ້າແລງເສັດສິ້ນລົງກໍພໍດີ ໄຟກອງຮ້ານຮຸ່ງສະຫວ່າງຂຶ້ນແຈ້ງທົ່ວບໍລິເວນນັ້ນ, ຄວາມມືດສະຫລົວຖືກຂັບໄລ່ອອກໄປນອກຄ້າຍ, ຈົນສາມາດແນມເຫັນໃບຫນ້າ ແລະ ຮອຍຍິ້ມຂອງຫມົດທຸກຄົນ. ສຽງກອງລໍາວົງຂອງອ້າຍນ້ອງກອງພັນທີສອງ ທີ່ມາຮ່ວມມ່ວນຊື່ນນໍາກໍດັງຂຶ້ນ ເປີດເປິ່ງ! ເປີດເປິ່ງ! ປະສານກັບສຽງເພງ ສຽງກີຕາຂອງສົມຊາຍ ເຮັດໃຫ້ບັນຍາກາດອ້າງວ້າງເປົ່າປ່ຽວໃນປ່າດົງວົງກົດແຖບນັ້ນ ກາຍເປັນຄືນທີ່ຟົດຟື້ນ ແລະມີຊີວິດຊີວາຂຶ້ນກ່ວາຍາມໃດຫມົດ. ຮອບລໍາວົງສາມັກຄີຮອບປະຖົມມະເລີກ,

ຮອບພິເສດຈັດເປັນກຽດແກ່ທ່ານຜູ້ແທນ ແລະ ຮອບທຳມະດາຂອງໝົດໝູ່ກັນ ກໍເປີດຂຶ້ນຢ່າງຕິດຕໍ່ໜໍ່ເນື່ອງກັນ. ພິລາກອນນາງນ້ອຍມັດຖ້ວຍຊາມແລ້ວ ກໍແຕ່ງເຄື່ອງມາເສີບນ້ຳໃຫ້ແຂກທີ່ເຂົ້າຮ່ວມ ແລະ ໃຫ້ນັກເສບນັກຮ້ອງ, ບາງຄັ້ງ ນາງກໍອອກໄປຈັບຈອງເອົາອ້າຍນ້ອງກອງພັນທີ່ສອງໄປເປັນ ຄູ່ຟ້ອນຕາມມາລະຍາດຂອງຍິງສາວຜູ້ບໍ່ຖືຕົວ. ລາຍການມ່ວນຊື່ນກໍມີການສະຫຼັບສາກດ້ວຍສຽງຂັບສຽງລຳຂອງໝູ່ນັກສຶກສາຄຽງກັນທີ່ມາຈາກ ແຕ່ລະທ້ອງຖິ່ນ ແລະ ມີການສະຫຼຸບຜົນສຳເລັດຂອງວຽກງານ ຕະຫຼອດຮອດມີການສະເໜີຕົວບຸກຄົນດີເດັ່ນໄປພ້ອມ, ໃນພິທີມ່ວນຊື່ນ ອ້າຍສິງຄຳ ເພີ່ນເປັນໂຄສົກສຽງທອງປະຈຳລາຍການ, ຈັ່ງແມ່ນເພີ່ນເວົ້າດີເວົ້າເກັ່ງ ທັງແຈ້ງຈັດ ປາກກັບເວົ້າໃສ່ເຄື່ອງຂະຫຍາຍສຽງ. ສິ່ງທີ່ເຮັດໃຫ້ ພິລາກອນ ປະຫລາດໃຈແຮງກໍແມ່ນເວລາເພີ່ນປະກາດຊື່ຕົວເດັ່ນ ເພາະໃນນັ້ນ ມີຊື່ນາງຖືກຄັດເລືອກໃຫ້ເປັນຕົວແທນເອື້ອຍນ້ອງຜູ້ດີເດັ່ນໃນການແຕ່ງຢູ່ຄົວກິນ ພ້ອມດຽວກັນນັ້ນກໍມີຊື່ສົມຈາຍທີ່ຖືກຄັດເລືອກໃຫ້ເປັນຕົວແທນອ້າຍນ້ອງ ຜູ້ດີເດັ່ນໃນການຕັດໄມ້ໄດ້ເກີນຄາດໝາຍ. ຈາກນັ້ນແລ້ວ ອ້າຍໂຄສົກສິງຄຳ ຜູ້ "ສະຫຼຸອກກອກ" ກໍປະກາດຈັດຮອບລຳວົງສານັກຄີຮອບພິເສດ ເປັນກຽດໃຫ້ແກ່ຕົວແທນເດັ່ນທັງສອງ. ພິລາກອນ ຍົກບ່າໄຫລ່ທັງສອງ ເບື້ອງພ້ອມກັບເອົາມືອັດປາກເຊື່ອງຮອຍຍິ້ມດ້ວຍຄວາມລະອາຍ ເມື່ອໄດ້ຍິນເພີ່ນເຊີນໃຫ້ນາງອອກໄປປະກົດຕົວຢູ່ກາງເວທີ. ພິລາກອນທຳທ່າຟ້າວຈັບເອົາຈອກນ້ຳອອກໄປເສີບໃຫ້ແຂກເຮັດເສີຍມັ່ງຢູ່ ຄືຫູບໍ່ໄດ້ຍິນ, ແຕ່ປານນັ້ນ ກໍຍັງສະເໝີນຈົນຈອກນ້ຳຊິ ຫລຸດຈາກມື ຍ້ອນຄວາມສະບັ້ນສັ່ນເຊັນ ເພາະສິ່ງທີ່ນາງສະຫງວນໄວ້ໃນໃຈພ້ອມຈະຖືກໝູ່ເປີດເພີຍ. ນາງທຳທ່າ ເຮັດໃຈແຂງຢາຍນ້ຳຕໍ່ໄປຄືກັບຫູບໍ່ໄດ້ຍິນຫຍັງ ແຕ່ກໍທົນສູ້ແສງຕາຂອງແຂກແລະໝູ່ເພື່ອນທີ່ຢາກເຫັນການອອກໄປປະກົດຕົວຂອງນາງບໍ່ໄດ້, ນາງຈຶ່ງ ຕັດສິນໃຈຍ່າງອອກສູ່ເວທີ ດ້ວຍຫົວໃຈກະວາງກະເວ. ພໍແຕ່ມາບເຫັນ ນາງ

ຢ່າງອອກໄປບໍ່ທັນຮອດເວທີຊ້ຳ ກໍບໍ່ຈັກວ່າສຽງໂຮສຽງຮ້ອງ ສຽງ ເຊບ, ສຽງຕົບມືດັງຟົດສະໜັ່ນຂຶ້ນຢ່າງຄັບຄັ່ງ ອັນເຮັດໃຫ້ສາຍຕາຂອງຜູ້ຊົມຫຼາຍຄົນຈັບຈ້ອງເບິ່ງໃບໜ້າຂອງນາງດ້ວຍຄວາມສົງໄສທີ່ພົດຈາກຄູ່ຟ້ອນທຳມະດາ.

ສົມຊາຍ ເອົາປ່ອຍໃຫ້ນາງຢືນເກີະຢູ່ຄາວໜຶ່ງ ແລ້ວຈຶ່ງວາງກິຕາໃຫ້ໝູ່ເສບເພື່ອອອກໄປຈັບຈອງນາງເປັນຄູ່ຟ້ອນ. ສຽງຕົບກອງ ສຽງ ຮ້ອງຊົມເຊີຍດັງສະໜັ່ນຂຶ້ນອີກຊຸດໜຶ່ງ ເພື່ອເປັນກຽດແກ່ຄູ່ຟ້ອນທີ່ອອກໄປ ປະກົດຕົວຮ່ວມກັນ. ເຮັດໃຫ້ພິລາກອນ ແລະ ສົມຊາຍເຫຼືອດສາຍຕາ ເບິ່ງກັນດ້ວຍຄວາມອຽງອາຍທີ່ເຊື່ອງຊ້ອນຢູ່ໃນຫົວໃຈ, ແລ້ວລຳວົງສາມັກຄີ - ຮອບພິເສດກໍ່ເລີ່ມເປີດຂຶ້ນ ເພື່ອເປັນກຽດແກ່ເອົາທັງສອງທ່າມກາງຄວາມອົບອຸ່ນຈາກຄູ່ຟ້ອນອື່ນໆຈົນເວທີແໜ້ນຂັ້ງ. ພິລາກອນ ແນມເບິ່ງສອງແຂນຂອງສົມຊາຍຟ້ອນຕາກອອກເປັນວົງ ຄືກັບຢາກຈະອບອຸ້ມເອົາຮ່າງຄີງ ແລະ ດວງໃຈຂອງນາງເຂົ້າແນບໄວ້ຢູ່ໃນອ້ອມແຂນຂອງເຂົາຜູ້ດຽວ, ແຕ່ ເຂົາທັງສອງກໍບໍ່ສາມາດເວົ້າຫຍັງອອກມາໄດ້, ພຽງແຕ່ທຳຄວາມເຂົ້າໃຈ ຊຶ່ງກັນ ແລະ ກັນດ້ວຍແວວຕາ ແລະ ຮອຍຍີ້ມເທົ່ານັ້ນ. ຮອບລຳວົງ ສາມັກຄີຮອບພິເສດຈັດໃຫ້ສະເພາະພິລາກອນ ແລະ ສົມຊາຍຈົບລົງ, ອາຍ ສົງຄຳໂຄສົກຜູ້ "ປາກເອັດ" ກໍຍົກຍ້ອງວ່າ: ຄູ່ພິລາກອນຟ້ອນງາມ ທັງ ສົມທັງຄືກັນ ຈົ່ງຊັ້ນຈົ່ງຊູ້ ແລ້ວເພີ່ນກໍຫາລ່າຍປະກາດມອບລາງວັນໃຫ້ຄູ່ ຟ້ອນທັງສອງ. ໂອຍ! ຈັ່ງແມ່ນຊາດພິລາກອນຄິດລະອາຍຈົນໃຈສະເໜັ້ນເມື່ອສອງຄົນພວກເຂົາອອກໄປຢືນປະກົດຕົວຢູ່ກາງເວທີອີກເທື່ອໜຶ່ງ ເພື່ອ ຮັບລາງວັນ, ອັນພິລຶກຫຼາຍກໍແມ່ນ "ປ້ອນກ້ວຍສຸກ" ລາງວັນຕົວເດັ່ນ,ພິລາກອນຄິດອາຍເຫຼືອງຄີງ ຈົນໜ້າກໜາວແດງເຍືອງ ເມື່ອນາງປອກກ້ວຍຍັດໃສ່ປາກໃຫ້ສົມຊາຍ ແລະ ສົມຊາຍກໍປອກກ້ວຍຍັດໃສ່ປາກນາງ ເຊັ່ນດຽວກັນ.

ພິລາກອນບໍ່ຈັກຊິເຊື່ອງຄວາມອາຍໄວ້ໃສ ກໍຟ້າວເອົາມືອັດປາກ ອົມກ້ວຍແລ່ນເຂົ້າໄປລີ້ຢູ່ທາງເບື້ອງຫລັງ ໝູ່ແມ່ຍິງທ່າມກາງສຽງໂຮສຽງຫົວດ້ວຍຄວາມພໍໃຈຂອງພູ້ເຂົ້າຮ່ວມທຸກຄົນ. ຈາກຮອບລຳວົງສາມັກຄີຮອບ ພິເສດເປັນກຽດແກ່ຕົວເດັ່ນຮອບນີ້ ມັນເຮັດໃຫ້ພິລາກອນຄິດໝົດຄືນ ຈົນຮອດຕື່ນເຊົ້າຂອງວັນກັບຈາກດ່ານສູງວ່າ: ສົມຊາຍຈະເຂົ້າໃຈຄວາມໝາຍຂອງຮອບລຳວົງສາມັກຄີຮອບພິເສດນັ້ນແນວໃດ?

ກັບຈາກດ່ານສູງໄດ້ສອງອາທິດ, ຫໍພັກ ແລະ ຫ້ອງອາຫານກໍມີ ຝາແອ້ມຈົບງາມ, ທຸກຄົນມີບ່ອນກິນ ບ່ອນນອນສະດວກສະບາຍຍ້ອນວ່າເຮືອນປຸກໃໝ່ໄດ້ສຳເລັດ ແລະ ສັບຊ້ອນຄືນເຂົ້າຢູ່ເປັນທີ່ຮຽບຮ້ອຍແລ້ວ. ຊີວິດການຄົ້ນຄວ້າຮ່ຳຮຽນຂອງສົມຊາຍ ແລະ ໝູ່ເພື່ອນນັກສຶກສາທຸກຄົນ ເລີ່ມເຂົ້າສູ່ຄວາມປົກກະຕິ. ຄ່ຳມື້ນັ້ນ ຫລັງຈາກກັບມາແຕ່ກິນເຂົ້າຢູ່ຫ້ອງ ອາຫານແລ້ວ ພິລາກອນກໍຈັບເອົາຖົງກໍ້ແລ່ນ ແລະ ໄມ້ຖັກອອກມານັ່ງຖັກເສື້ອຢູ່ກ້ອງລ່າງຫໍພັກ, ນາງຄິດວ່າ ຖັກເສື້ອໄດ້ຈັກສອງສາມຮອບກ່ອນ ຈຶ່ງຈະຂຶ້ນຫ້ອງຄົ້ນຄວ້າ, ຈັກໜ້ອຍຍາມໜາວມາຮອດພໍຊິມີແນວຫົ່ມອຸ່ນຄີງແດ່. ພໍດີສະຫາຍບົວເພັດ ຫົວໜ້າໜ່ວຍຊາວໜຸ່ມຍິງເຂົ້າມານັ່ງປ່ອກລີ້ງ ທາງຂ້າງ ບໍ່ເວົ້າໜ້າເວົ້າຫລັງພໍຄວາມ ຈົນພິລາກອນຕື່ນ.

- ອຸຍ! ຈັ່ງແມ່ນມາມິດມາມີ່ແທ້ນໍ ອ້າຍກະດາຍ!

ບົວເພັດບໍ່ປາກໄດ້ແຕ່ຫົວຍຸ້ມໆ ແລ້ວເຂົາຈຶ່ງເວົ້າຂຶ້ນວ່າ:

- ຄ່ຳມື້ນີ້ນ້ອງຖືກເປັນ ປ.ກ.ສ ບໍ? (ໝາຍຄວາມວ່າ ໜ່ວຍປ້ອງກັນແພແດງຂອງໂຮງຮຽນ) ເພາະພິລາກອນ ກໍແມ່ນສະມາຊິກຂອງ ກອງປ້ອງກັນຄວາມສະຫງົບ.

- ແມ່ນແທ້! ແຕ່ວ່ານ້ອງຖືກຍາມຕອນເດິກ (ເວລາ ໙ ໂມງ ຫາ ໑໐ ໂມງ ນ໐).

- ເອົາໃຈໃສ່ເດີ! ຍາມຕອນເດິກໃຫ້ມີສະຕິລະວັງຕົວແດ່ ຊິເນົາ

ແຕ່ຖັກເສື້ອບໍ່ໄດ້ເລື່ອງໄດ໋! ເວົ້າແລ້ວສະຫາຍບົວເພັດກໍຖິ້ມແສງຕາທັນໄປສົນໃຈກັບລາຍເສື້ອຂອງນາງທີ່ພວມຖັກຢູ່:

- ໂຫ! ເສື້ອຜືນນີ້ລວດລາຍງາມແທ້ນໍ! ບົວເພັດຫ້ວງຂື້ນ.

- ພໍຈໍານີ້ແຫລວ ແບບຈາງໃຫມ່. ພິລາກອນຕອບຢ່າງຖະຫນອມຖ່ອມຕົວ.

- ໃຜເດນໍ ຈິໄດ້ເປັນເຈົ້າຂອງ? ບົວເພັດຖາມ ເພື່ອເຈາະຫາເລື່ອງມາຢອກ.

- ກະນ້ອງນີ້ລະ ຈິແມ່ນໃຜ!

- ເສື້ອຜືນນີ້ ສີຫຍັງ? ບົວເພັດຕິຖາມແຍ່ເຂົ້າອີກ.

- ສີນ້ຳທະເລລະບໍ! ພິລາກອນ ຕອບສຽງໃສ.

- ບໍ່ແມ່ນສີທະເລດອກອ້າຍວ່າ, ນ້ອງເຄີຍເຫັນທະເລຈັ້ນບໍ? ບົວເພັດຖາມຈີ້ນເຂົ້າອີກ.

- ຄັນຈັ້ນ ອ້າຍວ່າສີອີ່ຫຍັງ? ພິລາກອນສໍ້ຄືນ.

- ອື່!...ຮື! ອ້າຍວ່າຄືສີນ້ຳອູຈະດີກວ່າ! ເມື່ອພິລາກອນ ສະເດືອກຮູ້ວ່າຕົນເອງຖືກສະຫາຍບົວເພັດຫາເລື່ອງມາຢອກໃສ່ສົມຊາຍກໍ ທຳທ່າຢາກຮ້າຍ ຈັບເອົາຫລັກຖັກປາຍແຫລມໆຈີ້ໃສ່ຄໍຫອຍຂອງສະຫາຍ ບົວເພັດ ຈົນສະເດີດອອກຈາກບ່ອນນັ່ງ ແລ້ວສະຫາຍຈື່ງປ່ຽນທ່າທີຫຍັບ ເຂົ້າມາລົມກັບພິລາກອນເລື່ອງໃຫມ່.

- ຂໍໂທດ ພິລາກອນ! ຄວາມຈິງອ້າຍບໍ່ຄິດວ່າຈິຢອກນ້ອງດອກ,ອ້າຍມີເລື່ອງໜຶ່ງຢາກລົມກັບນ້ອງໄດ໋!

- ເລື່ອງຫຍັງກໍເວົ້າມາຕີ້!

- ເລື່ອງ...ສົມຊາຍຫັ້ນລະ!

- ຫື...! ຈິຫາລາຍມາຢອກອີກໃດຫັ້ນ!

- ບໍ່ຫນາ! ອ້າຍຢາກໃຫ້ນ້ອງເວົ້າເລື່ອງຂອງສົມຊາຍສູ່ຟັງຈັກຫນ່ອຍ

ຊັ້ນດອກ!

ເປັນອັນວ່າ ພິລາກອນຍິນດີ ເລົ່າເລື່ອງຂອງສົມຊາຍທີ່ຜ່ານການຊຸກຍູ້ໃກ້ຊິດຕິດແທດຕາມຄຳມອບໝາຍຂອງການຈັດຕັ້ງສູ່ສະຫາຍບົວເພັດ ແຕ່ຕົ້ນຕະຫລອດປາຍ. ນາງເວົ້າວ່າ:

"ສະເພາະສົມຊາຍເຂົາເປັນຄົນດີ, ມີແນວຄິດຫລັກໝັ້ນຊົນຊັ້ນ ແລະ ນ້ຳໃຈຮັກຊາດດູດດື່ມເປັນພື້ນຖານ, ບັນຫາສຳຄັນທີ່ເຂົາຫລໍ່ຫລອມຕົນເອງໄດ້ກໍແມ່ນແນວຄິດເປັນເຈົ້າລວມໝູ່, ມີສະຕິຕໍ່ການຈັດຕັ້ງ, ມີຄວາມ ສາມັກຄີຕະຫລອດຮອດທັດສະນະການອອກແຮງງານ ຜ່ານຜ່າກັບຄວາມ ຫຍຸ້ງຍາກ ຊຶ່ງມັນບໍ່ແມ່ນເລື່ອງງ່າຍປານໃດ ທີ່ເຂົາເຄີຍຮຽນຢູ່ຕ່າງປະເທດຈະມາຫລໍ່ຫລອມໃຫ້ໄດ້ໃນມື້ໜຶ່ງຍາມດຽວ, ແຕ່ສົມຊາຍ ເຂົາຊ້ຳພັດຕັດ ສິນໃຈເຝິກຝົນກໍ່ສ້າງຕົນເອງຢ່າງບໍ່ລົດລະ, ການປາກເວົ້າ ກິລິຍາທ່າທີກໍຖືກຕ້ອງເໝາະສົມກັບແບບແຜນຂອງຄົນແບບໃໝ່, ຕະຫລອດຮອດການເອົາໃຈໃສ່ຄົ້ນຄວ້າຮ່ຳຮຽນວັຊາສະເພາະຂອງເຂົາກໍໄດ້ຮັບພົນດີ ແລະ ຊ່ວຍເຫລືອໝູ່ຄູ່ກໍດີ...ນ້ອງເອງເຫັນວ່າ ສົມຊາຍເຂົາມີເງື່ອນໄຂພຽງພໍທີ່ຈະເຂົ້າສັງກັດຢູ່ໃນການຈັດຕັ້ງຊາວໜຸ່ມຂອງພວກເຮົາແລ້ວໄດ໋!"

ສະຫາຍບົວເພັດງຽງຫູຟັງ ພິລາກອນ ດ້ວຍຄວາມຕົກຕອງ ແລະ ຄົ້ນຄິດຢ່າງຖີ່ຖ້ວນ ແລ້ວຈຶ່ງເວົ້າວ່າ:

- ອື່! ນ້ອງເວົ້າກໍຖືກແລ້ວ ແຕ່ກໍຕ້ອງຜ່ານມະຕິຕົກລົງຂອງສະມາຊິກທຸກຄົນຈຶ່ງຈະສົມບູນໄດ້.

- ຄັນຊັ້ນ, ອ້າຍມີຄຳເຫັນແນວໃດແດ່? ພິລາກອນຖາມເພື່ອ ຢາກຮູ້ຄຳແນະນຳຈາກສະຫາຍບົວເພັດຕື່ມອີກ.

- ຜ່ານມາ ອ້າຍເຫັນວ່າດີແລ້ວ ແລະ ຂໍຊົມເຊີຍທີ່ນ້ອງເຮັດ ຫລອນໜ້າທີ່.

- ຕໍ່ໄປຈະໃຫ້ນ້ອງເຮັດແນວໃດອີກ?

- ອື໋! ໃຫ້ນ້ອງສືບຕໍ່ຊ່ວຍເຫລືອກໍ່ສ້າງລາວຕື່ມ.

- ອູຍ! ນ້ອງຈົງໝູ່ເວົ້າຢອກໃຫ້ນ່າ!

- ອາວ! ມັນຊິເປັນຫຍັງ, ນ້ອງຊ່ວຍເຫລືອກໍ່ສ້າງໃຫ້ເຂົາເປັນຄົນດີໄດ້ມັນກໍເປັນຜົນງານຂອງນ້ອງຈັ້ນຕວາ! ຫລືວ່ານ້ອງຕ້ອງການຊິເອົາເຂົາເສີຍກໍແຮງດີລະບໍ? ສະຫາຍບົວເພັດເວົ້າຖືກບ່ອນຄັນທໍາເລີຍຖືກຝາມືຂອງ ພິລາກອນໂຍນລົງໃສ່ກາງຫລັງດັງ "ໂປກ!" ບາດແຮງໆ.

ກ່ອນໂມງຂຶ້ນຄົ້ນດວາຕອນຄ່ຳມື້ນັ້ນ ສົມຊາຍອອກມານັ່ງຕາກ ອາກາດຢູ່ຕັ່ງໜ້ານ້ອຍ ບ່ອນເຂົາເຄີຍພັກຜ່ອນ. ແຕ່ມື້ນີ້ເຂົາຮູ້ສຶກງຽບເຫງົາໃນຫົວໃຈ, ຟັງສຽງກີຕາກໍເປັນສີເສົ້າໆ ຄືກັບວ່າມັນພວມລະບາຍເພງ ຂອງຄວາມອຸກອັ່ງກັງວົນອອກມາ. ທັນໃດກໍມີສຽງໜຶ່ງດັງແຈ່ວຂຶ້ນຢູ່ຂ້າງເຂົາ.

- ອ້າຍສົມຊາຍ ເປັນຫຍັງສຽງກີດຕາອ້າຍຄືມາງຽບເຫງົາໂສກເສົ້າແທ້ທີ! ພິລາກອນຢຸດແວ່ຖາມເຂົາ ຂະນະທີ່ນາງພວມອຸ້ມປື້ມວ່າຈະຂຶ້ນຫ້ອງຄົ້ນຄວ້າ, ສົມຊາຍງວາກໜ້າໄປເບິ່ງພິລາກອນ ແລ້ວກໍຍິ້ມໃຫ້ນາງຄ່ອຍໆຈຶ່ງເວົ້າວ່າ:

- ອ້າຍພວມຄິດເຖິງອະດີດທີ່ດ່ານສູງ. ຄິດຮອດສາຍລົມທີ່ພັດປາຍໄມ້ແກວ່ງໄກວຢູ່ຕາມເປີ້ນພູ, ຄິດເຫັນຫ້ວຍນ້ຳໃສທີ່ເຄີຍອາບເຢັນເວລາອອກແຮງງານມາເມື່ອຍໆ ແລະ ຄິດຮອດຮອບລຳວົງສາມັກຄີຄືນສຸດທ້າຍ ກ່ອນພວກເຮົາຈະຈາກມາ. ດຽວນີ້ທຳມະຊາດແຫ່ງນັ້ນຄົງຈະງຽບເຫງົາ ເຊັ່ນກັບດວງໃຈເຮົາທີ່ເອີ້ນສັ່ງກ່ອນຈະຈາກມາ.

ເມື່ອສົມຊາຍເວົ້າມາຮອດນີ້, ຊວນໃຫ້ພິລາກອນຄິດເຫັນຮອບລຳ ວົງສາມັກຄີທີ່ຈັດພິເສດໃຫ້ຕົວເຕັ້ນລະຫວ່າງນາງກັບສົມຊາຍ ແລະ ນາງກໍຄິດວ່າ ອາດມີທ່າທີບາງອັນທີ່ນາງສະແດງອອກເວລານັ້ນ ເຮັດໃຫ້ສົມຊາຍ ບໍ່ຄັກໃຈນຳ, ເລື່ອງນີ້ ນາງຄິດວ່າ ຢາກເວົ້ານຳສົມຊາຍແຕ່ດົນແລ້ວ, ພໍດີມື້ນີ້ ເປັນໂອກາດໃຫ້ນາງຈະຕ້ອງທຳຄວາມເຂົ້າໃຈກັບສົມຊາຍສາກ່ອນ.

- ອ້າຍເຫັນວ່າແນວໃດ ທີ່ນ້ອງເປັນຄູ່ຟ້ອນຂອງອ້າຍໃນຄືນມື້ນັ້ນ. ພິລາກອນຖາມຢ່າງເປີດອົກເປີດໃຈກັບສົມຊາຍ.

- ມີແຕ່ຄວາມດີໃຈທີ່ໄດ້ເປັນຄູ່ຟ້ອນຂອງຕົວເດັ່ນ! ສົມຊາຍເວົ້າດ້ວຍສຳນຽງໜັກແໜ້ນ.

- ອ້າຍຊິມັກຍ້ອງຜູ້ອື່ນຫລາຍ! ມີຫຍັງບໍ່ຈົບບໍ່ງາມກໍຕຳໜິນ້ອງແດ່ລະບໍ?

- ອ້າຍຢາກໃຫ້ນ້ອງເປັນຜູ້ຊ່ວຍຕຳໜິ ກໍ່ສ້າງອ້າຍຫລາຍກວ່າຈຶ່ງຈະຖືກຕ້ອງ, ຜ່ານມາອ້າຍຄິດວ່າ ຍັງມີຫລາຍອັນບົກພ່ອງຢູ່. ສົມຊາຍ ເປັນຫ່ວງນຳຄວາມກ້າວໜ້າຂອງຕົນເອງທີ່ເຂົາໄດ້ຝຶກຝົນມາຈົນບາງຄັ້ງ ກໍເຮັດໃຫ້ເຂົາງຽບເຫງົາ.

- ເລື່ອງນີ້ຫວະທີ່ເຮັດໃຫ້ອ້າຍຕ້ອງງຽບເຫງົາໃຈ? ພິລາກອນ ຖາມຄືນ ແລ້ວນາງກໍເວົ້າຕໍ່ວ່າ: "ນ້ອງເຫັນອ້າຍຄືວ່າບໍ່ມີຫຍັງບົກພ່ອງເຖິງກັບຊິງຽບເຫງົາເສົ້າໂສກເລີຍນາ!"

- ແຕ່ວ່າ...ເຮັດແນວໃດ ອ້າຍຈຶ່ງຊິໄດ້ເປັນສະມາຊິກຊາວໜຸ່ມ ຜູ້ກ້າວໜ້າຄືໜູ! ສົມຊາຍໄດ້ລະບາຍຄວາມມຸ່ງຫວັງຂອງຕົນອອກຕໍ່ພິລາກອນຢ່າງເປີດອົກເປີດໃຈ.

- ເອີ! ເລື່ອງນີ້ ອ້າຍກໍບໍ່ຄວນທໍ້ຖອຍດອກ! ມັນຂຶ້ນກັບການເຝິກຝົນຕົນເອງຢ່າງບໍ່ລົດລະ ເດັດດ່ຽວໜຽວແໜ້ນ ແລະ ບໍ່ຄ້ອນແຄນຕໍ່ອຸປະສັກໃດໆ. ຢາກກາຍເປັນຊາວໜຸ່ມຜູ້ສົມບູນແບບ ມັນຕ້ອງໄດ້ຜ່ານຜ່າໃນແປວໄຟແຫ່ງການທົດສອບຕົນເອງຢູ່ສະເໝີ, ມັນຮຽກຮ້ອງໃຫ້ພວກເຮົາມີ ນ້ຳໃຈຮັກຊາດ, ຮັກລະບອບໃໝ່ສັງຄົມນິຍົມ, ມີຫລັກໝັ້ນຈົນຈັ້ນ ຄູນສົມບັດອັນຈົບງາມ ແລະ ມີຄວາມຕື່ນຕົວສູງ ອຸທິດຕົນໃຫ້ແກ່ວຽກງານລວມ ຂອງຊາດຕາມສຽງຮຽກຮ້ອງຂອງພັກ ແລະ ລັດ. ສົມກັບວ່າ ຊາວໜຸ່ມ ເປັນກຳລັງແຮງ ເປັນແຂນຂວາຕັດສິນໃນທຸກວຽກງານຂອງຊາດ.

ພິລາກອນ ເວົ້າມາຮອດນີ້ ແລ້ວນາງກໍຢຸດແນມເບິ່ງໃບໜ້າຂອງ ສົມຊາຍທີ່ພວມຢູ່ໃນອາກາດສະຫງົບງຽບ ແລ້ວນາງຈຶ່ງເວົ້າຕໍ່ອີກວ່າ:

"ຜ່ານມາ ນ້ອງດີໃຈນຳອ້າຍຫລາຍທີ່ສາມາດຕັດສິນໃຈປ່ຽນແປງແນວບໍ່ດີອອກຈາກຕົນເອງໄດ້ ແລະ ນ້ອງເອງກໍບໍ່ມີຫຍັງຈະສັ່ງຂ່າວໃຫ້ອ້າຍອີກ ນອກຈາກໃຫ້ອ້າຍເຊື່ອໝັ້ນຕໍ່ໝູ່ຄູ ຕໍ່ການຈັດຕັ້ງ ແລະ ຕັ້ງໜ້າເຝິກ ຝົນຕົນເອງອີກຕໍ່ໄປ".

ເວົ້າມາຮອດນີ້ພິລາກອນເຫລືອດຕາເບິ່ງໂມງໃນແຂນ ແລ້ວນາງ ກໍຮ້ອງຂຶ້ນໝົດແຮງວ່າ:

- ອຸ້ຍຕາຍ! ຮອດໂມງຂຶ້ນຫ້ອງຄົ້ນຄວ້າ ແລ້ວເດ.

- ແມ່ນລະ! ນ້ອງຖ້າອ້າຍບຶດໜຶ່ງແດ່ ອ້າຍຊິໄປເອົາປຶ້ມກ່ອນ. ຫລັງຈາກນັ້ນ ສົມຊາຍ ແລະ ພິລາກອນກໍຍ່າງຄຽງຄູ່ກັນອູ້ມປຶ້ມຂຶ້ນຫ້ອງ ຮຽນດ້ວຍຄວາມເບີກບານໃຈ...

ຈາກມື້ນັ້ນ ວັນເວລາໄດ້ຜ່ານພົ້ນໄປ ຄືກັບກະແສນ້ຳໄຫລ, ແຕ່ຈິດໃຈຮັກຄວາມກ້າວໜ້າ, ຮັກອະນາຄົດຍັງຝັງເດິກຢູ່ໃນຫົວໃຈຂອງສົມຊາຍ, ເພາະສະນັ້ນເຂົາຈຶ່ງຕັ້ງໜ້າບຸກບືນຄົ້ນຄວ້າຮ່ຳຮຽນ ແລະ ເຝິກຝົນ ຕົນເອງຢ່າງບໍ່ທໍ້ຖອຍ ໄປພ້ອມໆກັບຄວາມເຫັນອົກເຫັນໃຈຂອງໝູ່ຄູແລະການຈັດຕັ້ງໄດ້ຊຸກຍູ້ຊ່ວຍເຫລືອກໍ່ສ້າງໃຫ້ເຂົາກາຍເປັນຄົນກ້າວໜ້າ ໂດຍ ສະເພາະກໍແມ່ນພິລາກອນ ເປັນຜູ້ໃຫ້ກຳລັງໃຈ ແລະ ໃຫ້ຄວາມເຊື່ອໝັ້ນແກ່ເຂົາຕໍ່ອຸດົມຄະຕິຂອງຊາວໜຸ່ມ. ປີນີ້ສົມຊາຍເຂົ້າເປັນນັກສຶກສາປີສຸດທ້າຍຂອງມະຫາວິທະຍາໄລສ້າງຄູ ແລະ ເຂົາໄດ້ຖືກຮັບເຂົ້າເປັນສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ພາຍຫລັງກັບຈາກບັ້ນທົດສອບ ການລົງເຝິກຫັດວິຊາຊີບຢູ່ໂຮງຮຽນອຸດົມແຫ່ງໜຶ່ງໃນຕົວເມືອງວຽງຈັນ. ອີກບໍ່ ພໍເທົ່າໃດວັນ ເຂົາກໍຈະສອບເສັງຈົບຊັ້ນ ແລະ ກຽມອອກຮັບໃຊ້ໜ້າທີ່ວຽກງານຕາມຄວາມຮຽກຮ້ອງຕ້ອງການຂອງປະເທດຊາດແລ້ວ. ເວລານີ້ເຂົາ

ພອມນັ່ງຄົ້ນຄວ້າດ້ວຍຄວາມນິດວຽບຢູ່ພູ້ດຽວໃນຫ້ອງສະມຸດ, ແຕ່ເປັນຫຍັງມື້ນີ້ປະກົດວ່າ ສະໝອງຂອງເຂົາຕີບຕັນອ່ານບົດຮຽນຊ້ຳໄປ ຊ້ຳມາ ກໍບໍ່ອອກບໍ່ເຂົ້າ. ສົມຊາຍຈຶ່ງອັດປຶ້ມບົດຮຽນໄວ້ ແລ້ວເອົາປຶ້ມຫົວໃໝ່ຂຶ້ນ ມາອ່ານແທນ. ມັນແມ່ນປຶ້ມຫລັງປົກແຂງສີແດງສຳຫລັບບັນທຶກຄວາມຮູ້ຮອບຕົວມີຫນ້າຫນຶ່ງເຂົາບັນທຶກເອົາເລື່ອງສ່ວນຕົວໄວ້. ສົມຊາຍອ່ານລາຍອັກສອນທີ່ເຂົາບັນທຶກດ້ວຍຄວາມສະອື້ນ ອັນປະທັບໃຈ ພ້ອມກັບລັກປ່ອຍຮອຍ ຍິ້ມອອກມາຢ່າງລືມຕົວ ເພາະມັນແມ່ນລາຍມືທີ່ອອກມາຈາກຄວາມຮູ້ສຶກ ອັນແຈ່ມໃສ ແລະ ອອກມາຈາກສ່ວນເລິກຂອງຫົວໃຈທີ່ເຂົາໄດ້ບັນທຶກໄວ້ໃນນັ້ນຖືກຮັບເຂົ້າເປັນສະມາຊິກຊາວຫນຸ່ມ. ເຂົາອ່ານຊ້ຳໄປຊ້ຳມາຢູ່ຄົນດຽວ , ແຕ່ກໍບໍ່ຮູ້ສຶກເປັນທີ່ພໍໃຈຈັກເທື່ອ, ຢາກໃຫ້ພິລາກອນມາອ່ານນຳເດ ຄືຊິເປັນສຸກ! ແຕ່ຊິເຮັດແນວໃດເພື່ອໃຫ້ນາງສ່ອງເຫັນບັນທຶກຈາກຫົວໃຈດວງນີ້ໄດ້! ບັງເອີນຂະນະທີ່ສົມຊາຍພອມກົ້ມຫນ້າອ່ານດ້ວຍຄວາມຈົດຈໍ່ຢູ່ ນັ້ນ, ເລີຍບໍ່ຮູ້ວ່າ ພິລາກອນລັກຍ່າງເຂົ້າມາຮອດໂຕະເຂົາຍາມໃດ ນາງ ນັ່ງເປາະລົງຕັ່ງນວມຢູ່ແປະຂ້າງກັບສົມຊາຍ ພ້ອມກັບເວົ້າຂຶ້ນວ່າ:

- ຊິຕາຍ! ນ້ອງຊອກຫາອ້າຍບໍ່ເຫັນ ທີ່ແທ້ແມ່ນເພິ່ນມາລັກຄົ້ນຄວ້າຢູ່ພູ້ດຽວ.

ສົມຊາຍເຮັດໂຕແຂງກະດ້າງ ຕາບໍ່ພັບ ທັງມືກໍຍັງຈັບປຶ້ມບັນທຶກຫົວນັ້ນຢູ່.

- ເບິ່ງດູ! ປຶ້ມຮຽນຂອງອ້າຍ.

ເວົ້າແລ້ວ ພິລາກອນກໍຊວງມືໄປຖອດເອົາປຶ້ມບັນທຶກນຳສົມຊາຍ ຈົນເຂົາເວົ້າຫຍັງນຳບໍ່ທັນ.

- ອຸຍ! ບໍ່ແມ່ນ!...ປຶ້ມຄວາມຮູ້ຮອບຕົວອັນນີ້ນາ! ສົມຊາຍເດ່ມືຢາກຍາດເອົາຄືນ.

- ຄວາມຮູ້ຮອບຕົວແຮງມັກ! ພິລາກອນພັດເວົ້າດ້ວຍຄວາມສົນໃຈຂຶ້ນ

ຕື່ມອີກ.

- ອູຍ!...ບໍ່ນາ! ອ້າຍຂໍນຳເທາະ! ສົມຊາຍເຮັດໜ້າຈືດເຂົ້າ , ພ້ອມທັງຮອງຂໍຄວາມເຫັນໃຈຈາກນາງ. ຄັນຈະເວົ້າແຮງກໍຢ້ານເສຍ ລະບຽບຂອງຫ້ອງສະມຸດ.

- ຮື! ຈັ່ງແມ່ນຂີ້ຖີ່ຄວາມຮູ້ແທ້ນໍ! ນ້ອງຂໍອ່ານຈັກບຶດໜຶ່ງດອກ.

ເວົ້າແລ້ວພິລາກອນກໍເປີດອ່ານລວງໆໄປແຕ່ລະໜ້າ, ນາງເອງກໍຄິດແປກໃຈຢູ່ວ່າ ເປັນຫຍັງສົມຊາຍຈຶ່ງບໍ່ຢາກໃຫ້ເຂົາອ່ານປຶ້ມຫົວນີ້ ທັງໆທີ່ແຕ່ກ່ອນມີປຶ້ມໃດດີໆເຂົາກໍເອົາມາໃຫ້ນາງຄົ້ນຄວ້າ ພໍດີຄິດມາຮອດນີ້ ແສງຕານາງກໍຕາຍກະດ້າງຢູ່ກັບຕົວອັກສອນສີຟ້າ ບັນທຶກເປັນຫົວຂໍ້ບົດໃຫຍ່ແປກ ແປກໄວ້ວ່າ:

"ເພື່ອນຮັກຄູ່ຊີວິດ"

ພິລາກອນ! ຊົ່ວຊີວິດນີ້ ອ້າຍບໍ່ລືມນ້ອງ. ນ້ອງແມ່ນຜູ້ທີ່ບອກເສັ້ນທາງເດີນອັນສະຫວ່າງແຈ້ງ.

ພິລາກອນ! ເພື່ອນຮັກທີ່ອ້າຍຊົງຈຳຢູ່ໃນຄວາມກ້າວໜ້າ.

ພິລາກອນ! ເພື່ອນຮັກ ເພື່ອນຮ່ວມອຸດົມການ.

ພິລາກອນ! ຄູ່ຊີວິດໃນຄວາມຫວັງ...!

- ຕາບໃດສາຍນ້ຳອູຍັງຄຽງຄູ່ຢູ່ກັບສາຍແມ່ຂອງ ອ້າຍຈະຂໍເປັນເພື່ອນຮັກ ແລະ ເປັນຄູ່ຊີວິດຂອງນ້ອງຕະຫຼອດໄປໄດ້ບໍ່ ພິລາກອນ!...

ເວລານີ້ ໃບໜ້າພິລາກອນປະກົດວ່າແດງເປົ່ງ ແລະ ສອງຄິ້ວ ສົບເຂົ້າກັນ ນາງຫັນໃຈຫອບບາດຄ່ອຍບາດແຮງເມື່ອມາເຫັນລາຍອັກສອນທີ່ເປັນຊື່ຂອງນາງຕິດຢູ່ໃນປຶ້ມບັນທຶກ. ເວນຕາຍເອີຍ! ບັນທຶກຂາຍໜ້າເຈົ້າຂອງມັນຄັກລະນໍບາດນີ້!...ສົມຊາຍບໍ່ກ້າຈະແນມສູ້ໜ້າກັບພິລາກອນໄດ້ ແຕ່ສີກແສງຕາລົງພື້ນຫ້ອງ.

- ຂໍໂທດນຳອ້າຍຫລາຍໆ ທີ່ນ້ອງເປັນຄົນຂາດມາລະຍາດໄປ ໜ້ອຍ

ໜຶ່ງ.

ພິລາກອນຍື່ນປື້ມຄືນໃຫ້ສົມຊາຍ ທັງຫົວໃຈນາງກໍເປັນກະວ່າງກະເວ. ທັງສອງປະສົບສາຍຕາກັນດ້ວຍຄວາມອຶດອັ້ນຕັນໃຈ ຈົນເຮັດໃຫ້ບັນຍາກາດງຽບໄປຊົ່ວຂະນະໜຶ່ງ ແລ້ວສົມຊາຍຈຶ່ງເວົ້າຂຶ້ນແບບດັ່ງຄືກັບຄົນບໍ່ມີຫຍັງລັບໃນຫົວໃຈວ່າ:

- ອ້າຍກໍບັນທຶກເພື່ອນ້ອງຫັ້ນລະ!

- ແຕ່ມັນເປັນເລື່ອງລັບຂອງອ້າຍຫັ້ນຕີ້! ພິລາກອນ ເວົ້າກ່ອມຕົວ ຄືກັບວ່າໄດ້ຫາຂອງຜູ້ເສຍມາລະຍາດ.

- ນ້ອງຮູ້ນຳກໍດີລະບໍ! ສົມຊາຍເລີຍເວົ້າຢອກແກມອີ່ຫລີ.

- ຍິນດີຢາກຮູ້ ແຕ່ບໍ່ທັນແມ່ນເວລາຢາກຮູ້! ບັດນີ້ພິລາກອນເວົ້າຄືກັບຜູ້ຢູ່ໃນທ່ານີໄຊແລ້ວ.

- ຄວາມຈິງອ້າຍກໍບໍ່ທັນຢາກໃຫ້ນ້ອງຮູ້ດອກ! ແຕ່ຫາກອ້າຍເປັນ ຜູ້ເຮັດເສຍລັບໃຫ້ນ້ອງກ່ອນ! ເມື່ອສົມຊາຍເວົ້າແບບນີ້ ເຮັດໃຫ້ພິລາກອນ-ຄິດຕຳໃຈຕົນເອງວ່າ: ມັນແມ່ນຄືຄວາມຂອງສົມຊາຍເວົ້າແທ້! ເພາະຍ້ອນຄວາມຈັງໄຂໄຟໃໝ່ຂອງຕົນເອງ ຄວາມລັບນີ້ຈຶ່ງຖືກເປີດອອກມາ, ແຕ່ເພື່ອບໍ່ໃຫ້ເສຍທ່າ ພິລາກອນເລີຍປ່ຽນຫົວຂໍ້ສົນທະນາໄປເລື່ອງໃໝ່.

- ນ້ອງມາຈອກພົບອ້າຍ ຍອມຢາກຮູ້ເລື່ອງໜຶ່ງຕ່າງຫາກ.

- ຄັນຊັ້ນ ແມ່ນເລື່ອງໃດ?

- ເລື່ອງບົດຂ່າບົດຮຽນຊັ້ນລະບໍ່! ອ້າຍບໍ່ຮູ້ຫວະສະໜາມຮົບ ສອບເສັງຈະເປີດຂຶ້ນໃນບໍ່ພໍເທົ່າໃດມື້ຕໍ່ໜ້ານີ້.

- ອ້າຍກະກຽມໝົດແລ້ວ ແລະ ຍິນດີຊ່ວຍນ້ອງຖ້າຫາກຕ້ອງການ . ເມື່ອສົມຊາຍເວົ້າສຸດລົງ, ພິລາກອນກໍຍົກເອົາບັນຫາບົດຮຽນປະຫວັດສາດທີ່ເວົ້າເຖິງການຕໍ່ສູ້ກູ້ຊາດຂອງປະຊາຊົນລາວອັນນອນຢູ່ໃນຈິດໃຈ ເນື້ອໃນຂອງການຄົ້ນຄວ້າຂຶ້ນມາສົນທະນາກັບສົມຊາຍ. ນາງໄດ້ຍົກບັນຫາຂຶ້ນ ມາ

ຖາມສົມຊາຍວ່າ: "ລາວເປັນປະເທດນ້ອຍ ແຕ່ເປັນຫຍັງການປະຕິວັດຂອງປະຊາຊົນລາວຈຶ່ງໄດ້ຮັບໄຊຊະນະ?" ສົມຊາຍຟັງຄຳຖາມດ້ວຍຄວາມຕຶກຕອງຢູ່ດົນເຕີບ ແລ້ວຈຶ່ງເວົ້າຂຶ້ນດ້ວຍສຳນຽງທີ່ເສາະໃສ ທັງໜັກ ແໜ້ນເປັນບາງຄວາມວ່າ: "ລາວເປັນປະເທດນ້ອຍກໍຈິງ ແຕ່ປະຊາຊົນລາວ ມີມູນເຊື້ອດຸໝັ່ນພາກພຽນອາດຫານ, ປະຫວັດສາດລາວແຕ່ໃດມາເຄີຍ ຕິດພັນກັບການຕໍ່ສູ້ ໂດຍບໍ່ເຄີຍກົ້ມຫົວຍອມຈຳນົນໃຫ້ພວກສັດຕູຜູ້ຮຸກຮານ. ຕະຫລອດໄລຍະ ໓໐ ປີແຫ່ງການຕໍ່ສູ້ກູ້ຊາດຕ້ານຈັກກະພັດຝະລັ່ງ ແລະອາເມລິກາ ປະຊາຊົນລາວເຮົາກໍໄດ້ທຳການຕໍ່ສູ້ດ້ວຍຄວາມເສຍສະຫລະ ລະອິດລະອ້ຽວ ລຳບາກຍາວນານ ແຕ່ສຸດທ້າຍກໍສາມາດຍາດໄດ້ໄຊຊະນະ. ອັນນີ້ຊີ້ໃຫ້ເຫັນວ່າ ປະເທດລາວເຖິງຈະເປັນປະເທດນ້ອຍກໍຈິງ ແຕ່ປະຊາຊົນລາວເຮົາມີຄວາມສາມັກຄີທຸກຊົນຊາດຊົນເຜົ່າເຂົ້າກັນ ເປັນກຳລັງ ມະຫາສາມັກຄີ, ພ້ອມນີ້ປະຊາຊົນລາວພວກເຮົາກໍມີຈິດໃຈຮັກຊາດ ຮັກ ຄວາມເປັນເອກະລາດຢ່າງດູດດື່ມ, ຕ້ອງການຢາກມີຊີວິດຢູ່ໃນສັນຕິພາບ ບໍ່ມັກການຮຸກຮານ ແລະ ການກົດຂີ່ຂູດຮີດ. ດັ່ງນັ້ນ, ການຕໍ່ສູ້ຂອງປະຊາ ຊົນລາວຈຶ່ງແມ່ນການຕໍ່ສູ້ທີ່ເປັນທຳ ໃຕ້ການນຳພາຂອງພັກປະຊາຊົນປະຕິ ວັດລາວຜູ້ປີຊາສາມາດສະຫລາດ ສ່ອງໃສ ພວກເຮົາຈຶ່ງຍາດໄດ້ໄຊຊະນະເຕີຍໃຫຍ່ມາເປັນຂັ້ນໆ, ອີກປະການໜຶ່ງ ກໍຍ້ອນພວກເຮົາໄດ້ຮັບຄວາມ ເປັນໃຈອູ້ມຊູ ສະໜັບສະໜູນຈາກປະເທດເພື່ອນມິດທີ່ກ້າວໜ້າ ແລະມວນຊົນຜູ້ຮັກຫອມສັນຕິພາບໃນທົ່ວໂລກ. ຕົກມາຮອດສູ່ມື້ນີ້ ພວກເຮົາຈຶ່ງເຊື່ອໝັ້ນໄດ້ວ່າ ບົນເສັ້ນທາງກ້າວຂຶ້ນສູ່ການປະຕິວັດໃນໄລຍະໃໝ່ ໂດຍຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຈະເຮັດໃຫ້ປະເທດຊາດ ຂອງພວກເຮົາກ້າວຂຶ້ນສູ່ລະບອບສັງຄົມນິຍົມຢ່າງແນ່ນອນ." ພິລາກອນ ທັງຟັງທັງຈົດຈຳເອົາຄວາມສິ່ງທີ່ສົມຊາຍເວົ້ານັ້ນໄວ້, ນາງຮູ້ສຶກວ່າພໍໃຈ ແລະເກີດຄວາມເຫລື້ອມໃສນຳຄວາມຮັບຮູ້ຂອງສົມຊາຍເຫລືອທີ່ສຸດ.

- ຂອບໃຈອ້າຍຫລາຍໆ ນ້ອງເຂົ້າໃຈແລ້ວບາດນີ້!
- ບໍ່ເປັນຫຍັງ ຍັງບໍ່ເຂົ້າໃຈອັນໃດ ຖາມຕື່ມກໍໄດ້.
- ພໍແລ້ວ! ນ້ອງລົບກວນອ້າຍຫລາຍແລ້ວ.
- ບໍ່ຖືວ່າລົບກວນດອກນາ!
- ນ້ອງຊິໄປກ່ອນລະ!

ພິລາກອນຫອບເອົາປຶ້ມພ້ອມກັບລຸກຈາກຕັ່ງແລ້ວກໍຍ່າງລິບອອກໄປຈາກຫ້ອງສະມຸດປ່ອຍໃຫ້ສົມຊາຍຫລຽວຕາມຫລັງດ້ວຍຫົວໃຈທີ່ບໍ່ຄ່ອຍສະຫງົບ.. ສົມຊາຍພວມຄິດເປັນຫ່ວງບັນທຶກຂອງເຂົາວ່າ ພິລາກອນຈະເຂົ້າໃຈມັນ ຄື ແນວໃດ ແລະ ເຂົາຈະທຳຄວາມເຂົ້າໃຈກັບພິລາກອນແນວໃດຈຶ່ງດີ!ເລື່ອງນີ້ອາດຍັງມີຄວາມຫວັງ ແລະ ຍັງມີເວລາທີ່ເໝາະສົມຄືດັ່ງທີ່ນາງເວົ້າ.. ລໍຖ້າໃຫ້ບັ້ນຮົບແຫ່ງການສອບເສັງຜ່ານພົ້ນໄປ ແລະ ໄດ້ຮັບໄຊຊະນະເສຍກ່ອນ.

ລາຍອັກສອນຈາກການບັນທຶກຂອງສົມຊາຍ ເຮັດໃຫ້ພິລາກອນ ເກີດຄວາມຮູ້ສຶກຕື່ນຕົວ ແລະ ມີກຳລັງໃຈຍິ່ງຂຶ້ນ ເມື່ອຮູ້ວ່າ ຕົນເອງພວມ ຖືກສົມຊາຍເອົາໃຈໃສ່ ແລະ ໝາຍປອງ...ນາງຈະຕ້ອງຕັດສິນໃຈ ສອບເສັງໃຫ້ໄດ້ສຳເລັດ ເພື່ອບໍ່ເຮັດໃຫ້ສົມຊາຍຜິດຫວັງທີ່ເຂົາໄດ້ຕັ້ງໃຈຕໍ່ນາງ.

ສະເພາະສົມຊາຍ ນັບແຕ່ນີ້ພິລາກອນໄດ້ເປີດເຫັນຄວາມລັບໃນ ປຶ້ມຂອງເຂົາຍິ່ງເຮັດໃຫ້ເຂົາມີຄວາມຕັ້ງໃຈ ເຄົາລົບລາຍລັກອັກສອນຂອງຕົນທີ່ບັນທຶກໄວ້ດ້ວຍຄວາມຮັກ ແລະ ປາຖະໜາ. ເຂົາຕັ້ງໜ້າພະຍາ ຍາມສອບເສັງໃຫ້ໄດ້ ເພື່ອຈະບໍ່ຄິດກິນແໜງ ແລະ ລະອາຍໃຈຕາມພາຍຫລັງທີ່ຕົນໄດ້ລັກບັນທຶກເອົາພິລາກອນເປັນເພື່ອນຮັກ ແລະ ຄູ່ຊີວິດ.

ຕະຫລອດໄລຍະເວລາຂອງການສອບເສັງແຕ່ລະຄືນເຂົາບໍ່ໄດ້ ເວົ້າເຖິງບັນຫາຊີວິດ ເຂົາຊ່ວຍເຫລືອກັນຄົ້ນຄວ້າຮ່ຳຮຽນເປັນທຳມະດາ ຄືກັບທີ່ຜ່ານມາ ແຕ່ສິ່ງເລິກລັບທີ່ຝັງຢູ່ໃນຫົວໃຈຂອງແຕ່ລະຄົນນັ້ນ ກໍຄືລາຍ ອັກ

ສອນທີ່ບັນທຶກໄວ້ໃນປຶ້ມປົກແດງມັນໄດ້ກາຍເປັນພະລັງຊຸກຍູ້ໃຫ້ເຂົາທັງສອງສອບເສັງໄດ້ຮັບຜົນສຳເລັດຢ່າງຈົບງາມ.

ຜົນສຳເລັດຂອງການສອບເສັງຈົບຊັ້ນ ມັນໄດ້ເຮັດໃຫ້ດວງໃຈຂອງສົມຊາຍ ແລະ ພິລາກອນສົດຊື່ນແຈ່ມໃສ ເໝືອນກັບດວງດອກໄມ້ທີ່ພວມແຍ້ມບານ ເຂົາທັງສອງປຽບເໝືອນຄູ່ນົກນ້ອຍທີ່ພວມປີກແຂງ ແລະ ກຽມ ຈະບິນເວີ່ນຈາກເຮືອນຮັງໄປສູ່ທ້ອງຟ້າທີ່ກວ້າງໄກຂອງປິຕຸພູມລາວ.

ມື້ນັ້ນ, ຫລັງຈາກທຳຄວາມສະອາດມ້ຽນມັດໂຕະຕັ່ງ ແລະ ອຸປະກອນການຮຽນໄວ້ໃນຫ້ອງ ພ້ອມລັດກະແຈເປັນທີ່ຮຽບຮ້ອຍແລ້ວ, ສົມຊາຍ ກໍ່ອອກໄປນັ່ງຢູ່ກ້ອງຮົ່ມໝາກທັນຕໍ່ໜ້າຫ້ອງຮຽນ ທີ່ເຄີຍໃຊ້ເປັນບ່ອນ ພັກຜ່ອນໃນຍາມເລີກຫລີ້ນ. ສ່ວນໝູ່ພັກພວກເຂົາກໍເລີກລາພາກັນກັບຄືນທີ່ພັກໝົດແລ້ວ ຍັງເຫລືອແຕ່ພິລາກອນນັ່ງເປັນຄູ່ສົນທະນາກັນກັບເຂົາ. ສາຍລົມກະແສອ່ອນໆໄດ້ພັດໂຊຍມາຕຳກັບຕົ້ນດອກໄມ້ທີ່ບານປະດັບເອ້ຢູ່ຕໍ່ ໜ້າຫ້ອງຮຽນ ເຮັດໃຫ້ດວງດອກຂອງມັນເປື້ອງບິ່ນໄປມາ ມັນຊ່າງເປັນ ພາບອັນປະທັບໃຈ ແລະ ມີຊີວິດຊີວາທີ່ສຸດສຳລັບສົມຊາຍ ເມື່ອໄດ້ມີໂອກາດລະບາຍຄວາມລຶກລັບໃນຫົວໃຈຂອງຕົນອອກສູ່ເພື່ອນຍິງທີ່ເຂົາໝາຍປ່ອງ ໄດ້ຮັບຮູ້ນຳຢ່າງບໍ່ອຳບໍ່ອາຍ. ເຂົາໄດ້ລຳພຶງລຳພັນອອກມາດ້ວຍຄວາມ ຮູ້ສຶກອັນເລິກເຊິ່ງຈາກສ່ວນເລິກຂອງຫົວໃຈວ່າ:

"ພິລາກອນ! ນັບວ່າດົນເຕີບແລ້ວໃດເນາະ ທີ່ອ້າຍໄດ້ໃຊ້ຊີວິດ ເປັນເພື່ອນຮຽນຮ່ວມຫ້ອງດຽວກັນກັບນ້ອງ. ອ້າຍເຫັນວ່ານ້ອງແມ່ນຜູ້ທີ່ອ້າຍ ຮູ້ຈັກຫລາຍກວ່າໝູ່ ນັບທັງນິໄສໃຈຄໍ ກິລິຍາ ມາລະຍາດ ຄຸນສົມບັດ ແລະ ອຸດົມຄະຕິ ກໍລ້ວນແຕ່ຖືກກັບຈິດໃຈ ແລະ ແມ່ນອັນດຽວກັນກັບອ້າຍ. ພິເສດ! ນ້ອງຍັງແມ່ນຜູ້ທີ່ເຫັນອົກເຫັນໃຈໃກ້ຊິດ ແລະ ຊ່ວຍເຫຼືອອ້າຍຫຼາຍກວ່າຜູ້ອື່ນ ໃນນັ້ນນັບທັງວັດຖຸ ຈິດໃຈ ແລະ ຄວາມກ້າວໜ້າ. ອ້າຍເຫັນວ່າ ຄວາມດີທີ່ນ້ອງເຮັດມາເພື່ອອ້າຍມັນກວ້າງເລິກ ແລະ ຍາວໄກເໝືອນ

ສາຍແມ່ຂອງ ຈົນອ້າຍຮູ້ສຶກໄດ້ວ່າ ອ້າຍຖືກນອນຢູ່ໃນກຳແພງແຫ່ງດວງໃຈຂອງນ້ອງເສຍແລ້ວ! ອ້າຍຢາກເວົ້າໃຫ້ນ້ອງຮູ້ອີກເທື່ອໜຶ່ງວ່າ ນ້ອງແມ່ນເພື່ອນຮັກທີ່ອ້າຍເທີດທູນ ແລະ ນັບຖື ແລະ ນ້ອງກໍປຽບຄືຄູ່ຊີວິດທີ່ ຫົວໃຈຂອງອ້າຍໄຝ່ຝັນຫາ. ນ້ອງໄດ້ເຫັນລະຕີ້! ນີ້ນັ້ນລາຍມືທີ່ອອກຈາກການບັນຊາໂດຍຫົວໃຈຂອງອ້າຍ ມັນໄດ້ລັກບັນທຶກເອົາຊື່ນ້ອງໄວ້ ແລະດ້ວຍຄວາມຮູ້ສຶກອັນຍິ່ງໃຫຍ່ທີ່ອອກມາຈາກສ່ວນເລິກຂອງຫົວໃຈມອບເປັນຄວາມ ຫວັງໄວ້ໃນຕົວນ້ອງ.ນັ້ນມັນແມ່ນຄວາມຈິງ ມັນແມ່ນບັນທຶກລັບຂອງຫົວໃຈທີ່ອ້າຍຕ້ອງການເປີດເຜີຍໃຫ້ນ້ອງຮູ້ໃນເວລາອັນເໝາະສົມ ແລະ ເວລານີ້ ມັນພວມຄອງຄອຍການຕອບສະໜອງຈາກນ້ອງທຸກເວລາ. ອ້າຍຫວັງວ່າສາຍແມ່ຂອງຍາມໃດກໍຄືຈະເຫັນອົກເຫັນໃຈຮັບເອົາສາຍນ້ຳອູທີ່ໃສສະອາດເຂົ້າຮ່ວມກະແສດຽວກັນ! ເວົ້າແລ້ວ ສົມຊາຍກໍຍັບເຂົ້າໃກ້ງຄືກັບວ່າຕ້ອງການສິ່ງໃດສິ່ງໜຶ່ງຈາກນາງ.

- ພໍແລ້ວ ອ້າຍສົມຊາຍ! ເລື່ອງນີ້ ນ້ອງເຂົ້າໃຈດີໝົດທຸກຢ່າງ.

ພິລາກອນເວົ້າດ້ວຍນ້ຳສຽງສັ່ນເຊັນ ເພາະແມ່ນຄັ້ງທຳອິດທີ່ນາງ ໄດ້ຍິນສົມຊາຍໄຂບັນຫາຄວາມຮັກໃນຫົວໃຈອອກສູ່ນາງຟັງຢ່າງກົງເອີດເຕີດຈົນບໍ່ມີຫຍັງສົງໄສໃນຄວາມມັກຮັກຂອງເຂົາ, ພິລາກອນ ນາງກໍບໍ່ມີຫຍັງທີ່ຈະປະຕິເສດຄວາມຮັກຂອງສົມຊາຍໄປໄດ້ ເພາະສົມຊາຍເອງກໍເຕີບໃຫຍ່ຢູ່ໃນຄວາມກ້າວໜ້າຈາກການຊຸກຍູ້ຊ່ວຍເຫລືອຂອງນາງ ຈົນກາຍມາເປັນເພື່ອນຜູ້ຮ່ວມອຸດົມການອັນດຽວກັນ. ຜ່ານມາ ສົມຊາຍເອງກໍເຄີຍເຫັນອົກເຫັນໃຈ ເປັນຫ່ວງເປັນໃຍຕໍ່ນາງທາງດ້ານການຮ່ຳຮຽນວິຊາສະເພາະ . ນາງເຂົ້າໃຈດີ ເຖິງສະພາບຊີວິດ ແລະ ຖານະຈົນຈຸ້ມ ຄອບຄົວພໍ່ແມ່ຂອງສົມຊາຍທີ່ອອກແຮງວຽກງານຫາລ້ຽງຊີບດ້ວຍສອງຝາມື ແລະ ລຳຂາຂອງ ຕົນເອງ. ເພາະສະນັ້ນພິລາກອນ ຈຶ່ງມີຄວາມໄວ້ໃຈໃນຕົວຂອງສົມຊາຍທາງດ້ານທັດສະນະຫລັກໝັ້ນ ແລະ ນ້ຳໃຈເດັດດ່ຽວໝຽວແໜ້ນ ຜ່ານຜ່າກັບ

ອຸປະສັກຫຍຸ້ງຍາກທີ່ຈະປະເຊີນໜ້າໃນຊີວິດ. ນາງຈິ່ງໄດ້ຕົກລົງປົງໃຈຮັບເອົາຄວາມຮັກຈາກສົມຊາຍ ແລະ ທັງສອງກໍພ້ອມກັນສະເໜີຄວາມ ມຸ້ງຫວັງຂອງຕົນຕໍ່ການຈັດຕັ້ງ ແລະ ຂັ້ນເທິງ ເພື່ອໃຫ້ກາຍເປັນຄວາມຮັກທີ່ບໍລິສຸດ ປອດໃສຖືກຕ້ອງກັບຄວາມຮັກແບບປະຕິວັດ.

ຈາກນັ້ນມາ ຄວາມຮັກມັກຂອງພິລາກອນ ແລະ ສົມຊາຍທີ່ປິດລັບ ໄວ້ໃນຫົວໃຈຕົວນານແສນນານກໍຄ່ອຍຖືກເປີດເຜີຍອອກ ແລະ ຮັບຮູ້ກັນ ຢ່າງເປັນທາງການ. ພິລາກອນ ແລະ ສົມຊາຍພັດແຮງຕົກຢູ່ໃນ ເປົ້າໝາຍສາຍຕາການຢອກເຢັ້ຍຂອງໝູ່ຄູ່ຫລາຍຂຶ້ນ. ບາງຄົນຊ້ຳພັດເວົ້າແນວ ລັກສະນະໂຕງໂຕຍວ່າ: "ຂ້ອນຊິແຈ້ງຈິ່ງພໍ້ຜ່າຫົ່ມນອນນໍ!" ໝາຍຄວາມວ່າຮອມນຳກັນມາຈົນຈົບຂັ້ນພັດຮັກກັນຍາມຊິຈາກ, ບາງຄົນຊ້ຳພັດເວົ້າ ຢອກແກມຖາມວ່າ: "ປານໃດຊິໄປແຕ່ງໄພ້ແທ້ເຂີຍລະ!" ບາງຄົນພັດເວົ້າຢອກໃນລັກສະນະຈົ້ຈີ້ເຂົ້າວ່າ: "ເອົາໄວ້ງແດ່ແມ້ ຈັກໜ່ອຍເຮົາຊິບໍ່ໄດ້ ຊອຍໄດ໋!" ຄຳຢອກໄຍດັ່ງກ່າວ ບາງເທື່ອກໍເຮັດໃຫ້ພິລາກອນຍິ້ມແຍ້ມ ແຈ່ມໃສ, ແຕ່ບາງເທື່ອມັນກໍເຮັດໃຫ້ນາງຄິດຕຳຄ່ອຍນ້ອຍໃຈ ແລະ ຫົນຫວາຍທີ່ສຸດ. ຍ້ອນວ່າຂະນະນີ້ບັນດານັກສຶກສາປີສຸດທ້າຍທີ່ເສັງຈົບຂັ້ນທັງ ໝົດພວມຢູ່ຄອງນໍ້າຄອງວັນ ເພິ່ນປະກາດສົບຊ້ອນບອນປະຈຳການ ແລະ ອີກ ບໍ່ດົນແຕ່ລະຄົນກໍຈະໄດ້ຈາກກັນໄປແຕ່ລະທ້ອງຖິ່ນ ເຂດແຂວງຕາມຈຸດປະສົງແລະ ການສົບຊ້ອນແບ່ງປັນ. ສະເພາະໃບສະເໜີສາງຄອບຄົວຂອງນາງກັບສົມຊາຍ ພັດຫາກໍຍື່ນຂຶ້ນຕາມສາຍການຈັດຕັ້ງ ຫວ່າງບໍ່ພໍເທົ່າໃດວັນນີ້. ຊາມຊາຂັ້ນເທິງຊິແກ້ໄຂ ແລະ ອະນຸມັດໃຫ້ ມັນຊິບໍ່ລ້າຊ້າໄປສາ ແລວບໍ! ເລື່ອງນີ້ເຮັດໃຫ້ນາງເກີດຄວາມຮ້ອນໝົກຕົກໃຈ ຈົນວ່າບໍ່ເປັນອັນຢູ່ ອັນກິນ. ບາງມື້ນາງກໍເຮັດຊຶງລຶງຢູ່ຄືກັບຄົນບໍ່ເຕັມ. ຄັນຖ້າຫາກສົມຊາຍເຫັນນາງຕອນນີ້ ຄືຊິຄິດເປັນຕາໝາຍ.

ມື້ໜຶ່ງ ພິລາກອນລອງຍ່າງລຽບໆໄປເບິ່ງກະດານຕິດປະກາດ ຂ່າວ

ຂອງໂຮງຮຽນ, ບັງເອີນເຫັນເພື່ອນນັກສຶກສາປີສຸດທ້າຍຢືນຈຸ້ມກັນອ່ານປະກາດນັ້ນທຶດງຢູ່, ນາງໄດ້ຍິນວ່າປະກາດສຳລັບກັບຣດໝູເຂົ້າໄປອ່ານເບິ່ງໃນທີ່ສຸດກໍພົບເນື້ອຄວາມຂຽນໄວ້ວ່າ: "ໃຫ້ນັກສຶກສາປີສຸດທ້າຍທັງໝົດເຂົ້າມາເຕົ້າໂຮມກັນຢູ່ຫ້ອງປະຊຸມໃນຕອນບ່າຍມື້ນີ້ ເພື່ອລໍຟັງການສັບຊ້ອນແບ່ງປັນ..." ນາງວາກຊ້າຍຫລຽວຂວາກໍບໍ່ເຫັນໃຜຄືໜ້າຂອງສົມຊາຍຕາຍລະ! ຈັກວ່າລາວໄປໃສປານນີ້ ຊິຮູ້ຂ່າວນຳໝູ່ແລ້ວຫລືບໍ່? ມື້ນັ້ນ ສົມຊາຍຫາຍໜ້າໄປຈາກໂຮງຮຽນໝົດມື້ ໂດຍທີ່ວ່າ ພິລາກອນບໍ່ຮູ້ເລື່ອງນຳຈາກຜົນການປະກາດສັບຊ້ອນທີ່ນາງຮູ້ຈັກກໍຄື: ນາງຖືກຢູ່ແຂວງຈຳປາສັກ, ສ່ວນສົມຊາຍຈ້ຳພັດຖືກຢູ່ແຂວງພົ້ງສາລີ. ແຕ່ວ່າການສັບຊ້ອນເທື່ອນີ້ ອັ້ນເຫີງກໍຮັດຖືກກັບຈິດໃຈ ແລະ ຄວາມມຸ່ງຫວັງຂອງເຂົາທັງສອງ ເພາະພິລາກອນກໍຢາກເມືອຈຳປາສັກ ບ້ານເກີດເມືອງນອນ ແລະ ສົມຊາຍກໍຢາກເມືອພົ້ງສາລີ ບ້ານເກີດເມືອງນອນຂອງເຂົາເອງ, ແຕ່ເລື່ອງໃໝ່ທີ່ເປັນອຸປະສັກກີດຂວາງກັບບ່ອນປະຈຳການທີ່ເຂົາທັງສອງຕັ້ງໃຈໄວ້ນັ້ນກໍຄືຄວາມຮັກມັກທີ່ຫາກໍສະເໜີຂຶ້ນອັ້ນເຫີງໄປຫວ່າງມື່ງມານີ້. ບັນຫາດັ່ງກ່າວ ໄດ້ສ້າງຄວາມໜັກໃຈໃຫ້ແກ່ຄູ່ຮັກທັງສອງເຫລືອທີ່ສຸດ. ມື້ຕໍ່ມາ ສົມຊາຍ ຈຶ່ງພົບກັບພິລາກອນດ້ວຍອາການຫງວມເຫງົາ ປະກົດຢູ່ເທິງໃບໜ້າ.

- ວານນີ້ ອ້າຍໄປໃສ? ພິລາກອນຖາມດ້ວຍອາລົມບໍ່ຄ່ອຍດີ.

- ອ້າຍເຂົ້າໄປເມືອງ, ສົມຊາຍຕອບດ້ວຍຄວາມລຳຄານໃຈ.

- ວຽກອີ່ຫຍັງຄືບໍ່ບອກໃຫ້ນ້ອງຮູ້ແດ່! ພິລາກອນສົງໄສ.

- ວຽກຂອງພວກເຮົາທັ້ນຕີ້!

- ອ້າຍຮູ້ແລ້ວຫວະ ເພິ່ນປະກາດສັບຊ້ອນ. ພິລາກອນເວົ້າສຽງອ່ອນລົງກວ່າເກົ່າ.

- ຮູ້ແຕ່ຕອນຢູ່ໃນເມືອງມື້ວານນີ້ພຸ້ນ! ສົມຊາຍຕອບຄືບໍ່ມີຫຍັງ ເປັນໜ້າຕື່ນເຕັ້ນ ແລ້ວເຂົາກໍເລົ່າເລື່ອງລາຍທີ່ໄດ້ໄປພົວພັນກັບອັ້ນເຫີງສູ່ພິລາ

ກອນຟັງຢ່າງລະອຽດລະອໍ. ສົມຊາຍບອກໃຫ້ພິລາກອນຮູ້ວ່າ:

"ໃບສະເໜີຂອງພວກເຮົາດຽວນີ້ຂັ້ນເທິງພວມພິຈາລະນາຢູ່ ເພິ່ນເຫັນດີນຳຄວາມມັກຮັກທີ່ຖືກຕ້ອງຂອງພວກເຮົາ ແຕ່ອີງໃສ່ຄວາມ ຈຳເປັນຍ້ອນຂາດເຂີນຄູສອນ ຄືດັ່ງທີ່ໄດ້ສືບຈ້ອນໄປແລ້ວ ເພິ່ນຢາກໃຫ້ພວກ ເຮົາອອກໄປເຮັດວຽກສາກ່ອນຈັກສອງປີ ເມື່ອມີພົນງານດີແລ້ວ ຈຶ່ງກັບມາສ້າງຄອບຄົວນຳກັນ. ດຽວນີ້ເພິ່ນຢາກຮູ້ວ່າ ພວກເຮົາຈະຕັດສິນໃຈແນວໃດ?

ພິລາກອນຟັງສົມຊາຍເວົ້າທັງຄົ້ນຄິດໄປແຕ່ລະຂໍ້ຄວາມ ແລ້ວນາງ ຈຶ່ງເປັນຜູ້ຖາມສົມຊາຍ ກ່ອນວ່າ:

- ຄັນຊັ້ນ ອ້າຍຊິເຮັດແນວໃດ?

- ອ້າຍຢາກຂໍແຕ່ງງານກ່ອນ!

- ຢູ່ໃສໃບອະນຸມັດ?

- ອ້າຍວ່າບໍ່ຈຳເປັນກໍໄດ້ດອກ!

- ພີບາ! ຄົນມີການຈັດຕັ້ງ, ມີຂັ້ນເທິງເບິ່ງແຍງ ຢາກເຮັດຫຍັງກໍຊິເຮັດຕາມເສລີໃຈຊັ້ນບໍ? ນ້ອງເຮັດນຳບໍ່ໄດ້ດອກ!

ພິລາກອນເວົ້າສຽງແຂງປະຕິເສດຄຳເຫັນຂອງສົມຊາຍ ຈົນເຮັດ ໃຫ້ເຂົ້າໃຈອ່ອນ.

- ນ້ອງເດ ຊິຄິດແນວໃດ?

ສົມຊາຍຖາມຄວາມເຫັນຂອງນາງຄືນດ້ວຍອາລົມທີ່ເຍືອກເຢັນ.

- ນ້ອງຄິດວ່າຖ້າພວກເຮົາຮັກກັນແທ້ ກໍຕ້ອງເຊື່ອໝັ້ນຂັ້ນເທິງ ເຮັດຕາມຄວາມຮຽກຮ້ອງຂອງຂັ້ນເທິງແລ້ວຄວາມມຸ່ງຫວັງຂອງພວກເຮົາ ທຸກຢ່າງກໍຈະຕ້ອງເປັນໄປໄດ້ຢ່າງແນ່ນອນ.

- ອ້າຍຮັກນ້ອງແທ້, ອ້າຍຂໍປະຕິຍານ!

ສົມຊາຍກ່າວສາລະພາບ ຄວາມຮັກຕໍ່ໜ້າພິລາກອນດ້ວຍຄວາມບໍລິສຸດໃຈ.

- ເພິ່ນເວົ້າແນວໃດອີກແດ່?

ພິລາກອນຖາມຄຳແນະນຳຂອງຂັ້ນເທີງນຳສິນຊາຍຕື່ມອີກ.

- ເພິ່ນເຫັນອົກເຫັນໃຈນຳຄວາມມັກຮັກຂອງພວກເຮົາເຫລືອທີ່ສຸດ , ແຕ່ຖ້າຈະແກ້ໄຂບາດດຽວໂລດມັນກໍເປັນການຍາກຢູ່ ເພາະການ ສືບຊ້ອນແບ່ງປັນກໍໄດ້ຮັບການຕົກລົງເຫັນດີຈາກຂັ້ນເທີງເປັນທີ່ຮຽບຮ້ອຍແລ້ວ ເພິ່ນມີແຕ່ໃຫ້ຄວາມຫວັງຕໍ່ພວກເຮົາວ່າ ໃຫ້ອົດສາໄປກ່ອນຈັກສອງປີ ແລ້ວເພິ່ນຈະເອີ້ນພວກເຮົາຄືນມາວຽງຈັນ ເພື່ອອະນຸມັດໃຫ້ສ້າງຄອບຄົວນຳກັນ . ໝາຍຄວາມວ່າພວກເຮົາຈະໄດ້ກັບມາພົບກັນອີກເທື່ອໜຶ່ງຢູ່ວຽງຈັນ.

ຈາກນັ້ນອີກອາທິດໜຶ່ງຕໍ່ມາ ກໍແມ່ນວັນທີພິລາກອນຈະໄດ້ເດີນ ທາງອອກຈາກວຽງຈັນ ເພື່ອລົງໄປສຶກສອນຢູ່ຈຳປາສັກຕາມການສືບຊ້ອນ ແບ່ງປັນ. ເຖິງຢ່າງໃດກໍດີ ຄວາມຮັກ ແລະ ຄວາມເຂົ້າອົກເຂົ້າໃຈຂອງຄູ່ຮັກທັງສອງກໍຍັງແໜ້ນແຟ້ນ ແລະ ບໍ່ມີເວລາໃດຈະຈືດຈາງໄປເລີຍ. ມື້ນັ້ນທີ່ສະໜາມບິນວັດໄຕ ປະກົດວ່າມີຜູ້ຄົນໜາແໜ້ນ ນັບທັງຜູ້ໂດຍສາຍ ແລະຜູ້ອອກໄປສົ່ງ, ໃນຈຳນວນນັ້ນກໍມີສິນຊາຍຜູ້ໜຶ່ງ ເອົາແບກທີບ ແລະພາຍກະເປົາໄປສົ່ງພິລາກອນ ຈົນເຖິງຫໍຄອຍບ່ອນພັກຜູ້ໂດຍສານ. ຮອດ ໂມງຖ້ວຍບິນພິເສດຂອງນັກສຶກສາທີ່ຖືກສືບຊ້ອນລົງພາກໃຕ້ ກຽມຈະອອກ ເດີນທາງແລ້ວ, ສິນຊາຍກໍຈັບເອົາກະເປົາພາຍຍ່າງຫຽມຂ້າງພິລາກອນໄປຫາປະຕູອອກສູ່ລານຈອດຍົນ, ພໍຫວິດປະຕູ ພິລາກອນກໍຢຸດ ເພື່ອຮັບເອົາ ກະເປົາຢູ່ໃນບາຂອງສິນຊາຍ, ເຂົາທັງສອງຢືນຈ້ອງມອງສາຍຕາກັນ ດ້ວຍຄວາມສະຫວິບວຽບຢູ່ດົນເຕີບ. ພິລາກອນບໍ່ຮູ້ຈັກຈະເວົ້າຄວາມໃດດີ ພຽງແຕ່ໄດ້ເອີ່ຍສຽງສັ່ງທີ່ສະອື້ນໃນຮູຄໍອອກມາວ່າ:

- ອ້າຍສິນຊາຍ! ຮອດເວລານ້ອງຊິໄດ້ຈາກອ້າຍໄປແລ້ວບາດນີ້ ! ນ້ອງຂໍລາອ້າຍໄປກ່ອນລະ!...ຢ່າລືມເດີຄວາມທີ່ພວກເຮົາເວົ້າກັນໄວ້.

ສິນຊາຍຮູ້ສຶກຕື້ນຕັນໃຈເໝືອນກັບວ່າ ມີສິ່ງໃດສິ່ງໜຶ່ງແລ່ນຂຶ້ນມາຕັນ

ພິມທີ່ ໂຮງພິມແຫ່ງລັດ